**<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີພາສາລາວ</u>**

Copyright © 2003 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, 2003

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lessons 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 4-6
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lessons 7-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7-10
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lessons 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-13
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ຈົ່ງເຫັນຊີວິດຢູ່ໃນທາງບວກ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ຟີລິບປອຍ 1:1-26

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ຟີລິບປອຍ 1:1-26

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເຖິງແມ່ນວ່າ ພວກເຮົາຈະມີຫລາຍສິ່ງຫລາຍຢ່າງທີ່ບໍ່ດີເກີດຂຶ້ນໃນຊີວິດກໍຕາມ ພວກເຮົາຍັງສາມາດ ເຫັນຊີວິດຂອງເຮົາໃນທາງບວກ ໂດຍການປະຕິບັດຄວາມເຊື່ອໃນພຣະເຢຊູ.

<u>ຄຳຖາມເພື່ອສຳຣວດ:</u> ຈະຮຽນ ໃນການເຫັນຊີວິດໃນທາງບວກ ແລະ ຕາມຊີວິດຈິງຄືແນວໃດ?

<u>ຈຸດປະສົງຂອງບົດຮຽນ:</u> ທີ່ຈະດຳເນີນຊີວິດຕາມທີ່ເປັນຈິງ ແລະໃນທາງບວກນີ້ ເຮົາຕ້ອງມີການຕັດສິນໃຈຢ່າງທ່ອງແທ້.

## ຄຳນຳ

ຂ້າພະເຈົ້າບໍ່ເຄີຍລືມຄອບຄົວນຶ່ງ. ເວລາຂ້າພະເຈົ້າຖືກເອີ້ນມາເປັນອາຈານໃຫມ່ໆ, ໄດ້ເຫັນຄອບຄົວນີ້ ພົບບັນຫາຫຍຸ້ງຍາກຫລາຍຢ່າງ. ພໍ່ໄດ້ເສັຍຊີວິດໄປກ່ອນຂ້າພະເຈົ້າຈະມາ ຫນ້ອຍດຽວ, ປ່ອຍໃຫ້ເມັຍຜູ້ທີ່ທຸກຍາກ ຮັບຜິດຊອບຄອບຄົວຕາມລຳພັງ. ມີລູກຄົນດຽວຊ້ຳພັດເປັນຄົນເສັຍອົງຄະ ມີລະບົບປະສາດການຮັບຮູ້ຕ່ຳ. ສ່ວນຕົວແມ່ເອງ ກໍເຈັບອອດໆແອດໆ ຂາດສະມັດພາບ ເພາະເປັນໂຣກຂາດນ້ຳລ້ຽງຂໍ່ກະດູກ. ແມ່ນແລ້ວ ຄອບຄົວທີ່ຈະແຜ່ຂຍາຍໄປໄດ້ດີນັ້ນກໍຄື ຄອບຄົວທີ່ມີຄວາມສົມບູນ.

ໃນເວລາຂ້າພະເຈົ້າກັບຈາກບ້ານຫລັງນີ້ເທື່ອໃດ, ຂ້າພະເຈົ້າອົດທີ່ຈະຖາມຕົວເອງບໍ່ໄດ້ວ່າ ຈະເຫັນຊີວິດໃນທາງບວກໄດ້ຄືແນວໃດ ໃນເມື່ອບັນຫາຫາກຫລາຍປານນີ້? ບົດຮຽນໃນວັນນີ້ ແມ່ນພວກເຮົາຈະຮຽນບາງພາກສ່ວນໃນການຕອບບັນຫານີ້.

ປື້ມພຣະທັມຟີລິບປອຍໄດ້ຊີ້ໃຫ້ພວກເຮົາເຫັນວ່າ ໂປໂລປະເຊີນກັບບັນຫາຫລາຍຢ່າງ. ໂປໂລເປັນຜູ້ກໍ່ຕັ້ງໂບດເມືອງຟີລິບປອຍ ໃນການເດີນທາງຄັ້ງທີສອງຂອງທ່ານ.(ກຈ 16:12-40) ເວລາໂປໂລຂຽນຈົດຫມາຍສະບັບນີ້ ລາວກຳລັງຕິດຄຸກຢູ່ກຸງໂຣມ. (ຟປ 1:13-14) ຊາວຟີລິບປອບໄດ້ສົ່ງ ເອປາໂຟຣດີໂຕ ໄປຕິດຕາມເບິ່ງຄວາມສຸກທຸກ. ແຕ່ລາວກໍປ່ວຍໂຊຈົນເກືອບຕາຍ ໂປໂລຈຶ່ງບອກໃຫ້ລາວກັບໄປ. ພີ່ນ້ອງທີ່ຟີລິບປອຍມີຄວາມຮັກແພງຕໍ່ໂປໂລຫລາຍ. ແຕ່ວ່າກໍຍັງມີການບໍ່ສອດຄ້ອງກັນດ້ວຍຜູ້ຍິງສອງຄົນ.

ປານນັ້ນ ໂປໂລກໍຍັງເຫັນຊີວິດໃນທາງບວກ. ລາວອະທິບາຍທ່າທີໃນຄວາມຊື່ນຊົມຍິນດີຢ່າງໃດພວກເຮົາຈະເຫັນໃນຈົດຫມາຍຂອງລາວ.

## <u>ສ້າງຄວາມສັມພັນແບບອົບອຸ່ນກັບກັບຜູ້ອື່ນ (1:1-8)</u>

ໃນພຣະທັມຕອນນີ້ ເຮັດໃຫ້ພວກເຮົາເຫັນຢ່າງຈະແຈ້ງວ່າ ໂປໂລມີຄວາມສັມພັນຢ່າງເລິກເຊິ່ງ ແລະ ອົບອຸ່ນ ກັບຊາວເມືອງຟີລິບປອຍ. ຊຶ່ງເຮົາຈະເຫັນໃນຕອນຕົ້ນຂອງຈົດໝາຍ ເຮົາລະນຶກເຖິງເຈົ້າຢູ່ສເມີ, ເຮົາອ້ອນວອນຂໍເພື່ອເຈົ້າ, ເຮົາແນ່ໃຈວ່າພຣະເຈົ້າ ຊຶ່ງຕັ້ງຕົ້ນການດີໄວ້ໃນພວກເຈົ້າ, ເຮົາມີໃຈຮັກພວກເຈົ້າທຸກຄົນ ......(1:7) ແລະເມື່ອມາເຖິງຂໍ້ 8 ໂປໂລບອກວ່າ ເຮົາເປັນຫ່ວງເຈົ້າທັງຫລາຍ. ຄຳວ່າເປັນຫ່ວງໃນທີ່ນີ້ ໝາຍຄວາມວ່າ ໃນສ່ວນເລິກຂອງຫົວໃຈທີ່ສະແດງອອກມາ ແມ່ນຄວາມຮູ້ສຶກທີ່ປະກອບດ້ວຍອະວັຍຍະວະທຸກພາກສ່ວນຂອງຮ່າງກາຍ ພ້ອມດ້ວຍຫົວໃຈ,ຕັບ, ປອດ, ໄສ້,ພຸງທຸກຢ່າງ.

ເມື່ອມາເບິ່ງ (1:5) ໂປໂລມີຄວາມສັມພັນຫລາຍເພາະການເຮັດວຽກຂອງພຣະເຈົ້າ ເປັນພາກສ່ວນນຳກັນ. ຄຳວ່າເປັນພາກສ່ວນນຳກັນນັ້ນກໍຄືວ່າ ຢູ່ໃນກາຍດຽວກັນ ນະມັສການພຣະເຈົ້າຮ່ວມກັນ ແບ່ງປັນຄວາມສຸກທຸກຮ່ວມກັນ ຮັບໃຊ້ຮ່ວມກັນ.

## ພົວພັນດ້ວຍຄວາມເປັນຫ່ວງເປັນໃຍກັບຜູ້ອື່ນ (1:9-11)

ທີ່ຈະຜ່ານຜ່າຄວາມຫຍຸ້ງຍາກໄດ້ນັ້ນ ອີກວິທີນຶ່ງທີ່ເຫັນວ່າດີທີ່ສຸດນັ້ນກໍຄື ຢ່າພະຍາຍາມເນັ້ນໃສ່ແຕ່ຕົວເອງໃຫ້ເບິ່ງຜູ້ອື່ນນຳດ້ວຍ. ໂປໂລບໍ່ເບິ່ງແຕ່ຕົວລາວເອງ ເວລາທີ່ລາວຕິດຄຸກ ແຕ່ລາວຍັງແນມເບິ່ງພວກພີ່ນ້ອງທີ່ຢູ່ເມືອງຟີລິບປອຍ ບອກວ່າລາວຈະອະທິຖານເພື່ອພວກເຂົາ.

ໃນຄຳອະທິຖານຂອງໂປໂລພວກເຮົາຈະເຫັນຢູ່ສອງຢ່າງ: ຄວາມຮັກ ແລະ ຄວາມສາມາດ. ລາວບໍ່ໄດ້ສະເພາະເຈາະຈົງໃສ່ໃຜຜູ້ນຶ່ງພຽງເທົ່ານັ້ນ ເມື່ອເບິ່ງຄັກໆແລ້ວຈະເຫັນວ່າ ລາວໃຫ້ຄວາມຮັກນັ້ນ ກັບກາຍມາເປັນຊີວິດຈິດໃຈ ຂອງລາວເລີຍ. ດັ່ງນັ້ນລາວຈຶ່ງສາມາດຮັກຄົນອື່ນແລະຮັກພຣະເຈົ້າໄດ້. ຄວາມຮັກທີ່ໂປໂລມີຢູ່ນີ້ ແມ່ນຄວາມຮັກທີ່ຖ່ອມຕົວເອງ ເພື່ອຄົນອື່ນ, ເປັນຄວາມຮັກທີ່ເຄື່ອນໄຫວ ເໜັງຕິງ ບໍ່ແມ່ນຄວາມຮັກແຕ່ຄວາມຄິດ. ຄວາມຮັກຢ່າງນີ້ ແມ່ນປາກົດຢູ່ໃນ ໂຢຮັນ 3:16

ທີ່ໂປໂລເປັນຫ່ວງຫລາຍກໍແມ່ນ ຄວາມບໍຣິສຸດ ແລະການເຄື່ອນໄຫວຂອງຊີວິດໃນໂລກນີ້ ເພື່ອພວກເຂົາຈະບໍ່ໄດ້ມີທີ່ຕິໄດ້ ໃນວັນສະເດັດມາຂອງອົງພຣະເຢຊູຄຣິດເຈົ້າ. (1:10) ຍິ່ງໄປກວ່ານັ້ນອີກ ລາວກໍຍິ່ງເປັນຫ່ວງຄືວ່າ ບໍ່ແມ່ນຫລີກຈາກຄວາມເຊື່ອລ້າໆ ແຕ່ຕ້ອງກະທຳການດີໄປດ້ວຍ, ອັນນີ້ແມ່ນຄວາມໝາຍຂອງຄຳທີ່ວ່າ "ຈະໄດ້ຜົນທີ່ບໍຣິສຸດຂອງຄວາມຊອບທັມ" (1:11)

ຖ້າຫາກຊາວຟີລິບປອຍຫາກ ປະຕິບັດ ແລະດຳເນີນຊີວິດ ຢ່າງນີ້ ພຣະເຈົ້າກໍຈະໄດ້ຮັບສະງ່າຣາສີ ແລະໄດ້ຮັບຄຳສັຣເສີນດ້ວຍ. ນີ້ຄວນຈະເປັນເປົ້າໝາຍຂອງຊີວິດຄຣິສຕຽນຫລືບໍ່?

ຄົນທີ່ມີຄວາມສຸກທີ່ສຸດໃນໂລກ ບໍ່ແມ່ນບຸກຄົນທີ່ບໍ່ມີພະຍາດໂຣຄາບຽດບຽນເທົ່ານັ້ນ ເຊັ່ນດຽວກັນ ຄົນທີ່ປະສົບຜົນສຳເຣັດໃນຊີວິດ ຈະບໍ່ພະຍາຍາມຊອກສແວງຫາກຽດໃສ່ຕົວເອງເທົ່ານັ້ນ. ແຕ່ຄົນທີ່ມີຄວາມສຸກທີ່ສຸດໃນໂລກນັ້ນຄືຄົນທີ່ສາມາດຜ່ານຜ່າອຸປສັກຂອງຕົວເອງໄດ້ຢ່າງປອດພັຍ ແລະຊອກສແວງຫາສິ່ງທີ່ດີເພື່ອຜູ້ອື່ນ.

## ໃຫ້ເຫັນສິ່ງດີໃນຖ້າມກາງບັນຫາຕ່າງໆ (1:12-19)

ໂປໂລມີຄູ່ສັດຕຣູທີ່ຕໍ່ຕ້ານລາວ, ໂດຍສ່ວນຕົວ ແລະ ໂດຍຂ່າວປະເສີດ. ລາວຖືກຄຸມຂັງເພາະການປະກາດເຣື່ອງຂອງພຣະເຢຊູ. ເຣື່ອງລາວຕ່າງໆແມ່ນພົບຢູ່ໃນພຣະທັມ ກິຈການ ບົດ 21--26. ຄຣິສຕຽນບາງຄົນກໍເປັນສັດຕຣູກັບລາວໂດຍບໍ່ມີເຫດຜົນຫຍັງ. ແຕ່ວ່າ ການຖືກຈັບ ແລ້ວນຳໄປຂັງນັ້ນຍິ່ງເປັນໂອກາດໃຫ້ໂປໂລໄດ້ຂຍາຍການປ່າວປະກາດເພີ້ມຂຶ້ນ. ບໍ່ພໍທໍ່ນັ້ນ ພວກທີ່ເປັນສັດຕຣູຊໍ້າພັດປະກາດເຣື່ອງຂອງພຣະເຈົ້າຊ່ວຍໂປໂລຊໍ້າ. (1:15) ອີກອັນນຶ່ງ ຄຣິສຕຽນທີ່ບໍ່ມັກປາກ ແລະບໍ່ກ້າຫານ ກໍເລີຍກາຍເປັນຄົນກ້າຫານ ແລະກ້າປະກາດ. (1:14)

ບັນຫາ ສ່ວນຫລາຍແລ້ວກໍແມ່ນເຮັດໃຫ້ເຮົາມີໂອກາດປັບປຸງຕົວເອງ ແລະເຮັດໃຫ້ເຮົາຈະເຣີນຂຶ້ນ ແລະກ້າວໜ້າຕໍ່ໄປ. ຄັ້ງແລກກໍເບິ່ງຄືວ່າ ຫຍຸ້ງຍາກຫລາຍ ແຕ່ບັ້ນປາຍຈະເຫັນຜົນດີຂອງມັນ.

ຊາຍຄົນນຶ່ງຖືກໂຮງງານ ເລອອຟ. ທາງຄອບຄົວ, ທາງດ້ານການເງິນ, ແລະທາງດ້ານສັງຄົມ ເຮັດໃຫ້ລາວນ້ອຍໃຈ ບໍ່ຮູ້ຈັກຈະກະທຳຢ່າງໃດ. ຕໍ່ມາລາວຈຶ່ງໄປຕັ້ງ ກິຈການໆຄ້ານ້ອຍໆຂອງຕົວເອງ ພໍຢູ່ໄດ້. ໃນທີ່ສຸດການຄ້າຂອງລາວກໍກ້າວໄປດີ. ລາຍໄດ້ຂອງລາວກໍຫລາຍກວ່າ ເງິນເດືອນທີ່ລາວໄດ້ຜ່ານມາ. ລາວຂອບຄຸນພຣະເຈົ້າ ຖ້າລາວບໍ່ຖືກ ເລອອຟ ລາວກໍຄິດວ່າຈະທຳງານໄປຈົນກວ່າຈະກິນເບັ້ຽບຳນານ. ບັດນີ້ລາວໃຫ້ຄົນງານເຮັດວຽກໃຫ້ລາວ. ລາວມີແຕ່ທຽວໄປກວດກາເບິ່ງເທົ່ານັ້ນ.

ໂປໂລໄດ້ກ່າວໄວ້ໃນ ໂຣມ 8:28 *"ພວກເຮົາຮູ້ແລ້ວວ່າ ພຣະເຈົ້າຊົງຮ່ວມກັບຄົນທັງຫລາຍທີ່ຮັກພຣະອົງເພື່ອໃຫ້ເກີດຜົນດີໃນທຸກສິ່ງ ຄືຄົນທັງປວງທີ່ພຣະອົງໄດ້ຊົງເອີ້ນໄວ້ຕາມພຣະປະສົງຂອງພຣະອົງ"*

<u>ຈົ່ງຝາກຊີວິດໄວ້ກັບພຣະເຢຊູຄຣິດພຽງເທົ່ານັ້ນ (1:20-26)</u>

ພວກເຮົາຮູ້ແລ້ວວ່າ ໂປໂລ ມີບັນຫາ, ຄຣິສຕະຈັກມີບັນຫາ, ເພື່ອນຄຣິສຕຽນອິດສາບັງບຽດ, ຊອກຫາເຣື່ອງໃສ່ລາວ. ເມື່ອລາວຢູ່ໃນທີ່ຄຸມຂັງ ລາວກໍຮູ້ວ່າລາວມີໂທດຫນັກອາດຈະເຖິງຕາຍກໍເປັນໄດ້.(1:21-23) ພຶດຕິການເຫລົ່ານີ້ ໂປໂລພະຍາຍາມສືບຕໍ່ໃນຄວາມຍິນດີໃນພຣະເຈົ້າ. ລາວຍິນດີໄດ້ຄືແນວໃດ? ຄຳຕອບກໍຄືວ່າ ລາວບໍ່ໄດ້ສແວງຫາຄຳຕອບທີ່ຢູ່ອ້ອມຮອບຕົວລາວ ຫລືໃນໂລກນີ້. ລາວຝາກທຸກພາກສ່ວນຂອງຈິດໃຈຮ່າງກາຍ ແລະສ່ວນເລິກຂອງຄວາມຮູ້ສຶກຕ່າງໆໄວ້ກັບພຣະເຢຊູຄຣິດ. ເຮົາເຫັນໄດ້ໃນຄຳເວົ້າຂອງລາວທີ່ວ່າ *"ເຖິງແມ່ນເຮົາຈະມີຊີວິດຫລືຕາຍກໍຕາມ ເພາະວ່າຖ້າເຮົາມີຊີວິດພຣະຄຣິດເປັນຊີວິດນັ້ນ ຖ້າເຮົາຕາຍກໍເປັນປໂຍດແກ່ເຮົາ." (1:21)* ນີ້ລະຄືຂໍ້ລໍ້າເລິກຂອງໂປໂລ ທີ່ຈະເຫັນຊີວິດໃນທາງບວກໄດ້.

ພວກເຮົາສາມາດເຮັດໄດ້ຫລາຍຢ່າງທີ່ຈະຝາກຕົວເຮົາໃຫ້ເປັນຂອງພຣະຄຣິດເຫມືອນກັບໂປໂລ. ໃຫ້ພຣະເຈົ້າເປັນນຶ່ງໃນຊີວິດ ເຂົ້າເຝົ້າພຣະເຈົ້າທຸກອາທິດ ປະກອບສ່ວນໃນວຽກງານຂອງໂບດ ຊ່ວຍເຫລືອຊຶ່ງກັນແລະກັນ ນຳຄົນມາຫາພຣະເຈົ້າ ດຳເນີນຊີວິດຄຣິສຕຽນທີ່ແທ້ຈິງ ເຮັດທຸກຢ່າງເພື່ອຖວາຍກຽດໃຫ້ກັບພຣະເຈົ້າ ແມ່ນວ່າຈະຢູ່ໃນໂບດຫລືນອກໂບດກໍຕາມ ບໍ່ວ່າຈະມີບັນຫານ້ອຍຫລາຍສໍ່າໃດ. ຈົ່ງຈົດຈຳຄຳສັນຍາຂອງພຣະເຈົ້າ.

<u>ຄຳຖາມ:</u>

1. ຄວາມເຊື່ອໃນພຣະຄຣິດຊ່ວຍແກ້ໄຂບັນຫາໃຫ້ແກ່ເຮົາຢ່າງໃດແດ່?

໒. ຖ້າທ່ານຫາກຖືກບອກໃຫ້ນຳພາການຖວາຍຕົວໃນວັນນີ້ ທ່ານຈະວ່າຢ່າງໃດ? (ໃນຂະນະທີ່ກຳລັງມີບັນຫາ)

3. ແມ່ນຫຍັງທີ່ເຮັດໃຫ້ທ່ານບັນເທົາໄດ້ຫລາຍກວ່າຫມູ່ທີ່ສຸດ ເວລາມີບັນຫາ?

4. ໃຫ້ບອກມາສິ່ງດຽວແລະດີທີ່ສຸດສຳລັບຄຣິສຕຽນທີ່ແກ້ໄຂບັນຫາໄດ້ດີກວ່າຫມູ່ທັງຫມົດ?

## ບົດຮຽນທີ 2
## ຈົ່ງດຳລົງຊີວິດໃຫ້ສົມກັບຂ່າວປະເສີດ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ຟີລິບປອຍ 1: 27-2:15

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ຟີລິບປອຍ 1 : 27-2:18

<u>ຈຸດສຳຄັນຂອງບົດຮຽນນີ້:</u> ດຳລົງຊີວິດໃຫ້ສົມກັບຂ່າວປະເສີດ ແມ່ນຮຽກຮ້ອງໃຫ້ຜູ້ຕິດຕາມພຣະຄຣິດທັງຫລາຍ ມີຊີວິດທີ່ຖ່ອມຕົວ, ເປັນຫ່ວງເປັນໃຍໃນການຮັບໃຊ້ຜູ້ອື່ນ, ຕັ້ງຫມັ້ນຢູ່ໃນຄວາມເຊື່ອ ບໍ່ວ່າຈະ ຢູ່ໃນກໍຣະນີໃດກໍຕາມ.

<u>ຄຳຖາມເພື່ອສຳຣວດ</u>: ທ່ານໄດ້ດຳລົງຊີວິດທີ່ສົມກັບຂ່າວປະເສີດແລ້ວຫລືຍັງ?

<u>ຈຸດປະສົງຂອງບົດຮຽນ:</u> ແມ່ນຫຍັງທີ່ໂປໂລສະແດງອອກ ໃຫ້ເຫັນວ່າພຣະເຢຊູ ຊົງເປັນພຣະເຈົ້າຂອງລາວຢ່າງແທ້ຈິງ?

### <u>ຄຳນຳ</u>

ຊາຍຄົນນຶ່ງ ໄດ້ມອບທຸກສິ່ງຢ່າງຖວາຍແກ່ພຣະເຈົ້າໃນຖານະທີ່ເຂົາເປັນສາວົກຂອງພຣະອົງ. ສ່ວນມາຕຖານແລະການປະພຶດແມ່ນບໍ່ເວົ້າເຖິງກໍໄດ້ ເຂົາມີຄົບຖ້ວນທຸກຢ່າງ. ເປັນຕົວຢ່າງໃນການອະທິຖານ ແລະການຖວາຍຕົວຕ່າງໆໄດ້ດີ. ລາວດີຕໍ່ເພື່ອນຝູງແລະສນັບສນູນສິດຍາພິບານຂອງລາວຢ່າງເຕັມປ່ຽມ. ລາວເຄີຍເປັນເຖົ້າແກ່ທີ່ມີຄວາມຈົງຮັກພັກດີຕໍ່ຄຣິສຕະຈັກຂອງລາວຫລາຍ.

ສິ່ງທັງຫມົດເຫລົ່ານີ້ ເຮັດໃຫ້ຂ້າພະເຈົ້າແປກໃຈຫລາຍ. ເປັນຫຍັງຈຶ່ງແປກໃຈ? ເພາະຄົນຜູ້ນີ້ຕອບກັບຂ້າພະເຈົ້າວ່າ: ຂ້ານ້ອຍໄດ້ຍ້າຍມາຫລາຍໂບດແລ້ວ. ເວລາຂ້າພະເຈົ້າຖາມຄຳຖາມລາວ, ລາວກໍຕອບວ່າຂ້ານ້ອຍເຄີຍມີບັນຫາເຣື່ອງເງິນກັບຄົນໃນໂບດ. ຍິ່ງໄປກວ່ານັ້ນ ພັນລະຍາຂອງຂ້ານ້ອຍ ກໍເປັນຄົນມັກມີເຣື່ອງ, ມັກເອົາເຣື່ອງ, ມັກເຫັນຄວາມຜິດໃນຄົນອື່ນ ແລະບໍ່ຍອມອະພັຍໃຫ້ແກ່ໃຜທັງນັ້ນ ຖ້າມີໃຜຜູ້ນຶ່ງຫາກເຮັດຜິດຕໍ່ລາວ. ລາວຄວບຄຸມລູກທັງຫມົດໃນຄອບຄົວແລະຖ້າຂ້ານ້ອຍຫາກກາຍມາເປັນເຖົ້າແກ່, ຂ້ານ້ອຍຢ້ານລາວຈະເປັນຜູ້ຄວບຄຸມຫມົດໂບດ. ນີ້ລະຄືສິ່ງທີ່ຂ້ານ້ອຍເຫັນຕົວເອງວ່າບໍ່ສົມຄວນຈະເປັນຄຣູສອນ ຫລືເຖົ້າແກ່ ຫລືຜູ້ນຳໃນໂບດໄດ້.

ຊາຍຄົນນີ້ສົມຄວນຫລືບໍ່ສົມຄວນ ມາສຶກສານຳກັນ. ລາວຈະມີຄຸນນະສົມບັດຫລືບໍ່ນັ້ນ ໃນບົດຮຽນວັນນີ້ພວກເຮົາມາຮຽນນຳກັນ.

ກ່ອນຈະເບິ່ງຄຳອະທິບາຍຂອງ ໂປໂລ ວ່າ "ຈົ່ງດຳລົງຊີວິດໃຫ້ສົມກັບພຣະກິດຕິຄຸນ" ເຮົາຕ້ອງເບິ່ງເຫດຜົນຂອງລາວເສັຽກ່ອນ. ຄຣິສຕະຈັກເມືອງຟີລິບປອຍ ໄດ້ຖືກແບ່ງແຍກ, ໂປໂລຮຽກຮ້ອງ ໃຫ້ ຕັ້ງຫມັ້ນຢູ່ໃນພຣະວິນຍານອັນດຽວ, ເປັນນ້ຳນຶ່ງໃຈດຽວ, ຕໍ່ສູ້ເຫມືອນຄົນໆດຽວ. (1:27) ບັນຫາສ່ວນໃຫຍ່ໃນເວລານີ້ກໍແມ່ນຈາກນາງ ຢູໂອເດັຍ ແລະ ນາງຊິນຕິເຄ ທີ່ບໍ່ຍອມລົງຮອຍກັນ. (4:2) ການຢ່າງນີ້ເຮັດໃຫ້ ມີການ ຈົ່ມວ່າ ແລະ ການຖົກຖຽງ ຫລື ຢ່າງນ້ອຍໂປໂລ ກໍເປັນຫ່ວງ ບັນຫາທີ່ຈະເກີດຂຶ້ນ. (2:15) ໂປໂລເປັນຜູ້ປະກາດ ທີ່ເປັນຫ່ວງນຳການປະພຶດຂອງຄຣິສຕຽນຫລາຍອີ່ຫລີ. ຕົວລາວເອງກໍຖືກມີບັນຫາຍ້ອນການຖົກຖຽງ

ກັນນີ້ລະ  ຍ້ອນການຢ້ານລົ່ນຢ້ານເຫລືອກັນນີ້ລະ  ຍ້ອນການແຂ່ງດີແຂ່ງເດັ່ນກັນນີ້ລະ  ແລະສຸດທ້າຍກໍຂາດ ຄວາມຮັກ ແລ້ວກໍຂາດຄວາມເປັນມະນຸດຂຶ້ນ. (1:15)

ນິດສັຍຂອງພຣະເຢຊູຄຣິດຄືອ່ອນນ້ອມຖ່ອມຕົວ ມີຄວາມເປັນມະນຸດທັມ,   ຈົ່ງກະທຳສິ່ງເຫລົ່ານີ້ໃຫ້ປາກົດ ແຈ້ງຕໍ່ມະນຸດທັງຫລາຍ. ໃຫ້ສັງຄົມທີ່ເຮົາສັງກັດຢູ່ນັ້ນເຫັນລັກສະນະຂອງພຣະເຢຊູຢູ່ໃນຕົວຂອງຄຣິສຕຽນ .

<u>ຈົ່ງກ້າຫານໃນການເປັນນ້ຳນຶ່ງໃຈດຽວເວລາປະເຊີນກັບບັນຫາ.</u> 1:27-30

ຄຣິສຕະຈັກເມືອງຟີລິບປອຍ ເປັນຄຣິສຕະຈັກນ້ອຍໆອັນນຶ່ງ ໃນຖ້າມກາງປະຊາຊົນຈຳນວນຫລວງຫລາຍ. ຄຣິສຕະຈັກນ້ອຍແລ້ວກໍຍັງບໍ່ແລ້ວ ຊ້ຳພັດມີບັນຫາອີກດ້ວຍ. ສ່ວນຫລາຍແລ້ວກໍແມ່ນບັນຫາພາຍໃນຈິດໃຈ ສະມາຊິກສ່ວນຫລາຍບໍ່ມີໃຈເປັນອັນນຶ່ງອັນດຽວກັນ. (1:27)   ບໍ່ພໍທໍ່ນັ້ນ ພວກເຂົາເຈົ້າຍັງຢ້ານພວກທີ່ຂັດ ຂວາງນັ້ນ. 1:28  ພວກເຂົາຍັງຢ້ານພວກຂົ່ມເຫັງ.  ຄວາມຈິງແລ້ວ ໂປໂລ ແລະສີລາ ກໍຖືກຈັບຂັງກ່ອນນັ້ນ ອີກເມື່ອເວລາສ້າງໂບດຄັ້ງທຳອິດ. ກຈ.  16:16-24

ຟີລິບປອຍ 1:29  ຄຣິສຕຽນຄວນທີ່ຈະທົນທຸກທໍຣະມານເພື່ອພຣະຄຣິດ.  ເພາະການທໍຣະມານກໍແມ່ນຂອງ ປະທານຢ່າງນຶ່ງເຫມືອນກັນ.  ຂອງປະທານຢ່າງນີ້ຈະມອບໃຫ້ແຕ່ຄົນທີ່ຮັກພຣະອົງເທົ່ານັ້ນ.     ໂປໂລຈຶ່ງ ເນັ້ນເລື້ອຍໆວ່າ ຈົ່ງປະພຶດຕົວໃຫ້ສົມກັບຂ່າວປະເສີດ.

<u>ເຮັດໃຫ້ສົມກັບຄຸນຄ່ານັ້ນກໍຄືໃຫ້ມີຄວາມຄິດເຫມືອນພຣະຄຣິດ</u>  (2:1-11)

ຖ້າພວກເຮົາຫາກສຳຣວດເບິ່ງພຣະທັມຕອນນີ້ແລ້ວ ພວກເຮົາຄວນຈະຈົດຈຳໄວ້ຕລອດໄປວ່າພຣະເຢຊູຄຣິດ ເປັນພຣະເຈົ້າ ໃນສະພາບມະນຸດ.    ເປັນການຍາກໃນການອະທິບາຍ ເພາະການອະທິບາຍຂອງເຮົາມັກຈະ ຂັດກັບຄວາມຈິງ.

ຂໍ້ພຣະທັມແບ່ງເປັນສອງສ່ວນ:  ສ່ວນທີ1  (2:1-4)  ອະທິບາຍເຖິງການດຳລົງຊີວິດຂອງຊາວຟີລິບປອຍ.  ສ່ວນທີ2 (2:5-11)  ໄດ້ຊີ້ໃສ່ການດຳເນີນຊີວິດພຣະເຢຊູເປັນຕົວຢ່າງ. ທັງສອງສ່ວນນີ້ ແມ່ນ ໂປໂລຂໍຮ້ອງ ໃຫ້ຊາວຟີລິບປອຍ ກະທຳຕົວໃຫ້ສົມກັບຂ່າວປະເສີດ.

ໂປດລະວັງໃຫ້ດີທີ່ຈະກະທຳຕາມ (2:2)  ໂປໂລເວົ້າຢ່າງຈະແຈ້ງເຖິງຄວາມເປັນອັນນຶ່ງອັນດຽວກັນ. ລາວ ຂໍຮ້ອງພວກເຂົາເຈົ້າໃຫ້ເປັນອັນນຶ່ງອັນດຽວກັນໃນຄວາມຮັກຂອງພຣະຄຣິດ. ມີຄວາມເມດຕາກະຣຸນາຕໍ່ກັນ ເພື່ອການມາຂອງລາວຈະຄົບຖ້ວນ.  ການຂາດຄວາມສາມັກຄີນັ້ນມາຈາກການອວດຕົວ ຈອງຫອງຫລອກ ລວງ ເຫັນຕົວເອງດີກວ່າຄົນອື່ນ.  ແທນທີ່ຈະເຫັນຄົນອື່ນດີກວ່າຕົນ.

ສ່ວນຕໍ່ມາ ແມ່ນຄົນທີ່ມອບໃຫ້ພຣະເຢຊູເປັນຜູ້ນຳພາ, ເປັນຕົວຢ່າງ.  ໂປໂລເວົ້າແບບກະທັດລັດວ່າ: " ເຈົ້າ ທັງຫລາຍຈົ່ງມີນ້ຳໃຈຕໍ່ກັນ ເຫມືອນຢ່າງທີ່ມີໃນພຣະເຢຊູຄຣິດ." (2:5)  ແມ່ນໃຜເປັນພຣະເຢຊູຄຣິດແລະ ນິດສັຍຂອງພຣະອົງເປັນຢ່າງໃດ.

ໃນການໄຈ້ແຍກພຣະເຢຊູຄຣິດນີ້ ໂປໂລກໍແຍກອອກເປັນສອງພາກເຊັ່ນ: (1) **ພຣະອົງຊົງສະພາບ** ການຊົງ

ສະພາບນີ້ ແມ່ນບໍ່ມີການປ່ຽນແປງ. (2) **ທັມຊາດຂອງພຣະອົງ** ທັມຊາດຂອງພຣະອົງນີ້ແມ່ນຖ່ອມຕົວເຊື່ອຟັງ ຈົນເຖິງມໍຣະນາ. ພຣະອົງບໍ່ໄດ້ກະທຳແບບແປະງບາງໆ. ເພື່ອພຣະນາມຂອງພຣະອົງຈະຖືກຍົກຂຶ້ນ. (2:10-11)

<u>ເຮັດໃຫ້ສົມກັບຄຸນຄ່ານັ້ນກໍຄື ສ້າງເຮົາເອງໃຫ້ເປັນສາວົກຢ່າງສົມບູນ</u> (2:12-15)

ເມື່ອມາເຖິງຕອນນີ້ໂປໂລເວົ້າແຈ້ງ ວ່າຄວາມລອດນັ້ນແມ່ນມາຈາກພຣະເຈົ້າ. ພວກເຈົ້າຜູ້ເຊື່ອທັງຫລາຍເອີຍຈົ່ງຮັກສາຄວາມລອດຂອງພວກເຈົ້າເນີ. ຄວາມລອດພົ້ນນີ້ບໍ່ໄດ້ມາຈາກການກະທຳຂອງພວກເຈົ້າ. ພວກເຈົ້າໄດ້ມາຟຣີໆ ແລະກໍແມ່ນຂອງປະທານມາຈາກພຣະເຈົ້າ. ໂປໂລເຄີຍ ກ່າວ ໄວ້ໃນພຣະທັມໂຣມ ບົດ 3 ແລະ 4. ທີ່ວ່າອັບຣາຮາມໄດ້ຮັບຄວາມລອດພົ້ນ ໂດຍພຣະຄຸນພຣະເຈົ້າ ບໍ່ແມ່ນຍ້ອນການກະທຳດີຂອງລາວເອງ. ທີ່ໂປໂລກ່າວໃນ ເອເຟໂຊ 2:8-9 ແລະຟີລິບປອຍ 2:13 ນັ້ນ ເປັນຄວາມຈິງແທ້ແນ່ນອນ ເພາະຖ້ອຍຄຳກ່າວວ່າ: *"ເພາະວ່າແມ່ນພຣະເຈົ້າເປັນຜູ້ຊົງກະທຳການ ຢູ່ພາຍໃນເຈົ້າທັງຫລາຍ ໃຫ້ມີໃຈປາຖນາແລະໃຫ້ເຮັດໄປເພື່ອຊອບພຣະທັຍຂອງພຣະອົງ." (2:13)*

ໃນຂະນະທີ່ເຮົາກ່າວວ່າ ຄວາມລອດພົ້ນແມ່ນການກະທຳຂອງພຣະເຈົ້າ, ຄົນທີ່ພຣະອົງຊົງຮຽກເອີ້ນ ໃຫ້ອອກມາຮັບຄວາມລອດພົ້ນນັ້ນ ຈົ່ງອົດສາພະຍາຍາມດ້ວຍຄວາມຢຳເກງແລະຕົວສັ່ນ. ພວກເຮົາໄດ້ຮັບຟຣີກໍຈິງ ແຕ່ພວກເຮົາຄວນເປັນຜູ້ມີຄວາມລອດພົ້ນໃຫ້ສົມກັບທີ່ພຣະອົງຊົງມອບໃຫ້. "ພວກເຮົາ ທັງຫລາຍເປັນສີພຣະຫັດຂອງພຣະເຈົ້າ, ສ້າງຂຶ້ນມາໃນພຣະຄຣິດເພື່ອໃຫ້ປະກອບການດີ ຊຶ່ງພຣະເຈົ້າໄດ້ຊົງຈັດຕຽມລ່ວງໜ້າໄວ້ກ່ອນ ເພື່ອໃຫ້ເຮົາທັງຫລາຍປະຕິບັດຕາມ." (ເອເຟໂຊ 2:10)

ຢ່າງໃດກໍຕາມ ຖ້ອຍຄຳທີ່ກ່າວມາແມ່ນຈະສຳເຣັດໄດ້ກໍຕໍ່ເມື່ອ ພວກເຮົາຫາກເຮັດດ້ວຍການບໍ່ຈົ່ມບໍ່ວ່າ ບໍ່ຖົກຖຽງກັນ. ການຕິຕຽນກໍຈະນ້ອຍລົງ ແສງສວ່າງກໍຈະໄດ້ສ່ອງສວ່າງແຈ້ງໃຫ້ທົ່ວໂລກ.

<u>ພວກເຮົາເດເປັນຢ່າງໃດ?</u>

ໃນຟີລິບປອຍ 1:27 ໂປໂລໃຊ້ຄຳວ່າ ຈົ່ງດຳເນີນຊີວິດໃຫ້ສົມກັບຂ່າວປະເສີດ. ຄຳວ່າດຳເນີນແມ່ນການດຳລົງຊີວິດ. ຈຳໄວ້ວ່າ ຊາວຟີລິບປອຍໃຊ້ຊີວິດ ໂດຍໃຊ້ສັນຊາດໂຣມັນ. ພວກເຂົາພູມໃຈໃນການທີ່ໄດ້ເປັນສັນຊາດນັ້ນ. ເຂົາປາກພາສາລາຕິນ ນຸ່ງຖືເໝືອນຊາວໂຣມັນ. ໃຊ້ຊີວິດພາຍໃຕ້ກົດໝາຍໂຣມັນ. ໂປໂລບອກວ່າຈົ່ງເປັນສັນຊາດທີ່ດີ.

ໃນການທີ່ເຮົາເປັນສັນຊາດຄຣິສຕຽນ ພວກເຮົາກໍຄວນຈະດຳເນີນຊີວິດໃຫ້ສົມກັບເປັນສັນຊາດຂອງຄຣິສຕຽນ ແລະການເປັນສັນຊາດຄຣິສຕຽນນັ້ນ ກໍມີຢູ່ສອງເປົ້າໝາຍຄື: ການໃຫ້ອະພັຍ--ຊຶ່ງພວກເຮົາໄດ້ຮັບຈາກພຣະເຈົ້າມາແລ້ວ. ອັນທີສອງກໍຄືການດຳເນີນຊີວິດ ເຮົາຈະດຳເນີນຊີວິດທີ່ສົມກັບຜູ້ທີ່ໄດ້ຮັບການອະພັຍຫລືບໍ່. ເຮົາໄດ້ຮັບຄວາມຮັກ ເຮົາມີຄວາມຮັກຈາກພຣະເຈົ້າແລ້ວຫລືບໍ່? ເຮົາໄດ້ຮັບການອະພັຍ ແລະເຮົາກໍໄດ້ໃຫ້ອະພັຍຄົນອື່ນແລ້ວຫລືບໍ່. ຈົ່ງດຳເນີນຊີວິດໃຫ້ສົມກັບຂ່າວປະເສີດຂອງພຣະເຈົ້າ.

<u>ຄຳຖາມ:</u>

1. ແມ່ນຫຍັງທີ່ເຮັດໃຫ້ຄວາມອິດສາບັງບຽດເກີດຂຶ້ນໃນຕົວເຮົາ?

2. ເຮັດຢ່າງໃດ ຄວາມອິດສາບັງບຽດຈຶ່ງຈະຫາຍໄປຈາກຊີວິດຄຣິສຕຽນ?

3. ແມ່ນຫຍັງທີ່ຈະເຮັດໃຫ້ຊີວິດຄຣິສຕຽນປະສົບຜົນສໍາເຣັດ ໃນການທີ່ຈະປະກາດຂ່າວປະເສີດຂອງພຣະເຈົ້າ?

4. ເປັນຫຍັງການເຂົ້າໃຈວ່າພຣະເຢຊູຊົງເປັນພຣະເຈົ້າ ຈຶ່ງຖືວ່າເປັນການສໍາຄັນ?

# ບົດຮຽນທີ 3
# ຈົ່ງເຮັດໃຫ້ເຫັນຄວາມແຕກຕ່າງໃນຊີວິດຂອງທ່ານເອງ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຟີລິບປອຍ 2:19-30

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ຟີລິບປອບ 2:19-30

ຈຸດສຳຄັນຂອງບົດຮຽນນີ້: ຜູ້ທີ່ໄດ້ຮັບການປ່ຽນແປງແທ້ນັ້ນ ຕ້ອງຮັບໃຊ້ຜູ້ອື່ນ ເພື່ອຜົນປະໂຍດຂອງພຣະຄຣິດ.

ຄຳຖາມເພື່ອສຳຣວດ: ພວກເຮົາຈະເປັນຄົນປະເພດໃດ ເພື່ອຈະຖວາຍກຽດແດ່ພຣະເຈົ້າ?

ຈຸດປະສົງຂອງບົດຮຽນ: ເພື່ອຈະໃຫ້ເຮົາຕັດສິນໃຈທີ່ຈະກາຍເປັນຜູ້ທີ່ປ່ຽນແປງທີ່ແທ້ຈິງ ເພື່ອພຣະເຢຊູຄຣິດ.

## ຄຳນຳ

ຖ້າພວກເຮົາຢາກຈະກາຍເປັນຜູ້ປ່ຽນແປງເພື່ອຮັບໃຊ້ພຣະເຢຊູຄຣິດແທ້ນັ້ນ, ທຸກສິ່ງທຸກຢ່າງໃນຊີວິດຈຳເປັນຕ້ອງມີສ່ວນປະກອບ. ຊີວິດແຕ່ລະວັນແລະການເຄື່ອນໄຫວຕ່າງໆເປັນພາກສ່ວນໃນການຮັບໃຊ້ ບໍ່ແມ່ນເຮັດໄປເພື່ອສາສນາກິຈເທົ່ານັ້ນ. ໃນບົດຮຽນທີ່ຜ່ານມາ ພວກເຮົາໄດ້ເຫັນໂປໂລ ກ່າວເຖິງເອປາໂຟຣດີໂຕແລະຕີໂມທຽວ ແຕ່ມາໃນວັນນີ້ ພວກເຮົາຈະມາສຶກສາ ເບິ່ງວ່າ ໂປໂລກ່າວຢ່າງໃດແດ່.

## ຕີໂມທຽວ: ຜູ້ຮັບໃຊ້ຢ່າງບໍ່ສັ່ນສະເທືອນ (2:19-24)

ຕີໂມທຽວເປັນຄົນຊາວເມືອງລີດຕຣາ, ຊຶ່ງເມືອງນີ້ໄດ້ຕັ້ງຢູ່ ທາງພາກໃຕ້ຂອງປະເທດເຕີກີ້ (ກິຈການ 16:1-2) ແຕ່ຕາມກົດຫມາຍລາວກໍເປັນຄົນຢິວ, ເຖິງແມ່ນວ່າພໍ່ຂອງລາວຈະເປັນຄົນຕ່າງຊາດກໍຕາມ. (ຊາວກຣີກ) ເດັກນ້ອຍທຸກໆຄົນ ທີ່ເກີດຈາກແມ່ ສັນຊາດຢິວ ຈະກາຍເປັນຄົນຢິວໂດຍປະຣິຍາຍ ບໍ່ວ່າພໍ່ຈະເປັນຢິວຫລືສັນຊາດໃດກໍແລ້ວແຕ່. ຕີໂມທຽວເປັນລູກຊາຍຂອງນາງ ຢູນີສ (Eunice) 2 ຕີໂມທຽວ 1:5 . ຖ້າເບິ່ງຄັກ ໆ ແລ້ວຈະເຫັນວ່າ ແມ່ຂອງລາວບໍ່ປະຕິບັດຕາມລະບຽບຂອງຢິວດີປານໃດ ເພາະວ່າຕີໂມທຽວບໍ່ໄດ້ເຂົ້າພິທີຕັດໃນເວລາເກີດມາ.

ພວກເຮົາບໍ່ຮູ້ຈັກວ່າຕີໂມທຽວກາຍມາເປັນຄຣິສຕຽນຢ່າງໃດ, ພຽງແຕ່ສັນນິຖານວ່າລາວຖືກຊັກນຳໂດຍໂປໂລ ໃນການເດີນທາງຄັ້ງທຳອິດ. (ກິດຈະການ 14:8-23). ຄັ້ງແລກທີ່ຊື່ຂອງຕີໂມທຽວປາກົດຢູ່ໃນພຣະຄັມພີກໍແມ່ນລາວມີຊື່ສຽງດີໃນການເປັນຄຣິສຕຽນແລ້ວ. ໂປໂລໄດ້ເລືອກເອົາລາວເປັນຜູ້ຮ່ວມທາງເພີ້ມຈາກຊີລາໃນການເດີນທາງຄັ້ງທີສອງ. ຕີໂມທຽວໄດ້ຮັບໃຊ້ພຣະເຈົ້າໂດຍການເປັນຜູ້ຊ່ວຍໂປໂລເປັນເວລາຫລາຍປີ. ໂປໂລມັກຈະເອີ້ນລາວວ່າ "ພີ່ນ້ອງ" (ພາສາລາວ) "ນ້ອງ" (ພາສາໄທ) "Brother" ພາສາອັງກິດ. ຊຶ່ງເຮົາເຫັນໃນ 1ເທຊະໂລນີກ 3:2. ບາງຄັ້ງໂປໂລກໍຍັງເອີ້ນລາວວ່າ "ລູກທີ່ຮັກ" 1 ໂກຣິນໂທ 4:17 ບາງທີຕີໂມທຽວອາດຈະຍັງອາຍຸອ່ອນກວ່າໂປໂລຫລາຍ.

ຕີໂມທຽວຈະປະກາດພຣະກິດຕິຄຸນຂອງພຣະເຢຊູຢ່າງບໍ່ຢຸດຢັ້ງ ແລະຢ່າງສຸດກຳລັງຂອງລາວ, ບໍ່ວ່າໂປໂລ

ຈະຢູ່ນຳຫລືບໍ່ກໍຕາມ. ການທຳງານຂອງຕີໂມທຽວບໍ່ແມ່ນເປັນການງ່າຍ. ໃນເມືອງຟີລິບປອຍໄດ້ມີການຂັດແຍ້ງກັນເກີດຂື້ນຫລາຍ. (ກິຈການ 16:16-40) ເວລາໂປໂລສົ່ງຕີໂມທຽວໄປແກ້ໄຂບັນຫາທີ່ຄຣິສຕະຈັກເມືອງ ໂກຣິນໂທນັ້ນ ລາວກໍເຮັດໄດ້ດີຫລາຍ. (1 ໂກຣິນໂທ 4:17; 16:10-11; 2ໂກຣິນໂທ 1:19)

ມີສອງສິ່ງ ທີ່ຕີໂມທຽວໄດ້ເຮັດດີທີ່ສຸດຄື: (1) ລາວຮັບໃຊ້ດ້ວຍຄວາມສັດຊື່ບໍ່ວ່າສະພາບການຈະດີຫລືຮ້າຍປານໃດກໍຕາມ ໝາຍຄວາມວ່າລາວປັບຕົວເຂົ້າກັບສະພາບການໄດ້ ແລະຕັ້ງໝັ້ນໃນຄວາມເຊື່ອ. (2)ລາວຍອມຢູ່ພາຍໃຕ້ຜູ້ນຳຂອງລາວສເມີຄືໂປໂລ. ບໍ່ວ່າໂປໂລຈະໃຫ້ລາວໄປໃສຫລືໄປເຮັດຫຍັງ ຫຍຸ້ງຍາກຫລືງ່າຍດາຍລາວກໍຈະໄປ. ໃນພຣະຄໍາພີຂອງພວກເຮົາກໍເຫັນໄດ້ວ່າໂປໂລສົ່ງຕີໂມທຽວໄປເມືອງຟີລິບປອຍເພື່ອໄປສຶກສາຫາຄວາມຈິ ແລ້ວນຳມາແຈ້ງໃຫ້ໂປໂລຮູ້ຈັກ.

ຫັນມາເບິ່ງໃນພຣະທັມຄັມພີຂອງພວກເຮົາ. (2:19-22) ສິ່ງທີ່ອະທິບາຍເຖິງຕີໂມທຽວຫລາຍແທ້ໆນັ້ນກໍແມ່ນໃນຂໍ້ 20 ແລະ 21. (ກ) ລາວມີນ້ຳໃຈຕໍ່ຜູ້ອື່ນແທ້. (ຂ) ລາວເຫັນຄວາມສຳຄັນຂອງຄົນອື່ນ. (ຄ) ຮ່ວມຮັບໃຊ້ຢ່າງສັດຊື່.

ຫົວໃຈບໍ່ປ່ຽນແປງ. ຜູ້ຮັບໃຊ້ພຣະເຢຊູບາງຄົນມີໜ້າທີ່ສຳຄັນຫລາຍ ແຕ່ເຂົາເຄື່ອນໄຫວແບບຜິດແປກ. ເຂົາມີໜ້າທີ່ເປັນຜູ້ກຳຝ່າຍສຶກສາຂອງໂບດ. ເຂົາຈັດລະບຽບແບບແຜນແລະນຳພາໄດ້ດີຫລາຍ. ເຂົາຈັດຫາພຣະຄໍາພີດີໆ ມາສອນແບ່ງປັນໃຫ້ກັບທຸກຄົນໃນໂບດ. ລາວຮູ້ຈັກການຈັດແຈງງົບປມານແລະອັນໃດກໍດີໝົດຕາມທີ່ຂ້າພະເຈົ້າເຄີຍຮູ້ຈັກຜ່ານມາ. ຢ່າງໃດກໍຕາມ ຄົນຜູ້ນີ້ກໍຍັງບໍ່ມີຄວາມພໍໃຈຈັກເທື່ອ. ມີວັນນຶ່ງຂ້າພະເຈົ້າໄດ້ມີໂອກາດຖາມລາວວ່າ: ເປັນຫຍັງ? ລາວຕອບວ່າ: ເຖິງແມ່ນວ່າຂ້ອຍຈະເຮັດດີປານໃດກໍຕາມ ຂ້ອຍກໍບໍ່ມີໂອກາດໄດ້ມີໜ້າທີ່ເປັນອາຈານ.

ເມື່ອເຮົາມາສຳຣວດເບິ່ງຈິດໃຈຂອງຄົນຜູ້ນີ້ແລ້ວເຮົາກໍເຫັນວ່າ ເຂົາທຳງານບໍ່ແມ່ນອອກຈາກສ່ວນເລິກຂອງຫົວໃຈ, ພຽງແຕ່ເຮັດວຽກອອກຈາກມັນສມອງເທົ່ານັ້ນ. ທີ່ໂປໂລຮັກຕີໂມທຽວຫລາຍກໍແມ່ນລາວເຮັດອອກຈາກໃຈຈິງຢ່າງທ່ອງແທ້.

## <u>ເອປາໂຟຣດີໂຕ: ຮັບໃຊ້ດ້ວຍການເສັຽສະລະ</u> (2:25-30)

ຖ້າພວກເຮົາຫາກມາເບິ່ງ ເອປາໂຟຣດີໂຕ ໃນພຣະຄໍາພີແລ້ວ, ເຮັດໃຫ້ພວກເຮົາຄິດເຖິງ ເອປາຟຣາສ ທີ່ຄຣິສຕະຈັກເມືອງໂກໂລຊາຍ. (ໂກໂລຊາຍ 1:7) ເອປາຟຣາສ ແມ່ນຄຳຫຍໍ້ຂອງ ເອປາໂຟຣດີໂຕ. ໃນພຣະຄັມພີແລ້ວສ່ວນຫລາຍຊື່ນີ້ແມ່ນໃຊ້ໃນການເອີ້ນຊື່ຜູ້ຊາຍ ຢ່າງໃດກໍຕາມ ເອປາໂຟຣດີໂຕ ບໍ່ແມ່ນ ເອປາຟຣາສຊຶ່ງປາກົດພຽງຄັ້ງດຽວເທົ່ານັ້ນໃນພຣະຄັມພີໃໝ່.
ເອປາໂຟຣດີໂຕ ແມ່ນສະມາຊິກທີ່ກ້າວໜ້າ ແລະຫ້າວຫັນຄົນນຶ່ງໃນຄຣິສະຕະຈັກເມືອງຟີລິບປອຍ. ເວລາໂປໂລຂຽນຈົດໝາຍໄປຫາໂບດເມືອງນັ້ນ ແມ່ນລາວກຳລັງຖືກຂັງຢູ່ໃນຄຸກ. ໂບດນັ້ນກໍໄດ້ຕົກລົງກັນສົ່ງເອປາໂຟຣດີໂຕ ໃຫ້ມາຢູ່ໃກ້ຊິດກັບໂປໂລ ເມື່ອເວລາລາວມີຄວາມຕ້ອງການອັນໃດອັນນຶ່ງ. ທັງໝົດນີ້ຮວມດ້ວຍການເງິນ ແລະເວລາຈຳເປັນໃນການປຶກສາຫາລືຕ່າງໆ. (4:18)

ໃນຂະນະທີ່ທຳງານຮ່ວມກັບໂປໂລຢູ່ນັ້ນ, ເອປາໂຟຣດີໂຕ ໄດ້ໄຂ້ຈົນເກືອບໃກ້ຈະຕາຍ. ໂປໂລຈຶ່ງໄດ້ສັ່ງລາວໃຫ້ກັບໄປເມືອງຟີລິບປອຍເສັຽ. ໂປໂລຍັງໄດ້ຂຽນຖ້ອຍຄຳແນະນຳໃນຈົດໝາຍວ່າ ຈົ່ງຕ້ອນຮັບເພິ່ນ

ໄວ້ດ້ວຍຄວາມຍິນດີ ແລະຍັງໃຫ້ນັບຖືຄົນທີ່ເຮັດຢ່າງດຽວກັບເພິ່ນດ້ວຍ. (2:29) ການທີ່ເພິ່ນໄຂ້ນັ້ນກໍຍ້ອນວ່າເພິ່ນເປັນຫ່ວງຄິດເຖິງພວກທ່ານຫລາຍ. (2:26) ເຫດທີ່ໂປໂລກ່າວເຊັ່ນນີ້ກໍເພາະວ່າບໍ່ຢາກໃຫ້ຄຣິສຕຽນຊາວເມືອງນັ້ນຫາວ່າເພິ່ນເປັນຄົນອ່ອນແອ.

ເຊັ່ນດຽວກັນກັບຕີໂມທຽວ ໂປໂລເອີ້ນ ເອປາໂຟຣດີໂຕ ວ່າ "ນ້ອງຊາຍ" "ເພື່ອນຮ່ວມງານ" ແລະ "ເພື່ອນທະຫານ" (2:25) ໃນຖານະທີ່ເປັນອ້າຍນ້ອງກັນ ເອປາໂຟຣດີໂຕ ໄດ້ແບ່ງປັນຄວາມສັມພັນດ້ານວິນຍານຈິດກັບໂປໂລ. ໃນຖານະເປັນເພື່ອນຮ່ວມງານ ເພິ່ນໄດ້ແບ່ງປັນການເຄື່ອນໄຫວການປ່າວປະກາດ. ໃນຖານະທີ່ເປັນເພື່ອນທະຫານ ເພິ່ນໄດ້ແບ່ງປັນຄວາມທໍລະຫົດອົດທົນຮ່ວມກັນເວລາປະເຊີນກັບບັນຫາ. ໂປໂລກ່າວວ່າ "*ເພາະເພິ່ນເກືອບຈະສິ້ນຊີວິດເສັຍ ເນື່ອງຈາກການປະຕິບັດງານຂອງພຣະຄຣິດ ຄືເພິ່ນໄດ້ສ່ຽງຊີວິດຂອງຕົນ*" (2:30) ໂປໂລຍັງໄດ້ເອີ້ນເພິ່ນອີກວ່າ "ຜູ້ຕາງໜ້າ" (Messenger) ຈາກໂບດເມືອງຟີລິບປອຍ. (2:25).

ຄັ້ງນຶ່ງນານມາແລ້ວ ສມັຍຂ້າພະເຈົ້າຖືກເອີ້ນໄປເປັນສິດຍາພິບານແຫ່ງນຶ່ງທີ່ຣັດ ຄາລີຟໍເນັຍ ຊາຍຄົນນຶ່ງໄດ້ເຂົ້າມາພົບຂ້າພະເຈົ້າໃນຫ້ອງການແລ້ວກໍກ່າວວ່າ: ອາຈານ, ຂ້ານ້ອຍເປັນຄົນທຸກຍາກ. ເງິນຄຳຂອງຂ້ານ້ອຍບໍ່ມີ. ການສຶກສາຂອງຂ້ານ້ອຍກໍຕ່ຳ ພາສາປາກເວົ້າກໍຢາກເປັນພາສາຕລາດ ແດ່ເດີ້. ເວລາລາວກ້າວຂາອອກຈາກຫ້ອງການແລ້ວເຮັດໃຫ້ຂ້າພະເຈົ້າຄິດວ່າລາວເປັນຜູ້ຖ່ອມໃຈ ແລະເວົ້າຄວາມສັດຊື່ແທ້ໆ. ແຕກຕ່າງຈາກຫລາຍຄົນທີ່ຂ້າພະເຈົ້າເຫັນຜ່ານມາ, ຕົວເອງມີຊັ້ນນ້ອຍກໍວ່າຕົວເອງມີຊັ້ນໃຫຍ່, ຕົວເອງບໍ່ມີການສຶກສາກໍວ່າມີການສຶກສາສູງ, ຕົວເອງຮັ່ງມີກໍວ່າຕົວເອງເປັນເສດຖີ.....

ກ່ອນທີ່ລາວຈະໄປລາວຍັງກ່າວອີກວ່າ ແຕ່ຂ້ານ້ອຍຍັງມີສິ່ງທີ່ຈະຖວາຍໃຫ້ກັບພຣະເຈົ້າຢູ່. ສິ່ງນັ້ນກໍຄືເຫື່ອແຮງຂອງຂ້ານ້ອຍເອງ. ວັນຕໍ່ວັນ, ເດືອນຕໍ່ເດືອນ, ເວລານ້ຳຮົ່ວລາວກໍແປງໃຫ້, ເວລານ້ຳຕັນກໍແມ່ນລາວເຮັດໃຫ້ມັນໄຫລ. ເວລາສຽງສາຍພານແອດັງກໍແມ່ນລາວເຮັດໃຫ້ມິດງຽບ. ຂ້າພະເຈົ້າພົບລາວເທື່ອສຸດທ້າຍ ໃນປີ1995. ລາວກ່າວກັບຂ້າພະເຈົ້າວ່າ ອາຈານດຽວນີ້ຂ້ານ້ອຍຂໍໂທດທີ່ເຮັດຫຍັງບໍ່ໄດ້ແລ້ວ. ສອງເດືອນຕໍ່ມາຂ້າພະເຈົ້າກໍໄດ້ຍິນຂ່າວວ່າ ລາວໄປຢູ່ກັບພຣະເຈົ້າແລ້ວ.

<u>ສຳລັບພວກເຮົາເດ?</u>

ທີ່ຈະປ່ຽນແປງຊີວິດເພື່ອພຣະຄຣິດນັ້ນ ກໍຄືການກ້າວໄປສູ່ການເປັນສາວົກທີ່ແທ້ຈິງ. ໃນທຸກໆບາດກ້າວຂອງປາກົດການ ທີ່ຈະສະແດງອອກໃຫ້ຄົນອື່ນເຫັນ ຈຳເປັນຕ້ອງແມ່ນຊີວິດຂອງພຣະເຢຊູຢ່າງທ່ອງແທ້. ອັນນີ້ ບໍ່ໄດ້ເວົ້າວ່າ ພວກເຮົາຄວນເປັນພຣະເຈົ້າດອກ ແຕ່ຂ້າພະເຈົ້າເຫັນຜ່ານມາເບິ່ງຊື່ຄືວ່າເປັນຄົນທີ່ມີຄຸນຄ່າລາຄາແທ້ໆ ແຕ່ວ່າການກະທຳແລະການເວົ້າຈາປາສັຍແລ້ວ ຍິ່ງຕ່ຳກວ່າເດັກນ້ອຍລ້ຽງຄວາຍຢູ່ໃນໂຄກໃນທາມ.

ສິ່ງສຳຄັນທີ່ສຸດກໍຄືວ່າ ເຮົາໄດ້ຮັບຫຍັງແລ້ວ ແລະເຮົາຄວນເຮັດຢ່າງໃດກັບສິ່ງທີ່ເຮົາໄດ້ຮັບນັ້ນ. ຈົ່ງສັດຊື່ຕໍ່ສິ່ງທີ່ເຮົາໄດ້ຮັບ, ຈົ່ງສັດຊື່ຕໍ່ໜ້າທີ່ຮັບຜິດຊອບ, ຈົ່ງສັດຊື່ໃນການຮັບໃຊ້. ການອິດສາບັງບຽດ ຢ່າໃຫ້ເກີດຂຶ້ນໃນຕົວຂອງເຮົາຢ່າງເດັດຂາດ.

<u>ຄຳຖາມ:</u>

1. ເພື່ອເສີມຂຍາຍການປະກາດພຣະກິດຕິຄຸນ ໃນໂຮງຮຽນ, ບ່ອນລ້ຽງເດັກ, ບ່ອນລ້ຽງອາຫານ ຫລືສະຖານທີ່ອື່ນໆ.. ເຮົາຕ້ອງປະລະສິ່ງໃດແດ່?

2. ຫລາຍຄົນຮູ້ຈັກດີແລ້ວວ່າ ໂປໂລເປັນຜູ້ຕິດຕາມພຣະເຢຊູ. ຕີໂມທຽວແລະເອປາໂຟຣດີໂຕ ຜູ້ຄົນຮູ້ຈັກໜ້ອຍ. ມີຄວາມສຳຄັນຢ່າງໃດໃນການທີ່ມີຜູ້ຄົນຮູ້ຈັກຫລາຍແລະມີອິດທິພົນ?

3. ເຮົາສາມາດບອກໄດ້ແດ່ບໍ່ວ່າ ມີສິ່ງໃດທີ່ເຮົາບໍ່ສາມາດແບ່ງປັນໄດ້? ແຕ່ວ່າເຮົາສາມາດໃຫ້ການຊ່ວຍເຫລືອໄດ້?

4. ຕໍ່ຜູ້ທີ່ບໍ່ມີຄວາມກ້າຫານທີ່ຈະເວົ້າເຣື່ອງພຣະເຢຊູ, ຍັງມີວຽກໃດແດ່ທີ່ເຂົາຈະສາມາດເຮັດໄດ້ໃນຄຣິສຕະຈັກ?

5. ຜູ້ທີ່ບໍ່ມີເງິນຖວາຍໃຫ້ກັບພຣະເຈົ້າ, ແຕ່ເຂົາຖວາຍການຮັບໃຊ້ດ້ວຍວິທີອື່ນ, ທ່ານມີຄວາມຄິດຢ່າງໃດ?

6. ທ່ານຄິດຢ່າງໃດກ່ຽວກັບແນວຄິດຂອງ ຜູ້ກຳຜະແນກສຶກສາ ທີ່ເຮົາເວົ້າຜ່ານມາ?

# ບົດຮຽນທີ 4
# ຮັກສາຈຸດຄວາມສົນໃຈໃນການຮູ້ເຖິງພຣະຄຣິດ

---

ຂໍ້ພຣະຄຳພີສຳລັບບົດຮຽນ: ຟີລິບປອຍ 3:2-14
ຂໍ້ພຣະຄຳພີສຳລັບເບື້ອງຫລັງ: ຟີລິບປອຍ 3:1-4:1
ຈຸດສຳຄັນຂອງບົດຮຽນນີ້: ໃຊ້ຊີວິດໃນທາງທີ່ດີເລີດ ຍົກພຣະຄຣິດໃຫ້ເປັນເຈົ້າແລະມີຊີວິດທີ່ສ້າງຕົນໃຫ້ຮູ້ເຖິງພຣະອົງຢ່າງຄົບບໍຣິບູນ.
ຄຳຖາມເພື່ອການສຳຫລວດ: ຖ້າຫາກທ່ານຢາກກ້າວໄປສູ່ເປົ້າຫມາຍຊີວິດຂອງທ່ານ, ທ່ານຢາກຈະໃຫ້ໄປຮອດຈຸດໃດ?
ຈຸດປະສົງຂອງບົດຮຽນນີ້: ມອບຊີວິດຂອງຂ້າພະເຈົ້າຍົກພຣະຄຣິດໃຫ້ເປັນເຈົ້າແລະມີຊີວິດທີ່ສ້າງຕົນໃຫ້ຮູ້ເຖິງພຣະອົງຢ່າງຄົບບໍຣິບູນ.

## ບົດຮຽນ

### ຄຳນຳ

ຮູ້ເຖິງພຣະຄຣິດແລະຈະເຣີນເຕີບໃຫຍ່ຢູ່ເລື້ອຍໆໃນຄວາມຮູ້ນັ້ນເປັນສິ່ງສຳຄັນທີ່ສຸດໃນຊີວິດ. ຄວາມລອດພົ້ນບໍ່ໄດ້ຢຸດຢູ່ທີ່ການກັບໃຈມາຮັບເອົາພຣະຄຣິດເທົ່ານັ້ນ, ແຕ່ຈະຕ້ອງເດີນກັບພຣະຄຣິດແລະກ້າວໄປສູ່ຄວາມບັນລຸຜົນຂອງຄວາມລອດພົ້ນ.

ໃນຖານະເປັນຄຣິສຕຽນ ບາງຄັ້ງພວກເຮົາກິນແຫນງໃຈໃນຄວາມຜິດພາດຂອງພວກເຮົາທີ່ໄດ້ກະທຳໄປ. ພວກເຮົາເນັ້ນຫນັກໃຫ້ສ່ວນບຸກຄົນເຫັນເຖິງຄວາມຈຳເປັນໃນການກັບໃຈໃຫມ່ ກັບລ່າວຕ່າວຄືນມາຫາພຣະຄຣິດແລະໄວ້ວາງໃຈເຊື່ອໃນພຣະອົງ. ພວກເຮົາເຊື້ອເຊີນທຸກຄົນດ້ວຍໃຈຮ້ອນຮົນໃຫ້ພວກເຂົາກັບເຂົ້າມາຫາພຣະຄຣິດເພື່ອໄດ້ຮັບການອະພັຍບາບ. ການຊັກຊວນຢ່າງນີ້ດີແລະຖືກຕ້ອງຢູ່ແລ້ວ. ຄວາມຜິດພາດນັ້ນກໍຄືວ່າເປັນການງ່າຍຫລາຍມາຢຸດໄວ້ຢູ່ຈຸດນີ້. ພວກເຮົາມາຈຳກັດຄວາມຫມາຍຂອງຄວາມລອດພົ້ນຢູ່ທີ່ວ່າ ປະສົບການໄດ້ຮັບຄວາມລອດພົ້ນເທົ່ານັ້ນ.

ເຖິງຢ່າງໃດກໍຕາມ ພຣະຄັມພີທີ່ພວກເຮົາຍອມຮັບວ່າມີອຳນາດເຫນືອພວກເຮົາຊຶ່ງຢູ່ໃຕ້ພຣະຄຣິດໄດ້ສອນພວກເຮົາວ່າ ປະສົບການຂອງການກັບໃຈຮັບເອົາພຣະຄຣິດເພື່ອຄວາມລອດພົ້ນ ເປັນພຽງແຕ່ການເລີ້ມຕົ້ນຂອງຄວາມລອດພົ້ນເທົ່ານັ້ນ. ພຣະທັມຂອງພຣະເຈົ້າໄດ້ສອນພວກເຮົາວ່າ ໃຫ້ພວກເຮົາເປັນຄຣິສຕຽນທີ່ມີຊີວິດພົວພັນໃຫ້ຮູ້ເຖິງພຣະຄຣິດຢ່າງຄົບບໍຣິບູນ. ເປົ້າຫມາຍຂອງພວກເຮົາໃນວັນນີ້ ຄື ໃຫ້ເຂົ້າໃຈຢ່າງຫນ້ອຍຄວາມຫມາຍຂອງຄວາມລອດພົ້ນແລະມອບຊີວິດຂອງພວກເຮົາໃຫ້ຕັດສິນໃຈວ່າ ນີ້ຄືເປົ້າຫມາຍໃນຊີວິດຂອງພວກເຮົາ. ພວກເຮົາໄດ້ຕັດສິນໃຈຢ່າງນີ້ເພາະວ່າພວກເຮົາເຊື່ອວ່າພຣະຄັມພີໄດ້ສອນຢ່າງນີ້ ເພາະນີ້ຄືທາງທີ່ດີເລີດແຫ່ງຊີວິດ.

### ຫມັ້ນໃຈໃນທາງຜິດ (3:2-6)

ກ່ອນໂປໂລກັບໃຈແລະຮັບເຊື່ອໃນອົງພຣະເຢຊູຄຣິດ, ລາວໄດ້ເພິ່ງແລະຫມັ້ນໃຈໃນກົດບັນຍັດທີ່ຕົກທອດມາ ເພື່ອໃຫ້ລາວເປັນຄົນຊອບທັມໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ. ລາວໄດ້ເຕືອນພີ່ນ້ອງຊາວຟີລິບປອຍ ເພື່ອບໍ່ໃຫ້ພວກເຂົາໄດ້ຫມັ້ນໃຈໃນທາງຜິດ.

ເປັນທີ່ຮັບຮູ້ກັນຢ່າງແຈ່ມແຈ້ງວ່າ ມີຄົນກຸ່ມນຶ່ງຢູ່ໃນເມືອງຟີລິບປອຍໄດ້ສັ່ງສອນປະຊາຊົນທີ່ຕິດຕາມພວກເຂົານັ້ນວ່າ ຜູ້ທີ່ຈະນະມັສການພຣະເຈົ້າຈະຕ້ອງຮັບພິທີຕັດ. ໃນຂໍ້ທີ 2 ຂໍ້ດຽວເທົ່ານັ້ນຂອງບົດທີ 3 ໂປໂລໄດ້ເອີ້ນພວກຄຣູສອນກຸ່ມນີ້ວ່າ "ພວກໝາ, ພວກຄົນທີ່ເຮັດຊົ່ວ, ແລະພວກຖືການປາດເນື້ອເຖືອໜັງ." ຄຳເວົ້າເຫລົ່ານີ້ເປັນຄຳເວົ້າໜັກ. ລາວໃຊ້ຄວາມຮຸນແຮງຕໍ່ພວກເຂົາ ເພາະວ່າພວກເຂົາເຫັນແກ່ແຕ່ຜົນປະໂຍດຂອງພວກເຂົາເທົ່ານັ້ນ. ອຸປະນິສັຍຂອງຄົນກຸ່ມນີ້ມີຈິດໃຈຄັບແຄບແລະບໍ່ຍອມຮັບຄວາມຄິດເຫັນຂອງຄົນອື່ນທັງສິ້ນ. ບໍ່ວ່າໃຜກໍຕາມຖ້າຫາກວ່າບໍ່ຢູ່ໃນກຸ່ມຂອງພວກເຂົາ ຜູ້ນັ້ນເປັນຜູ້ທີ່ເຊື່ອຜິດທັນທີ. ມີແຕ່ທາງຂອງພວກເຂົາເທົ່ານັ້ນທີ່ເຊື່ອຖືກ.

ເພື່ອເນັ້ນໃຫ້ເຫັນຈຸດຂອງລາວໜັກແໜ້ນກວ່າເກົ່າ ໂປໂລໄດ້ຊີ້ໃຫ້ເຫັນເຣື່ອງເຊື້ອສາຍຂອງລາວ. ພໍ່ແມ່ຂອງລາວບໍ່ພຽງແຕ່ສືບເຊື້ອສາຍມາຈາກອັບຣາຮາມເທົ່ານັ້ນ, ພວກເຂົາຍັງເປັນກະກຸນຂອງເບັນຢະມິນ ນຶ່ງໃນສິບສອງກະກຸນຂອງຊົນຊາດອິສຣາເອນອີກດ້ວຍ. ນອກເໜືອໄປຈາກນັ້ນແລ້ວ ພວກເຂົາໄດ້ປະຕິບັດຕາມພຣະບັນຍັດຢ່າງເຄັ່ງຄັດໂດຍໃຫ້ລາວຮັບພິທີຕັດຕາມກົດບັນຍັດ. ໃນທີ່ສຸດ ເມື່ອລາວເຕີບໂຕ ເພື່ອໃຫ້ຖືກຕ້ອງຕາມພຣະບັນຍັດລາວໄດ້ເຂົ້າໄປຢູ່ໃນຄະນະຂອງຟາຣີຊາຍ. ຝ່າຍກົງກັນຂ້າມກັບລາວໄດ້ບອກໃຫ້ຜູ້ຕິດຕາມວ່າ ເພື່ອໃຫ້ເປັນທີ່ຊອບພຣະທັຍຂອງອົງພຣະຜູ້ເປັນເຈົ້າ ພວກເຂົາຈະຕ້ອງປະຕິບັດຕາມກົດບັນຍັດ ຊຶ່ງລາວເອງເຄີຍປະຕິບັດມາແລ້ວ. ໃນດ້ານຄວາມຊອບທັມຊຶ່ງມີຢູ່ໃນພຣະບັນຍັດ ລາວບໍ່ມີທີ່ຕິຕຽນໄດ້, ແຕ່ວ່າ ເມື່ອມາທຽບກັບເຣື່ອງລາວຂອງການມາຮູ້ເຖິງພຣະຄຣິດແລ້ວເປັນທີ່ປຽບບໍ່ໄດ້ເລີຍ. ທີ່ສົນທະນາກັນຢູ່ນີ້ກໍຄືເຣື່ອງ ໝັ້ນໃຈໃນທາງຜິດ ເຊັ່ນການຖືກົດບັນຍັດແລະປະຕິບັດຕາມພິທີຕ່າງໆຈະບໍ່ໄດ້ຮັບສິດທີເຂົ້າມາຢືນຊ້ອງພຣະພັກຂອງອົງພຣະຜູ້ເປັນເຈົ້າ, ຫລືວ່າ ຈະເພິ່ງໃນຄວາມເຊື່ອທີ່ຕົກທອດມາຈາກພໍ່ຫລືແມ່ຂອງລາວກໍຈະບໍ່ພຽງພໍສຳລັບລາວເຊັ່ນກັນ.

ໃຫ້ສັງເກດຕໍ່ໄປອີກ ໂປໂລຊີ້ໃຫ້ເຫັນວ່າ ມີຈິດໃຈຄັບແຄບມັກແຍກເປັນກຸ່ມ (a narrow sectarian spirit) ມັກຈະສ້າງ
ຄວາມແຕກແຍກໃຫ້ກັບໄພ່ພົນຂອງພຣະເຈົ້າ, ແທນທີ່ຈະທ້ອນໂຮມກັນໃຫ້ເປັນອັນນຶ່ງອັນດຽວກັນພ້ອມໃຈກັນສາມັກຄີທັມ. ບໍ່ແມ່ນເປັນພຽງແຕ່ຄຣິສຕະຈັກຂອງເມືອງຟີລິບປອຍ ຄຣິສຕະຈັກດຽວເທົ່ານັ້ນທີ່ມີເຫດການ ການແຍກກຸ່ມຫລືແຍກຄະນະແລະໝັ້ນໃຈໃນທາງຜິດ. ກິຣິຍາທ່າທີແລະການປະພຶດຢ່າງນີ້ມີຢູ່ໃນສມັຍນີ້. ຂ້າພະເຈົ້າຂໍຍົກຕົວຢ່າງ.

ບາງຄົນເພິ່ງໃນຜົນບຸນຂອງພໍ່ຫລືແມ່ທີ່ກະທຳໄວ້. ພໍ່ແລະແມ່ຂອງໂປໂລໄດ້ລ້ຽງດູສັ່ງສອນລາວໃຫ້ເຕີບໃຫຍ່ຢູ່ໃຕ້ກົດບັນຍັດ, ແຕ່ລາວກັບກ່າວວ່າການປະຕິບັດຕາມທີ່ຕົກທອດມານັ້ນຍັງບໍ່ພຽງພໍເທື່ອ. ມີພໍ່ແລະແມ່ເປັນຜູ້ຢຳເກງແລະສັດທາໃນທາງສາສນາຈະບໍ່ເປັນທີ່ພຽງພໍສຳລັບລູກຂອງພວກເພິ່ນ. ມີພໍ່ແລະແມ່ເປັນຜູ້ສັດທານັ້ນ ກໍເປັນທີ່ປາຖນາຢ່າງແຮງກ້າ, ແຕ່ກໍຍັງບໍ່ພຽງພໍ. ປະຕິບັດຕາມກົດລະບຽບຕ່າງໆທາງສາສນາຈະບໍ່ພຽງພໍທີ່ຈະເປັນທີ່ຊອບພຣະທັຍຂອງອົງພຣະຜູ້ເປັນເຈົ້າ. ການໄປຄຣິສຕະຈັກ, ການຖວາຍຕາມສັນຍາ, ຮັບໃຊ້ເປັນຄະນະກັມມະການຕ່າງໆ - ກິຈການເຫລົ່ານີ້ກໍດີແທ້ ແຕ່ບໍ່ສາມາດເຮັດໃຫ້ພຣະເຈົ້າຮັກເຮົາຫລາຍກວ່າຮັກຄົນອື່ນໄດ້. ທ້າຍສຸດນີ້ ຖ້າຈະຮຽກຮ້ອງໃຫ້ທຸກໆຄົນເຫັນພ້ອມກັບຄວາມຄິດເຫັນຂອງເຮົາເອງທຸກຢ່າງກໍຈະເປັນເຫດໃຫ້ເກີດຄວາມຂັດແຍ່ງຖ້າມກາງອ້າຍເອື້ອຍນ້ອງໃນພຣະຄຣິດ.

<u>ຄວາມລອດພົ້ນອັນສົມບູນແບບ</u> (3:7-11)
ໂປໂລໄດ້ບັນລະຍາຍໃຫ້ເຫັນດັ່ງນີ້ ຄວາມຊອບທັມຈະພົບໄດ້ໂດຍຄວາມໄວ້ວາງໃຈເຊື່ອໃນພຣະຄຣິດ. ຄວາມລອດພົ້ນດັ່ງກ່າວນີ້ຈະເຮັດໃຫ້ບໍ່ມີຄວາມຮູ້ສຶກວ່າມີຄວາມຜິດຕໍ່ກົດບັນຍັດ. ແທນທີ່ຈະເປັນຜູ້ທີ່ມີຄວາມຮູ້ສຶກວ່າຕົນເປັນຄົນເຮັດຜິດ ຄວາມລອດພົ້ນເປັນຜົນສະທ້ອນໃຫ້ທຸກໆດ້ານຂອງຊີວິດ. ໃຫ້ສັງເກດເບິ່ງວ່າ ໂປໂລໄດ້ພັນລະນາຊີວິດຂອງລາວ

ຢູ່ໃນພຣະຄຣິດ.

ປະການທີນຶ່ງ ໂປໂລມີຄວາມຮູ້ສຶກວ່າລາວມີຄຸນຄ່າຂອງຊີວິດອັນໃໝ່. ສິ່ງໃດທີ່ເຄີຍເປັນຄຸນປະໂຍດແກ່ລາວ ລາວຖືສິ່ງເຫລົ່ານັ້ນເປັນອັນ "ໄຮ້ປະໂຍດ" (3:7) ແລະ "ຂີ້ເຫຍື້ອ" (3:8). ລາວປະກາດວ່າ ບໍ່ມີສິ່ງໃດເລີຍຈະມີຄຸນຄ່າ ເທົ່າກັບຮູ້ເຖິງພຣະຄຣິດ. ບໍ່ພຽງແຕ່ການປະຕິບັດຕາມສິ່ງທີ່ຕົກທອດມາຈາກບັນພະບຸຣຸດເທົ່ານັ້ນໄຮ້ປະໂຍດ ທຸກສິ່ງທີ່ໂລກນີ້ສເນີໃຫ້ກໍໄຮ້ຄຸນຄ່າເຊັ່ນກັນ. ໂປໂລຮ້ອງສິ່ງຂອງຈາກໂລກນີ້ວ່າ "ຂີ້ເຫຍື້ອ" (3:8). ຄຳວ່າ "ຂີ້ເຫຍື່ອ" (rubbish) ມີຄວາມໝາຍວ່າເສດອາຫານແລະບໍ່ເໝາະຈະເອົາມາຮັບປະທານອີກ. ການມາຮູ້ເຖິງພຣະຄຣິດມີຄຸນປະໂຍດຫລາຍກວ່າສາຣະພັດສິ່ງທີ່ໂລກນີ້ຍົກໃຫ້.

ປະການທີສອງ ໂປໂລມີເປົ້າໝາຍໃໝ່. ຄຸນຄ່າໃໝ່ເຕີບໃຫຍ່ຈາກເປົ້າໝາຍໃໝ່ໃນຊີວິດຂອງລາວ. ເປົ້າໝາຍດັ່ງກ່າວ ຄື ການຮູ້ເຖິງພຣະເຢຊູຄຣິດແລະເປັນເໝືອນພຣະອົງ. ແທນທີ່ລາວຈະຮູ້<u>ກ່ຽວກັບ</u> (know about Christ) ພຣະຄຣິດ, ແຕ່ລາວຢາກຈະ<u>ຮູ້ເຖິງ</u> (know Christ) ພຣະຄຣິດ. ຂ້າພະເຈົ້າຂໍອະທິບາຍ.
ຂ້າພະເຈົ້າຮູ້ຈັກກັບຄົນຜູ້ນຶ່ງ
ລາວມັກອ່ານແລະຮຽນຮູ້ປະວັດຊີວິດຂອງທ່ານນາຍພົນ ຈໍເຈີ ແພເຕີນ (George Patton).
ທ່ານເປັນວິຣະບຸຣຸດໃນສົງ
ຄາມໂລກຄັ້ງທີສອງ. ຄົນຜູ້ນີ້ສາມາດບອກທ່ານວັນເດືອນປີເກີດແລະວັນເສັຽຊີວິດຂອງທ່ານນາຍພົນຜູ້ນັ້ນ. ລາວຮູ້ຈັກວ່າ ທ່ານນາຍພົນມີຄວາມສູງແລະນ້ຳໜັກຫລາຍປານໃດ, ຜົມແລະຕາຂອງທ່ານມີສີອັນໃດ. ລາວຍັງສາມາດບອກທ່ານອີກດ້ວຍວ່າ ທ່ານນາຍພົນມັກອ່ານໜັງສືປະເພດໃດ ແລະສູບຢາປະເພດໃດ. ແຕ່ລາວບໍ່ເຄີຍໄດ້ພົບນາຍພົນຜູ້ນັ້ນດ້ວຍຕົວລາວເອງເລີຍໃນຊີວິດຂອງລາວ. ລາວຮູ້ກ່ຽວກັບທ່ານນາຍພົນ, ແຕ່ວ່າລາວບໍ່ໄດ້ຮູ້ເຖິງທ່ານນາຍພົນ. ໂປໂລຢາກຈະມີປະສົບການແຕ່ລະວັນກັບພຣະເຢຊູຄຣິດ, ລາວຢາກຈະຮູ້ເຖິງພຣະອົງ, ແລະເຊື່ອຟັງພຣະອົງ. ຈາກການກະທຳຢ່າງນີ້ແຫລະ ລາວຢາກເປັນເໝືອນພຣະຄຣິດ.

ປະການທີສາມ ໂປໂລເຂົ້າໃຈທາງທີ່ຈະບັນລຸຄວາມຊອບທັມ, ອ້າງອີງເຖິງມີຄວາມສັມພັນອັນຖືກຕ້ອງກັບພຣະເຈົ້າ. ແຕ່ກ່ອນ ລາວຊອກສແວງຫາຄວາມສັມພັນດັ່ງກ່າວນັ້ນ ໂດຍຮັກສາວິນັຍ, ກົດລະບຽບ, ແລະປະກອບພິທີຕ່າງໆ. ໃນຖານະລາວຢູ່ໃນຄະນະຂອງຟາຣີຊາຍ ລາວຈະຕ້ອງປະຕິບັດຕາມກົດລະບຽບຕ່າງຢ່າງເຄັ່ງຄັດ ຊຶ່ງເປັນທີ່ປາກົດໃນສາຍຕາຂອງມະນຸດວ່າ ນັ້ນຄືພຣະປະສົງຂອງອົງພຣະຜູ້ເປັນເຈົ້າສຳລັບມະນຸດທັງຫລາຍ. ໃນປະຈຸບັນນີ້ ລາວຮູ້ຢ່າງຄັກແນ່ວ່າການມີຄວາມສັມພັນອັນຖືກຕ້ອງກັບອົງພຣະຜູ້ເປັນເຈົ້ານັ້ນ ແມ່ນໄວ້ວາງໃຈເຊື່ອໃນພຣະຄຣິດ.

ປະການທີສີ່ ໂປໂລມີຄວາມຫວັງໃໝ່ຈາກການເປັນຂຶ້ນມາຈາກຕາຍໃນວາຣະສຸດທ້າຍ. ລາວຕ້ອງການຈະຮູ້ຈັກຣິດອຳນາດອັນປາກົດໃນການຄືນພຣະຊົນຂອງພຣະເຢຊູ. ໃຫ້ສັງເກດຄວາມເວົ້າຂອງລາວອີກວ່າ "ຖ້າເປັນໄປໄດ້" ໝາຍຄວາມວ່າ ລາວມີຄວາມຫວັງຢ່າງແຮງກ້າຢາກເປັນຂຶ້ນມາຈາກຕາຍດ້ວຍ (3:11). ການເປັນຂຶ້ນມາຈາກຕາຍເປັນໄຊຊະນະຂອງຄຣິສຕຽນໃນວາລະສຸດທ້າຍ. ໂດຍຣິດອຳນາດດັ່ງກ່າວຈຶ່ງປະທານຄວາມຫວັງໃຫ້ຄຣິສຕຽນທຸກຄົນຢູ່ໃນໂລກນີ້ຢ່າງມີໄຊຕໍ່ອຸປະສັກແລະຄວາມລຳບາກຕ່າງໆ.

ໃນຈຸດນີ້ ກິຣິຍາທ່າທີຂອງໂປໂລຕ່າງໄປຈາກ ນາງເປກກີ (Peggy). ນາງເຄີຍຕອບຮັບ ການເຊື້ອເຊີນຈາກຜູ້ປະກາດຂ່າວປະເສີດ ໃນເມື່ອນາງຍັງເປັນເດັກ. ນາງໄດ້ຮັບບັບຕິສະມາແລະຫ້າວຫັນໃນກິຈການຕ່າງໆຂອງໂບດ. ເມື່ອນາງໃຫຍ່ແລ້ວ ແລະໄດ້ແຕ່ງງານ ຫລັງຈາກນັ້ນ ນາງບໍ່ມີຄວາມສົນໃຈໃນເຣື່ອງຂອງຄຣິສຕະສາສນາອີກຕໍ່ໄປ. ນາງບໍ່ໄປໂບດ ບໍ່ອ້ອນວອນອີກຈັກເທື່ອ (ຍົກເວັ້ນເມື່ອນາງປະເຊີນກັບບັນຫາສຸກເສີນ) ບໍ່ເຄີຍອ່ານພຣະຄັມພີ. ເມື່ອຖາມເຖິງ

ເຣື່ອງຄວາມຫວັງຊີວິດອັນຕລອດໄປເປັນນິດ ນາງກໍຈະຕອບດ້ວຍກິຣິຍາທ່າທີ່ບໍ່ສຸພາບວ່າແຕ່ຍັງນ້ອຍນາງໄດ້ຮັບເຊື່ອແລ້ວແລະນາງຈະບໍ່ຫລົງເສັຽອີກຈັກເທື່ອ.
ເຖິງຢ່າງໃດກໍຕາມ ໂປໂລບໍ່ເຄີຍທຳສິ່ງໃດຕາມໃຈຊອບຂອງລາວ ເຖິງແມ່ນວ່າ ລາວໄດ້ຮັບຄວາມລອດພົ້ນແລ້ວ.

ຄຳເຕືອນທີ່ຈຳເປັນ (3:12-14)
ໂປໂລໄດ້ເຕືອນຜູ້ທີ່ເຊື່ອວ່າພວກເຂົາເປັນຜູ້ທີ່ໄດ້ຮັບແລ້ວ ຫລືວ່າເຖິງທີ່ສຳເຣັດແລ້ວ. ເພື່ອໃຫ້ເຖິງທີ່ສຳເຣັດນັ້ນເປັນເປົ້າໝາຍຂອງພວກເຮົາທຸກໆຄົນ ແຕ່ວ່າຄວາມສຳເຣັດນັ້ນຢູ່ເໜືອກຳລັງຂອງພວກເຮົາຢູ່ສເມີ. ເພື່ອຊີ້ໃຫ້ເຫັນຈຸດຂອງລາວ ລາວໄດ້ສເນີໃຫ້ເຫັນມູນຄວາມຈິງຫລາຍຢ່າງ.

ຂໍ້ມູນທີນຶ່ງ, ບໍ່ໃຊ່ວ່າໂປໂລໄດ້ຮັບແລ້ວ ຫລືວ່າເຖິງທີ່ສຳເຣັດແລ້ວ. ເຖິງແມ່ນວ່າ ລາວໃຊ້ເວລາຫລາຍປີຍຶດໝັ້ນຢູ່ໃນເປົ້າໝາຍ ແລະປັດຈຸບັນນີ້ລາວຢູ່ໃນຄຸກ ກໍເພື່ອໃຫ້ເປັນໄປຕາມຄວາມພຍາຍາມຂອງລາວ, ຍັງມີຫລາຍປະການຈົນກວ່າລາວຈະໄດ້ຮັບຄວາມສຳເຣັດ.

ຂໍ້ມູນທີສອງ, ຄວາມດີທີ່ໄດ້ກະທຳມານັ້ນ ບໍ່ພຽງພໍທີ່ຈະຊ່ອຍໂປໂລໃຫ້ມີປະສົບການກັບພຣະຄຣິດໃນປະຈຸບັນ, ແລະຄວາມຜິດພາດທີ່ໄດ້ກະທຳມາ ກໍບໍ່ສາມາດຈະທຳຮ້າຍລາວບໍ່ໃຫ້ມາຮັບເອົາປະສົບການກັບພຣະຄຣິດໃນປະຈຸບັນເຊັ່ນກັນ. ແຕ່ລາວໄດ້ລືມສິ່ງທີ່ຜ່ານພົ້ນໄປເສັຽແລະໂນ້ມຕົວອອກໄປຫາສິ່ງທັງຫລາຍທີ່ຢູ່ເບື້ອງໜ້າ.

ລາວໄດ້ອົດສາພຍາຍາມມຸ້ງໜ້າໄປເພື່ອໃຫ້ເຖິງທີ່ສຳເຣັດ. ຫລັກຊັຍທີ່ລາວພຍາຍາມໄປໃຫ້ເຖິງນີ້ກໍຍັງຢູ່ເໜືອທີ່ລາວຈະຄວ້າເຖິງ.

ທ້າຍສຸດນີ້ ໂປໂລບາກບັ່ນມຸ້ງຫວັງເອົານັ້ນ ຄື ການຮູ້ເຖິງພຣະຄຣິດແລະມີຊີວິດເໝືອນກັບພຣະອົງ ເປັນລາງວັນຊີວິດຊຶ່ງພຣະເຈົ້າໄດ້ຊົງເອີ້ນເອົາໃນພຣະເຢຊູຄຣິດ ໃຫ້ໄປຮັບຢູ່ເບື້ອງເທິງ.

ທ່ານແຊມ ສະນິດ (Sam Snead) ນັບວ່າເປັນນັກຕີກ໋ອບອັນດັບໂລກມາກ່ອນ (golfer) ຈາກຊີວິດປະສົບການຂອງລາວໄດ້ສະແດງໃຫ້ເຫັນວ່າ ດ້ວຍເຫດໃດລາວຈຶ່ງສາມາດກ້າວໄປຈົນເຖິງທີ່ສູງສຸດ. ຫລັງຈາກທ່ານ ແຊມໄດ້ຮັບຊັຍຊະນະຈາກການແຂ່ງຂັນ. ຕອນເຊົ້າຂອງມື້ຕໍ່ມາ ນັກຂ່າວໜັງສືພິມຕ້ອງການຈະສຳພາດລາວ. ພວກເຂົານຳໄປຫາ ແລະພົບເຫັນລາວກຳລັງຝຶກຊ້ອມຢູ່ສນາມຕີກ໋ອບ ລາວກ່າວຕໍ່ພວກນັກຂ່າວນັ້ນວ່າ ຂ້ອຍຄວນຈະຫລິ້ນດີກວ່ານີ້ແລະຂ້ອຍຫວັງວ່າຈະຫລິ້ນໃຫ້ດີກວ່ານີ້ໃນໂອກາດໜ້າ. ນີ້ແຫລະຄືກິຣິຍາທ່າທີຂອງໂປໂລ ລາວອົດສາບາກບັ່ນໃນປະສົບການ ການເປັນຄຣິສຕຽນ.

ຄຳຖາມ

1. ເປົ້າໝາຍອັນໃດທີ່ບໍ່ມີຄຸນຄ່າໃນຊີວິດ? ເປົ້າໝາຍອັນໃດທີ່ມີຄຸນຄ່າໃນຊີວິດ?
2. ເປັນຫຍັງມີຊີວິດໃນທາງທີ່ດີເລີດ ຍົກພຣະຄຣິດໃຫ້ເປັນເຈົ້າແລະມີຊີວິດທີ່ສ້າງຕົນໃຫ້ຮູ້ເຖິງພຣະອົງຢ່າງຄົບບໍຣິບູນຈຶ່ງເປັນເປົ້າໝາຍອັນດີເລີດໃນຊີວິດ?
3. ມີສິ່ງໃດແດ່ເປັນສິ່ງທີ່ກີດກັ້ນບໍ່ໃຫ້ຮູ້ເຖິງພຣະຄຣິດຢ່າງຄົບບໍຣິບູນ?
4. ທາງຄຣິສຕະຈັກຈະຊ່ອຍໜູນໃຈສະມາຊິກໃຫ້ມີຊີວິດທີ່ສ້າງຕົນໃຫ້ຮູ້ເຖິງພຣະຄຣິດຢ່າງຄົບບໍຣິບູນ ແລະມີປະສົບການ ໃນຣິດອຳນາດການຄືນພຣະຊົນຂອງພຣະຄຣິດໄດ້ຢ່າງໃດ?

# ບົດຮຽນທີ 5
# ຊີວິດທີ່ມີຄວາມຊື່ນຊື່ນຍິນດີອັນແທ້ຈິງ

---

| | |
|---|---|
| ຂໍ້ພຣະຄໍາພີສໍາລັບບົດຮຽນ: | ຟີລິບປອຍ 4:2-19 |
| ຂໍ້ພຣະຄໍາພີສໍາລັບເບື້ອງຫລັງ: | ຟີລິບປອຍ 4:2-23 |
| ຈຸດສໍາຄັນຂອງບົດຮຽນນີ້: | ຊີວິດທີ່ມີຄວາມຊື່ນຊື່ນຍິນດີອັນແທ້ຈິງແລະພໍໃຈໃນສິ່ງທີ່ຕົນມີຢູ່ ບໍ່ໄດ້ມາຈາກສິ່ງແວດລ້ອມພາຍນອກ ແຕ່ມາຈາກຄວາມໄວ້ວາງໃຈເຊື່ອໃນອົງພຣະຜູ້ເປັນເຈົ້າ. |
| ຄໍາຖາມເພື່ອການສໍາຫລວດ: | ແມ່ນຫຍັງທີ່ນໍາຄວາມຊື່ນຊື່ນຍິນດີອັນແທ້ຈິງມາໃຫ້? |
| ຈຸດປະສົງຂອງບົດຮຽນນີ້: | ຕັດສິນໃຈນໍາມາປະຕິບັດຕາມຄວາມໄວ້ວາງໃຈເຊື່ອທີ່ທ່ານມີ ຢ່າງໜ້ອຍ ທ່ານກໍຈະໄດ້ຮັບຄວາມຊື່ນຊື່ນຍິນດີອັນແທ້ຈິງໃນຊີວິດ. |

## ບົດຮຽນ

### ຄໍານໍາ
ຄຣິສຕຽນຄວນຈະມີຄວາມຊື່ນຊື່ນຍິນດີໃນຊີວິດຂອງພວກເຂົາ. ຄວາມຊື່ນຊື່ນຍິນດີອັນແທ້ຈິງບໍ່ໄດ້ມາຈາກສິ່ງແວດລ້ອມພາຍນອກ ແຕ່ແທ້ຈິງແລ້ວ ແມ່ນປະຕິບັດຕາມຄວາມໄວ້ວາງໃຈເຊື່ອໃນອົງພຣະເຢຊູຄຣິດເຈົ້າ.

### ຊີວິດທີ່ປະກອບດ້ວຍຄວາມຊື່ນຊື່ນຍິນດີຈາກການທົບທວນຄວາມຈໍາ (4:2-5)
ໃນຂນະທີ່ພວກເຮົາສຶກສາພຣະທັມດັ່ງຕໍ່ໄປນີ້, ມີຫລາຍຢ່າງເປັນທີ່ປະສົບຕາແກ່ພວກເຮົາ. ປະການທີ່ນຶ່ງ ພຣະທັມໄດ້ໃຫ້ຄວາມແຈ່ມແຈ້ງວ່າ ຄຣິສຕຽນຄວນຈະ "ຊື່ນຊື່ນຍິນດີ ... ທຸກເວລາ" (4:4). ບໍ່ແມ່ນວ່າ ພວກເຮົາຊື່ນຊື່ນຍິນດີແຕ່ຍາມເມື່ອຊີວິດຂອງພວກເຮົາລຸ່ງວງດີ. ພຣະທັມຕອນນີ້ໄດ້ບົ່ງບອກໃຫ້ພວກເຮົາ "ຊື່ນຊື່ນຍິນດີ ... ທຸກເວລາ." ແຕ່ໃຫ້ສັງເກດວ່າ ຈົ່ງຊື່ນຊື່ນຍິນດີ "ໃນພຣະເຈົ້າ" (4:4). ຄວາມຊື່ນຊື່ນຍິນດີທີ່ພວກເຮົາພົບນັ້ນແມ່ນໃນການຕິດສນິດໃນຄວາມສາມັກຄີທັມກັບພຣະຜູ້ເປັນເຈົ້າແລະພວກເຮົາໄດ້ເພິ່ງໃນຣິດອໍານາດແລະພຣະຄຸນຂອງພຣະອົງ.

ປະການທີສອງ ພວກເຮົາຖືກເອີ້ນໃຫ້ມີ "ໃຈອ່ອນສຸພາບ ... ປາກົດແກ່ຄົນທັງປວງ" ທີ່ຢູ່ອ້ອມຂ້າງອ້ອມແອວຂອງພວກເຮົາ (4:5). ຄໍາວ່າ "ອ່ອນສຸພາບ" ມີຄວາມໝາຍກວ້າງຫລາຍ. ຄໍານີ້ມີຄວາມໝາຍ ເຊັ່ນ ຄວາມອົດທົນ ແລະ ໄມຕຣີຈິດ.

ຕໍ່ມາ ພຣະທັມຕອນນີ້ຍັງໄດ້ເຕືອນພວກເຮົາອີກວ່າ "ອົງພຣະຜູ້ເປັນເຈົ້າຊົງຢູ່ໃກ້ແລ້ວ" (4:5). ສາສນາຈານບາງທ່ານກໍໃຫ້ຄວາມເຫັນວ່າພຣະຄຣິດຈວນຈະສະເດັດມາ. ບາງທ່ານກໍໃຫ້ຄວາມເຫັນວ່າ ພຣະອົງຈະບໍ່ສະເດັດມາໃນໄວໆ ນີ້ເທື່ອພວກເພິ່ນອະທິບາຍວ່າ ໂປໂລຍັງມີແຜນການຈະເດີນທາງ ແລະລາວຍັງກ່າວເຖິງໂອກາດທີ່ລາວຈະຖືກນໍາໄປປະຫານອີກດ້ວຍ. ສະນັ້ນ ພວກເພິ່ນຈຶ່ງໄດ້ຕັດຄວາມເຫັນນັ້ນອອກ. ແທນທີ່ຈະເນັ້ນເຖິງເຣື່ອງການສະເດັດມາໃນໄວໆນີ້ ພວກເພິ່ນໄດ້ສລຸບຄວາມໄປວ່າ ພຣະທັມຕອນນີ້ໄດ້ເຕືອນໃຫ້ຈົດຈໍາສເມີວ່າ ຄຣິສຕຽນຈະຕ້ອງໃຊ້ຊີວິດຢູ່ໃນພຣະເຈົ້າຊຶ່ງພຣະອົງຊົງສະຖິດຢູ່ນໍາຕລອດເວລາ.

ຊາວຟີລິບປອຍມີຄວາມລໍາບາກໃນຂນະນັ້ນ. ພວກເຂົາມີຄວາມແຕກແຍກກັນລະຫວ່າງຜູ້ຍິງສອງຄົນຊຶ່ງເປັນເຫດໃຫ້

ກະທົບກະເທືອນການເປັນເອກພາບໃນຄຣິສຕະຈັກ (4:2). ອີກປະການນຶ່ງ ພວກຄຣູສອນປອມໄດ້ເຮັດໃຫ້ຜູ້ທີ່ມີຄວາມເຊື່ອສັບສົນວຸ້ນວາຍ (3:2). ບໍ່ພຽງທໍ່ນັ້ນພວກເຂົາຖືກຂົ່ມເຫງຈາກຄົນທີ່ບໍ່ມີຄວາມເຊື່ອໃນສັງຄົມທີ່ພວກເຂົາອາສັຍຢູ່ນັ້ນອີກດ້ວຍ (1:29). ຢູ່ໃຕ້ສິ່ງແວດລ້ອມຢ່າງນີ້ ໂປໂລໄດ້ຮຽກຮ້ອງໃຫ້ພວກເຂົາມີຄວາມອົດທົນແລະໃຫ້ມີໄມຕຣີຈິດຕໍ່ຄົນເຫລົ່ານັ້ນ, ໃຫ້ຈໍາໄວ້ວ່າພວກເຂົາຈະຕ້ອງໃຊ້ຊີວິດຢູ່ໃນພຣະເຈົ້າ ຊຶ່ງພຣະອົງຊົງສະຖິດຢູ່ນໍາຕລອດເວລາ. ດ້ວຍຄວາມສູ້ທົນຕໍ່ສິ່ງແວດລ້ອມທີ່ໄດ້ກ່າວມານີ້ ໂປໂລໃຫ້ຄໍາຊີ້ນໍາວ່າ "ຈົ່ງຊົມຊື່ນຍິນດີ ... ທຸກເວລາ" (4:4). ຄວາມຊົມຊື່ນຍິນດີທີ່ລາວກ່າວມານັ້ນກໍເຫັນໄດ້ຢ່າງແຈ່ມແຈ້ງ ບໍ່ແມ່ນຄວາມເບີກບານໃຈ. ແຕ່ແມ່ນສັນຕິສຸກແລະມີຄວາມພໍໃຈ, ຮູ້ວ່າຊີວິດຂອງພວກເຮົານັ້ນຢູ່ໃຕ້ການເບິ່ງແຍງດ້ວຍຄວາມຮັກຂອງອົງພຣະຜູ້ເປັນເຈົ້າ. ຄວາມເຊື່ອໝັ້ນຢ່າງນີ້ໄດ້ເອົາຊະນະຄວາມຄຽດແຄ້ນທຸກຢ່າງທີ່ມີຕໍ່ຜູ້ທີ່ຂັດແຍ່ງກັບພວກເຂົາ.

<u>ຊີວິດທີ່ປະກອບດ້ວຍຄວາມຊົມຊື່ນຍິນດີຈາກການອ້ອນວອນ</u> (4:6-7)

ໃນຂໍ້ທີ 6ໄດ້ມີການຂໍຮ້ອງໃຫ້ຄຣິສຕຽນເມືອງຟີລິບປອຍກະທໍາສອງຢ່າງ. ອັນທີນຶ່ງ "ຢ່າໄດ້ທຸກຮ້ອນໃຈດ້ວຍສິ່ງໃດເລີຍ." ອັນທີສອງ ໃຫ້ອ້ອນວອນ. ການອ້ອນວອນທີ່ໂປໂລໄດ້ກ່າວເຖິງນັ້ນ ລາວໃຊ້ຄໍາເວົ້າສອງຄໍາທີ່ແຍກອອກຈາກກັນ. ຄໍາທີນຶ່ງແມ່ນການນະມັສການ ຫລືວ່າເຂົ້າມາຊ້ອງພຣະພັກຂອງອົງພຣະຜູ້ເປັນເຈົ້າ. ຄໍານີ້ໄດ້ປາກົດໃຫ້ເຫັນເຖິງກິຣິຍາທ່າທີ ຫລືວ່າ ທັສນະຄະຕິ. ຄໍາຕໍ່ໄປນັ້ນ ແມ່ນການທູນຂໍ. ການອ້ອນວອນຈະຕ້ອງສະແດງອອກມີທັສນະຄະຕິດ້ວຍການຂອບພຣະຄຸນ.

ຜົນຈາກພຣະສັນຍາທີ່ໄດ້ຮັບນັ້ນ ພວກເຮົາຈະໄດ້ຮັບສັນຕິສຸກອັນມາແຕ່ພຣະເຈົ້າ ຊຶ່ງເກີນຄວາມເຂົ້າໃຈຂອງພວກເຮົາ. ນອກເໜືອໄປຈາກນັ້ນ ພວກເຮົາໄດ້ຮັບພຣະສັນຍາວ່າ ສັນຕິສຸກອັນມາແຕ່ພຣະເຈົ້າ "ຈະເຝົ້າຮັກສາ" ຈິດໃຈແລະຄວາມຄິດຂອງພວກເຮົາໄວ້ (4:7). "ຈິດໃຈ" ແມ່ນກ່າວເຖິງຄວາມຮູ້ສຶກ ແລະ "ຄວາມຄິດ" ແມ່ນກ່ຽວກັບສະຕິປັນຍາ. ຈາກພຣະສັນຍາຂອງພຣະອົງວ່າພວກເຮົາຈະໄດ້ຮັບສັນຕິສຸກອັນມາແຕ່ພຣະເຈົ້າດ້ວຍການອ້ອນວອນ, ສັນຕິສຸກນັ້ນ ຈະປົກປັກຮັກສາຄວາມຮູ້ສຶກແລະສະຕິປັນຍາຈາກຄວາມທຸກຮ້ອນທຸກຢ່າງ.

ຢ່າທຸກຮ້ອນໃຈບໍ່ໄດ້ໝາຍຄວາມວ່າບໍ່ຫ່ວງຟ້າຫ່ວງຝົນອັນໃດເລີຍ. ພວກເຮົາຄວນຈະຕ້ອງເອົາໃຈໃສ່ໃນວຽກງານ. ຢ່າທຸກຮ້ອນໃຈໝາຍຄວາມວ່າ ບໍ່ຄວນຈະຢ້ານໃນເຫດການ. ຊີວິດທີ່ມີຄວາມຮູ້ສຶກສົນລະວົນໄດ້ນໍາຄວາມທຸກຮ້ອນໃຈມາສູ່ຈິດໃຈ ເນື່ອງຈາກວ່າມີຄວາມສົງສັຍໃນຄຸນຄວາມດີແລະຄວາມສາມາດຂອງພຣະເຈົ້າທີ່ພຣະອົງຊົງປະທານຄວາມຕ້ອງການໃຫ້ພວກເຮົາຢູ່ສເມີ.

ຫລາຍປີຜ່ານມາ ມີຄົນຜູ້ນຶ່ງໄດ້ມາຫາຂ້າພະເຈົ້າ ລາວຕ້ອງການຄໍາປຶກສາຍ້ອນວ່າ ລາວມີຄວາມກັງວົນຫລາຍ ແລະມີຄວາມຢ້ານ. ລາວນອນບໍ່ຫລັບ ລາວຍັງມີອາການແໜ້ນໃນທ້ອງ ແລະອາການອື່ນໆອີກເປັນຜົນສະທ້ອນມາຈາກຄວາມກັງວົນ. ລາວໄດ້ບັນລະຍາຍວ່າ ຄວາມກັງວົນເປັນຜົນສະທ້ອນຝ່າຍຮ່າງກາຍຂອງລາວ ຄວາມຮູ້ສຶກແລະທາງຈິດວິນຍານຂອງລາວອີກດ້ວຍ. ຫລັງຈາກລາວໄດ້ບັນລະຍາຍເຫດການຂອງລາວແລ້ວ ຂ້າພະເຈົ້າຖາມລາວວ່າເປັນດ້ວຍເຫດໃດລາວຈຶ່ງກັງວົນແທ້. ຄັ້ງແລກ ຄໍາຕອບຂອງລາວຮູ້ສຶກວ່າສັບສົນຫລາຍ. ລາວກ່າວຕໍ່ໄປວ່າ ບໍ່ມີເຫດຜົນຫຍັງເລີຍໃນສິ່ງທີ່ລາວຄວນຈະເປັນຫ່ວງແລະກັງວົນ. ລາວໄດ້ບັນລະຍາຍເຖິງບັນຫາຂອງເພື່ອນຂອງລາວແລະຄົນຂ້າງບ້ານຂອງລາວ ຄວາມເສັຽຫາຍໄດ້ມາສູ່ພວກເຂົາ. ລາວໄດ້ບັນລະຍາຍດ້ວຍການປິດທ້າຍວ່າຄອບຄົວຂອງລາວມີຢູ່ພຽງພໍສາມີຂອງລາວທະນຸທະນອມລາວແລະຫາມາລ້ຽງຄອບຄົວ. ລູກເຕົ້າຂອງລາວກໍຟັງຄວາມ ພວກເຂົາເຮັດໃຫ້ພໍ່ແລະແມ່ພູມໃຈຢູ່ສເມີ. ລາວໄດ້ສລູບຄໍາເວົ້າຂອງລາວວ່າ ເຫດຜົນທີ່ລາວມີຄວາມກັງວົນນັ້ນ ເພາະລາວຢ້ານວ່າຖ້າມີເຫດຮ້າຍເກີດຂຶ້ນກັບລາວນັ້ນຈະເຮັດໃຫ້ລາວມີຄວາມຢ້ານຫລາຍ. ລາວຢ້ານວ່າ ພຣະເຈົ້າຈະຈັບເອົາຄວາມຜິດຂອງລາວ ແລ້ວມາລົບລ້າງກັບພຣະພອນທີ່ລາວໄດ້ຮັບ. ແຕ່ໃນພຣະຄັມພີໄດ້ເຕືອນໃຫ້ພວກເຮົາລະນຶກຢູ່ສເມີວ່າ ພຣະ

ເຈົ້າຊີງເປັນທີ່ເພິ່ງໄດ້ຢູ່ຕລອດເວລາ (4:7).

<u>ຊີວິດທີ່ປະກອບດ້ວຍຄວາມຊຶມຊື່ນຍິນດີຈາກການຄິດເຖິງແຕ່ສິ່ງທີ່ດີເລີດ</u> (4:8)

ໃນຂໍ້ທີ 8 ໂປໂລໄດ້ໃຫ້ເຫັນຄຸນຄວາມດີແປດຢ່າງ. ສິ່ງທີ່ກ່າວມານີ້ ບໍ່ແມ່ນຂອງຄຣິສຕຽນເທົ່ານັ້ນ. ແຕ່ຍັງເປັນທີ່ຊ່າລື ກັນໃນທ້າມກາງພວກຊະໂຕອິໂກ (Stoics) ກ່ຽວກັບສຳນັກປັສຍາຂອງຊາວກຣີກ. ໃຫ້ພວກເຮົາມາເບິ່ງນຳກັນຈັກຄາວ ນຶ່ງ.

ຊາວຄຣິສຕຽນຈະຕ້ອງມີແນວຄິດ " ໃນສິ່ງທີ່ສັດຈິງ " (true). ເມື່ອໃຫ້ຄຳໝັ້ນສັນຍາແລ້ວ ບໍ່ຮັກສາໃນຄຳເວົ້າ ກໍເປັນ ການເວົ້າຕົວະ. ພວກເຮົາຈະຕ້ອງສຸມໃສ່ແຕ່ໃນຄວາມສັດຈິງ.

ຊາວຄຣິສຕຽນຈະຕ້ອງມີແນວຄິດ "ສິ່ງທີ່ໜ້ານັບຖື"(noble, honorable). ໃນຄຳນີ້ເປັນຄຳທີ່ມີຄວາມລຳບາກແລະ ສັບສົນໃນການແປ. ເມື່ອປຽບທຽບກັບພຣະຄັມພີຫລາຍສະບັບທີ່ແປແລ້ວຈຶ່ງໄດ້ລົງຄວາມເຫັນວ່າ ຄຣິສຕຽນຄວນຈະ ຄິດເຖິງແຕ່ສິ່ງທີ່ຖວາຍກຽດແກ່ພຣະເຈົ້າ.

ຄຣິສຕຽນຈະຕ້ອງມີແນວຄິດ "ສິ່ງໃດທີ່ຍຸດຕິທັມ" (right). ຄຳວ່າຍຸດຕິທັມແມ່ນມາຈາກຮາກຖານຂອງຄຳວ່າ ຊອບທັມ (just). ມີຄວາມໝາຍວ່າຕ້ອງມີກົດລະບຽບ.

ສິ່ງທີ່ຖືກຕ້ອງອີກສິ່ງນຶ່ງນັ້ນແມ່ນ "ບໍຣິສຸດ" (pure). ຄຳນີ້ມີຄວາມໝາຍເຖິງຂາວສະອາດໃນສິນທັມ. ເມື່ອກ່າວເຖິງ ກ່ຽວກັບພິທີທາງສາສນາແມ່ນເປັນທີ່ສົມມາແລະຖວາຍໃຫ້ກັບພຣະເຈົ້າ.

"ສິ່ງໃດທີ່ໜ້າຮັກ" (lovely) ມີຄວາມໝາຍວ່າ ເປັນການຊັກຊວນຈິດໃຈແລະເບິ່ງໃນສິ່ງທີ່ດີເລີດຂອງຄົນອື່ນ.

"ສິ່ງໃດທີ່ໜ້າຍິນດີ" (admirable) ເປັນການສະແດງອອກເຖິງຄວາມຍິນດີ ແລະຄຳເວົ້າທີ່ໃຫ້ຖືກໃຈຄົນອື່ນ.

"ສິ່ງໃດທີ່ລ້ຳເລີດ" (excellent) ເຣື່ອງການກະທຳຫລືການປາກເວົ້າຈະຕ້ອງເປັນທີ່ລ້ຳເລີດ. ຄຣິສຕຽນຄວນຄິດຫາ ແຕ່ສິ່ງທີ່ດີທີ່ສຸດ.

"ຄວນແກ່ການສັຣເສີນ" (praiseworthy) ຄື ຄຸນຄວາມດີອັນສຸດທ້າຍ. ຄຣິສຕຽນບໍ່ຄວນຢູ່ເພື່ອໃຫ້ຄົນອື່ນຍ້ອງຍໍ. ເຖິງຢ່າງໃດກໍຕາມ ຄຣິສຕຽນຄວນຈະເອົາຄຳຍ້ອງຍໍຂອງເຂົາມາຄິດແລະຕຶກຕອງ.

ທັມຊາດກຽດຊັງຄວາມວ່າງເປົ່າ. ຄວາມໝາຍກໍຄືວ່າ ນັ້ນເປັນຄວາມຈິງໃນໂລກຂອງວັດຖຸ ແລະເປັນຄວາມຈິງເຊັ່ນ ດຽວກັນກັບໃນຄວາມຄິດຂອງພວກເຮົາ. ໃນຄວາມຄິດຂອງພວກເຮົາເຕັມໄປດ້ວຍສິ່ງຕ່າງໆ. ບາງອັນກໍບໍ່ມີຄຸນຄ່າ. ຄວາມຮຽກຮ້ອງ ຄື ໃຫ້ພວກເຮົາມີຄວາມຄິດທີ່ເຕັມລົ້ນໄປດ້ວຍຄຸນຄວາມດີທຸກຢ່າງ. ນີ້ແຫລະ ຄື ເຫດຜົນສະທ້ອນມາ ຈາກຄວາມຄິດ. ຖ້າພວກເຮົາຄິດຢ່າງໃດ ເຮົາກໍເປັນຄົນຢ່າງນັ້ນ.

<u>ຊີວິດທີ່ປະກອບດ້ວຍຄວາມຊຶມຊື່ນຍິນດີຈາກການຮຽນແບບຂອງອັຄສາວົກໂປໂລ</u> (4:9-19)

ໂປໂລໄດ້ປິດທ້າຍຈົດໝາຍດ້ວຍການຮຽກຮ້ອງໃຫ້ຄຣິສຕຽນເມືອງຟີລິບປອຍຮຽນແບບຂອງລາວ (4:9). ລາວໄດ້ ຂຽນບອກພວກເຂົາໃຫ້ເຮັດທຸກສິ່ງທີ່ພວກເຂົາໄດ້ຮຽນຮູ້ຈາກລາວ ໄດ້ຮັບໄວ້ ໄດ້ຍິນແລະໄດ້ເຫັນໃນການກະທຳຂອງ ລາວແລ້ວ. ລາວເນັ້ນໃຫ້ພວກເຂົາມີຄວາມຮູ້ເຖິງ ແລະການກະທຳໃຫ້ມີໃຈພ້ອມພຽງກັນ. ຫລັງຈາກນັ້ນ ລາວໄດ້

ຮ້ອງຂໍໃຫ້ພວກເຂົາໄດ້ປະຕິບັດຕາມສີ່ຢ່າງ ຫລືວ່າ ໃຫ້ມີກິຣິຍາທ່າທາງສີ່ປະການ.

ປະການແລກ ລາວໃຫ້ພວກເຂົາມາສົນໃຈໃນເຣື່ອງທີ່ລາວໄດ້ຮຽນຮູ້ແລ້ວ ຄື ມີຄວາມພໍໃຈຢູ່ໃນທຸກສະພາບ (4:10-12). ເບື້ອງຫລັງຂອງເຣື່ອງລາວນີ້ ລາວກ່າວວ່າ "ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກຳລັງເຮົາ" (4:13).ໃນຂໍ້ຄວາມຄິດນີ້ ພຣະເຈົ້າຈະປະທານຄວາມສາມາດໃຫ້ສູ້ທົນແລະຍຶດຫມັ້ນຢູ່ໃນຄວາມຈິງຕາມທີ່ພຣະອົງໄດ້ຊົງຮ້ອງເຮົາມານັ້ນ. ໃນທີ່ນີ້ບໍ່ໄດ້ຫມາຍຄວາມວ່າ ພວກເຮົາສາມາດເຮັດການອັສຈັນທຳໄດ້ຫລາຍພັນປະການ.

ປະການທີສອງ ລາວໄດ້ສະແດງຄວາມຂອບໃຈນຳພີ່ນ້ອງຄຣິສຕຽນ ເມືອງຟີລິບປອຍ ໃນການຊ່ອຍເຫລືອ (4:14). ພວກເຮົາຄົງຈະຈຳໄດ້ວ່າ ພວກເຂົາໄດ້ສົ່ງ ເອປາໂຟດີໂຕໄປຊ່ອຍໂປໂລ ພ້ອມທັງຝາກສິ່ງຂອງໄປນຳລາວ (2:25; 4:18). ລາວໄດ້ສະແດງຄວາມຂອບໃຈມາຍັງພວກເຂົາ (4:14-16). ລາວບອກພີ່ນ້ອງຄຣິສຕຽນເມືອງຟີລິບປອຍວ່າ ເມື່ອພວກເຂົາໄດ້ຊ່ອຍເຫລືອລາວ ພວກເຂົາໄດ້ຜົນກຳໄລເພີ້ມຂຶ້ນໃນບັນຊີຂອງພວກເຂົາ (4:17).

ໃຫ້ພວກເຮົາມາຕຶກຕອງເບິ່ງພຣະທັມຟີລິບປອຍ 4:19. ມີບາງຄົນຕີຄວາມຫມາຍໃນພຣະທັມຕອນນີ້ຜິດໄປວ່າ ນີ້ແມ່ນພຣະສັນຍາຂອງພຣະເຈົ້າ ພຣະອົງຈະໃຫ້ພວກເຂົາມີສຸຂພາບດີແລະຮັ່ງມີ. ມີຄຣິສຕຽນຜູ້ທີ່ຢຳເກງພຣະເຈົ້າຫລາຍຄົນ ພວກເຂົາມີຄວາມໄວ້ວາງໃຈເຊື່ອໃນພຣະອົງ ພວກເຂົາເຈັບປ່ວຍແລະທຸກຍາກ. ກໍຣະນີຂອງພວກເຂົານັ້ນ ບໍ່ແມ່ນພວກເຂົາຂາດຄວາມເຊື່ອປະການໃດເລີຍ. ຫລັກຄຳສອນທີ່ສອນວ່າ " ຊື້ເອົາ-ອ້າງເອົາ " (name-it-cliam-it) ນັ້ນເປັນຄຳສອນຜິດ.

<u>ຄຳຖາມ</u>

1. ເປັນຫຍັງຈິ່ງເປັນການຍາກທີ່ຈະມີຄວາມຊົມຊື່ນຍິນດີໃນເມື່ອພວກເຮົາຫາກໄດ້ຮັບຄວາມລຳບາກ? ເປັນດ້ວຍເຫດວ່າຂາດຄວາມເຊື່ອຢ່າງນັ້ນບໍ ຫລືວ່າມີຫຍັງຜິດປົກກະຕິ?

2. ເຫັນໄດ້ຢ່າງແຈ່ມແຈ້ງວ່າຄຣິສຕຽນຄວນຈະມີຄວາມຊົມຊື່ນຍິນດີຢ່າງເຫລືອລົ້ນໃນຊີວິດຂອງພວກເຂົາ. ຄຣິສຕຽນເຫລົ່ານີ້ໄດ້ຮັບຄວາມສຳເຣັດໄດ້ເຖິງຂນາດໃດ?

3. ພວກຊະໂຕອີໂກໄດ້ສອນວ່າ ມະນຸດທີ່ຄົບບໍຣິບູນບໍ່ຕ້ອງການເພື່ອນຫລືຜູ້ທີ່ຮັກ. ຖ້າເປັນຢ່າງນີ້ ກໍບໍ່ມີຫຍັງແຕກຕ່າງເລີຍ. ທ່ານຄິດວ່າຢ່າງໃດ ໂດຍສະເພາະແລ້ວເມື່ອອ້າງອີງໃສ່ ພຣະທັມຟີລິບປອຍ 4:11-13?

4. ພຣະທັມຟີລິບປອຍ 4:8 ໄດ້ໃຫ້ເຫັນຄຸນຄວາມດີແປດຢ່າງ. ຖ້າທ່ານຄິດວ່າ ທ່ານຈະຕື່ມເຂົ້າໄປອີກຂໍ້ນຶ່ງຫລືສອງຂໍ້ ທ່ານຄິດວ່າມີອັນໃດອີກແດ່? ມີຂໍ້ໃດໃນຈຳນວນແປດຂໍ້ນີ້ທ່ານຄິດວ່າສຳຄັນກວ່າຫມູ່?

5. ໃນພຣະຄັມພີທີ່ພວກເຮົາໄດ້ສຶກສານຳກັນນີ້ໄດ້ໃຫ້ຂໍ້ຄວາມທີ່ຊ່ອຍໃຫ້ພວກເຮົາຢັ່ງລົງເລິກແລະໃຫ້ມີຄວາມຊົມຊື່ນຍິນດີຢູ່ຢ່າງຫມັ້ນຄົງ. ພຣະທັມຕອນໃດແດ່ທີ່ຊ່ອຍໄດ້ຫລາຍທີ່ສຸດ ເພື່ອໃຫ້ທ່ານມີຄວາມຊົມຊື່ນຍິນດີຫລາຍທີ່ສຸດ?

<u>**ສຶກສາສະພາບຂອງເຫດການ**</u>

ປ້າຈິງແລະປ້າສມິດເຂົ້າໂຮງຫມໍ ພວກເພິ່ນຖືກນອນຫ້ອງດຽວກັນ. ທັງສອງໄດ້ຮັບການຮັກສາເນື່ອງຈາກສຸຂພາບເສື່ອມໂຊມ. ທັງສອງເປັນນາງຫມ້າຍ. ແຕ່ລະຄົນມີລູກຊາຍດຽວ ພວກລູກມີຫນ້າທີ່ການງານດີແລະມີຄອບຄົວທີ່ດີ. ພວກເຂົາຕ່າງກໍຢູ່ຕ່າງຣັຖແລະໄກຈາກແມ່ຂອງພວກເຂົາ. ແມ່ປ້າທັງສອງນີ້ ເບິ່ງແລ້ວພວກເພິ່ນຢູ່ໃນສະພາບອັນດຽວ

ກັນ.

ປ້າຈິງບໍ່ເຄີຍສະບາຍໃຈເລີຍ. ລາວຈົ່ມດ້ວຍຄວາມຂົມຂື່ນກ່ຽວກັບເຣື່ອງຂອງລູກຊາຍລາວ. ລາວເວົ້າວ່າ ລູກຊາຍຂອງລາວໂທຫາລາວພຽງແຕ່ອາທິດລະເທື່ອເທົ່ານັ້ນ. ລູກລາວບໍ່ເຄີຍມາຢາມຈັກເທື່ອນອກຈາກວັນຄຣິສມາດ ແລະມາຢາມຍາມຣະດູພັກຮ້ອນເທົ່ານັ້ນ. ລາວຈົ່ມວ່າລູກຊາຍຜູ້ນີ້ລືມບຸນລືມຄຸນ ແລະລູກຊາຍຜູ້ນີ້ຄວນຈະເສັຽສະລະວຽກຂອງລາວ ແລ້ວຍ້າຍມາຫາວຽກຢູ່ໃກ້ແມ່.
ສຳລັບປ້າສະມິດແລ້ວ ລາວມີຄວາມຍິ້ມແຍ້ມແຈ່ມໃສ. ລາວໄດ້ກ່າວເຖິງເຣື່ອງຄວາມຮັກຂອງລູກຊາຍລາວມີຕໍ່ລາວ ລູກຊາຍຂອງລາວມີຄວາມເປັນຫ່ວງລາວ ແລະໂທຫາລາວອາທິດລະເທື່ອ. ລູກຊາຍຂອງລາວມາຢາມລາວສອງເທື່ອຕໍ່ປີ. ລາວຍັງເລົ່າໃຫ້ຟັງກ່ຽວກັບວຽກການງານທຳອັນສຳເຣັດຂອງລູກລາວ ແລະມີຄວາມສຸກໃນຄອບຄົວຂອງພວກເຂົາ.ລາວເວົ້າວ່າເປັນພຣະພອນເຫລືອລົ້ນທີ່ຈະກ່າວໄດ້.

ແມ່ປ້າສອງຄົນນີ້ ມີສະພາບຢ່າງດຽວກັນຈິ່ງເປັນຕາໜ້າຖາມວ່າ ເປັນຫຍັງແມ່ປ້າຜູ້ນຶ່ງມີແຕ່ຄວາມຂົມຂື່ນແລະອີກແມ່ປ້າຜູ້ນຶ່ງມີແຕ່ຄວາມຊື່ນຊົມຍິນດີ?

# ບົດຮຽນທີ 6
# ໃຜເປັນນ້ຳເບີນຶ່ງ?

---

ຂໍ້ພຣະຄຳພີສຳລັບບົດຮຽນ: ໂກໂລຊາຍ 1:1-23
ຂໍ້ພຣະຄຳພີສຳລັບເບື້ອງຫລັງ: ໂກໂລຊາຍ 1:1-23
ຈຸດສຳຄັນຂອງບົດຮຽນນີ້: ພຣະຄຣິດສົມຄວນໄດ້ຮັບການເປັນເອກໃນຊີວິດຂອງພວກເຮົາ ເພາະວ່າພຣະອົງຊົງເປັນເອກໃນການເປີດເຜີຍພຣະລັກສະນະຂອງພຣະເຈົ້າແລະຊົງປະທານໃຫ້ພວກເຮົາຄືນດີກັບພຣະອົງ.
ຄຳຖາມເພື່ອການສຳຫລວດ: ແມ່ນໃຜຫລືສິ່ງໃດເປັນນ້ຳເບີນຶ່ງໃນຊີວິດຂອງທ່ານ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊີ້ໃຫ້ເຫັນວ່າຜູ້ໃດເປັນພຣະຄຣິດ ແລະຕັດສິນໃຈວ່າ ຂ້າພະເຈົ້າຈະໃຫ້ພຣະຄຣິດເປັນເອກໃນຊີວິດຂອງຂ້າພະເຈົ້າຢ່າງໃດ.

## ບົດຮຽນ

ຄຳແນະນຳ

ພຣະທັມໂກໂລຊາຍ: ພຣະຄຣິດຊົງຢູ່ເຫນືອສັພທຸກສິ່ງ ຈະເອົາໃຜຫລືສິ່ງໃດກ່ອນອື່ນຫມົດໃນຊີວິດ? ຈົດຫມາຍສະບັບນີ້ໄດ້ສົ່ງໄປຍັງເມືອງໂກໂລຊາຍ, ຄຳຕອບຂອງຄຳຖາມກໍມີຄວາມແຈ່ມແຈ້ງຢ່າງບໍ່ຜິດແລ້ວວ່າຈະຕ້ອງເອົາພຣະຄຣິດກ່ອນອື່ນຫມົດໃນຊີວິດ. "ພຣະອົງຊົງເປັນຢູ່ກ່ອນສິ່ງສາຣະພັດ ແລະສິ່ງສາຣະພັດນັ້ນເປັນລະບຽບຢູ່ໂດຍພຣະອົງ" (1:17).

ແນ່ນອນຢູ່ແລ້ວ ຄຣິສຕຽນ ເມືອງໂກໂລຊາຍຈະຕ້ອງໄດ້ຖືກເຕືອນໃຫ້ຮູ້ເຖິງຄວາມສຳຄັນຂອງຄວາມຈິງທີ່ພຣະຄຣິດຊົງຢູ່ເຫນືອສັພສິ່ງທັງປວງ ແລະບໍ່ມີອັນໃດເທົ່າທຽບພຣະອົງໄດ້, ຈະເປັນແນວຄິດ ຫລືພາກປະຕິບັດກໍຍັງບໍ່ແຈ່ມແຈ້ງເທື່ອໃນເຣື່ອງນີ້. ມີຄວາມຄິດເຫັນຫລາຍຢ່າງໃນເຣື່ອງ "ຄຳສອນຜິດຂອງຊາວໂກໂລຊາຍ" (Colossian heresy). ບາງທີ ອາດຈະມີບາງຄົນໃນຄຣິສຕະຈັກໄດ້ຮັບຄຳສອນຈາກຄຳສອນທາງສາສນາ ແລະປຣັຊຍາໃນສັດຕະວັດທີນຶ່ງ ແລະຄຳສອນນັ້ນໄດ້ພົບໃນປະເພນີຂອງເມືອງໂກໂລຊາຍທີ່ມາຈາກ ກຣີກແລະໂຣມັນ (Greco-Roman culture of Colosee). ບາງທີຍິວຢູ່ໃນເມືອງນັ້ນເປັນຜົນສະທ້ອນກໍໄດ້. ພວກເຂົາອາດຈະຍັງຍືນຢັດຢູ່ໃນກົດບັນຍັດແລະປະຕິບັດ ຕາມພິທີຕ່າງໆຂອງພວກເຂົາວ່າເປັນສິ່ງສຳຄັນແລະໄດ້ຊັກຊວນຄຣິສຕຽນບາງຄົນເຂົ້າພົວພັນນຳ. ບາງທີສິ່ງທີ່ນຳພາຄຣິສຕຽນ ເມືອງໂກໂລຊາຍຜິດກໍຄືການປະປົນໃນຫລັກຄວາມເຊື່ອຕ່າງໆ.

ໂກໂລຊາຍເປັນເມືອງນຶ່ງໃນແຂວງອາເຊັຽ (Asia Minor) ຊຶ່ງຢູ່ໃຕ້ການປົກຄອງຂອງໂຣມັນ . ເມືອງເກົ່າແກ່ນີ້ຢູ່ທາງ ຟາກຕາເວັນຕົກຂອງປະເທດຕຸຣາກີ (Turkey) ໃນແຜນທີ່ໂລກສມັຍນີ້. ເຖິງແມ່ນວ່າພວກເຮົາບໍ່ຮູ້ວ່າ ໂປໂລໄດ້ໄປເມືອງໂກໂລຊາຍຫລືບໍ່, ພວກເຮົາຮູ້ວ່າລາວເປັນທີ່ຮັບຮູ້ຈາກຄົນເມືອງນັ້ນຫລາຍ ກ່ອນຈົດຫມາຍສະບັບນີ້ໄດ້ສົ່ງໄປ. ເມື່ອລາວຢູ່ໃນເມືອງເອເຟໂຊສອງປີ "ຈົນກວ່າຄົນທັງຫລາຍທີ່ອາສັຍຢູ່ໃນແຂວງອາເຊັຽ ທັງພວກຍິວແລະພວກກຣີກໄດ້ຍິນພຣະທັມຂອງອົງພຣະຜູ້ເປັນເຈົ້າ" (ກິຈການ 19:10). "ຄົນທັງຫລາຍທີ່ຢູ່ໃນແຂວງອາເຊັຽ" ກໍຮ່ວມທັງຄົນມາຈາກເມືອງໂກໂລຊາຍດ້ວຍ. ລາວມີການຕິດຕໍ່ກັບຄົນເມືອງເອເຟໂຊແລະຈະຕ້ອງມີການຕິດຕໍ່ກັບຄົນເມືອງໂກໂລຊາຍດ້ວຍ. ລາວຍັງຕິດຕໍ່ກັບພີ່ນ້ອງບ້ານໃກ້ເມືອງຄຽງ ຄື ເມືອງລາວດີເກອາທີ່ຮ່າງໄກປະມານ 6.2 ກິໂລແມັດອີກດ້ວຍ.

ໃນໂກໂລຊາຍ 2:1 ແລະ 4:13, 15-16 ກໍໄດ້ກ່າວເຖິງເມືອງລາວດີເກອາ. ສະນັ້ນແຫລະ ລາວຮູ້ຈັກກັບຊາວເມືອງໂກໂລຊາຍໄດ້ດີ ແລະລາວເປັນຫ່ວງພວກເຂົາຫລາຍ(1:3-4; 2:1).
ຈົດໝາຍສະບັບນີ້ໄດ້ຂຽນໄປໃນບັ້ນປາຍການປະກາດຂອງລາວ ຄື ຕົ້ນປີຂອງ ຄ.ສ. 60 ໃນຂະນະທີ່ລາວຖືກຈຳຄຸກຢູ່ໂຣມ ປະເທດອີຕາລີ. ຈົດໝາຍສະບັບນີ້ເປັນການຮຽກຮ້ອງຂອງໂປໂລ ໃຫ້ຄຣິສຕຽນ ເມືອງໂກໂລຊາຍໃຫ້ເອົາພຣະຄຣິດກ່ອນອື່ນໝົດທຸກສິ່ງ ແທນທີ່ຈະໄປຫລົງຕາມຫລັກຄຳສອນອື່ນ ຫລືແນວຄິດອື່ນທີ່ຈະມາທຽມແອກກັບພຣະຄຣິດ. ຈົດໝາຍນີ້ຍັງໄດ້ຮຽກຮ້ອງໃຫ້ຄຣິສຕຽນໃນສັດຕະວັດທີນຶ່ງຢ່າໄດ້ຊອກສແວງຫາຊີວິດໂດຍຍຶດຖືຫລືປະຕິບັດຕາມກົດບັນຍັດຫລືພິທີຕ່າງໆ. ຕໍ່ມາຈົດໝາຍນີ້ຍັງໄດ້ທ້າທາຍໃຫ້ພວກເຂົາວ່າ ໃນຊີວິດປະຈຳວັນຂອງພວກເຂົາໃຫ້ຊີວິດຂອງພວກເຂົາປັກໃສ່ພຣະຄຣິດ ແລະໃຊ້ຊີວິດຂອງພວກເຂົານັ້ນ ໃຫ້ໄດ້ມາດຕະຖານຕາມທີ່ພວກເຂົາໄດ້ຕັດສິນໃຈໄວ້ແລ້ວ.

<u>ຄຳນຳ</u>
ເນື່ອງຈາກພາຣະກິດສະເພາະພິເສດສຸດໃນການຊົງສ້າງ ແລະການຊົງໄຖ່ມະນຸດທັງໂລກຂອງພຣະເຢຊູຄຣິດ. ເພາະສະນັ້ນ ພຣະອົງຈຶ່ງສົມຄວນເປັນເອກໃນສັພສິ່ງທັງປວງ.

<u>ຊົງເປັນເອກໃນການຄືນດີກັບພວກເຮົາ</u> (1:1-14, 19-23)
ໂປໂລໄດ້ຕັ້ງຕົ້ນຈົດໝາຍຂອງລາວທີ່ສົ່ງໄປຫາພີ່ນ້ອງຄຣິສຕຽນ ເມືອງໂກໂລຊາຍດ້ວຍການຂອບພຣະຄຸນອົງພຣະຜູ້ເປັນເຈົ້າເພື່ອພວກເຂົາ ເພາະວ່າເນື່ອງຈາກ "ຄວາມເຊື່ອຂອງພວກເຈົ້າທັງຫລາຍໃນພຣະເຢຊູຄຣິດ" ແລະ "ເຣື່ອງຄວາມຮັກຊຶ່ງພວກເຈົ້າມີຕໍ່ໄພ່ພົນທັງປວງຂອງພຣະເຈົ້າ" (ໂກໂລຊາຍ 1:4). ຄວາມເຊື່ອແລະຄວາມຮັກເປັນພື້ນຖານຂອງ "ຄວາມຫວັງທີ່ຊົງຮັກສາໄວ້ສຳລັບພວກເຈົ້າທັງຫລາຍໃນສວັນ" (1:5). ລາວຍັງກ່າວອີກວ່າ ເຣື່ອງຂອງຂ່າວປະເສີດ "ກຳລັງເກີດຜົນແລະທະວີຂຶ້ນ" ບໍ່ພຽງແຕ່ຢູ່ໃນຖ້າມກາງພີ່ນ້ອງໂກໂລຊາຍເທົ່ານັ້ນ ແຕ່ແຜ່ຜາຍໄປທົ່ວໂລກ. ລາວໄດ້ຂຽນຕໍ່ໄປວ່າລາວປາຖນາຢາກໃຫ້ພວກເຂົາ "ດຳເນີນຊີວິດຢ່າງທີ່ຄວນຕໍ່ອົງພຣະຜູ້ເປັນເຈົ້າ ແລະທີ່ຊອບພຣະທັຍພຣະອົງຢ່າງແທ້ຈິງ" (1:10). ລາວໄດ້ຊີ້ໃຫ້ພວກເຂົາເຫັນການກະທຳທີ່ຊອບພຣະທັຍພຣະເຈົ້າຄື "ໃຫ້ເກີດຜົນໃນການດີທຸກຢ່າງ ແລະຈະເຣີນຂຶ້ນໃນຄວາມຮູ້ເຖິງພຣະເຈົ້າ ມີກຳລັງແຂງແຮງຂຶ້ນທຸກຢ່າງ ໂດຍຣິດອຳນາດອັນຮຸ່ງເຮືອງຂອງພຣະອົງ ... ຈຶ່ງຂອບຄຸນພຣະບິດາ" (1:10-12).

ກອງປະຊຸມ ພີ່ນ້ອງໂກໂລຊາຍໄດ້ພິສູດຕົນເອງໃຫ້ເຫັນວ່າດີຫລາຍສົມຄວນທີ່ໂປໂລໄດ້ໃຫ້ການຍ້ອງຍໍແລະອ້ອນວອນເພື່ອ. ລາວໄດ້ບັນລະຍາຍໃຫ້ພວກເຂົາເຂົ້າໃຈຕື່ມອີກໃນເຣື່ອງຂອງພຣະເຢຊູຖືກຄຶງທີ່ໄມ້ກາງແຂນ. ຜ່ານທາງການຖືກຄຶງທີ່ໄມ້ກາງແຂນ "ພຣະອົງໄດ້ຊົງໂຜດດຶງເຮົາທັງຫລາຍໃຫ້ພົ້ນຈາກອຳນາດຂອງຄວາມມືດ ແລະໄດ້ຊົງຍົກຍ້າຍພວກເຮົາໄປຕັ້ງໄວ້ໃນຣາຊອານາຈັກແຫ່ງພຣະບຸດທີ່ຮັກຂອງພຣະອົງ. ໃນພຣະບຸດນັ້ນເຮົາທັງຫລາຍຈຶ່ງໄດ້ຮັບການໄຖ່ໃຫ້ພົ້ນ ຄືຊົງໂຜດຍົກຜິດບາບທັງຫລາຍຂອງພວກເຮົາ" (1:13-14). ໃນພຣະທັມຕອນນີ ພວກເຮົາຈະເຫັນວ່າພຣະເຢຊູໄດ້ດຶງພວກເຮົາອອກ ພຣະອົງໄດ້ຊົງຮັບພວກເຮົາເຂົ້າໄປໃນຣາຊອານາຈັກຂອງພຣະອົງ ພຣະອົງໄດ້ຊົງໄຖ່ພວກເຮົາໃຫ້ພົ້ນຈາກຄວາມບາບຂອງພວກເຮົາ. ໃຫ້ພິຈາຣະນາເບິ່ງວ່າພຣະເຢຊູໄດ້ຊົງກະທຳອັນໃດແດ່ໃຫ້ກັບພີ່ນ້ອງໂກໂລຊາຍແລະພວກເຮົາ.

ໃນເມື່ອພວກເຮົາບໍ່ສາມາດຊ່ອຍຕົນເອງໄດ້ ພຣະຜູ້ເປັນເຈົ້າຊົງສະເດັດມາຊ່ອຍພວກເຮົາໃຫ້ພົ້ນໂດຍຜ່ານທາງພຣະຄຣິດ. ພຣະອົງຊົງຍົກຍ້າຍພວກເຮົາໃຫ້ອອກຈາກ "ອຳນາດຂອງຄວາມມືດ" ແລະນຳພວກເຮົາເຂົ້າສູ່ "ຣາຊອານາຈັກແຫ່ງພຣະບຸດ" ແລ້ວຊົງ "ໄຖ່ພວກເຮົາໃຫ້ພົ້ນຈາກຄວາມບາບຂອງພວກເຮົາ" (1:13-14). ພຣະອົງໄດ້ຊົງ "ບັນດານໃຫ້ເກີດສັນຕິພາບດ້ວຍພຣະໂລຫິດ ຊຶ່ງໄຫລທີ່ໄມ້ກາງແຂນຂອງພຣະອົງ" (1:20).

ໃນໂກໂລຊາຍ 1:20-23 ພວກເຮົາໄດ້ພົບວ່າ ໃນຂນະທີ່ພວກເຮົາບໍ່ໄດ້ເປັນຄົນຂອງພຣະເຈົ້າ ແລະຍັງເປັນສັດຕູທາງດ້ານຈິດໃຈດ້ວຍຄວາມບໍ່ດີຕ່າງໆ. ພຣະອົງຊົງໂຜດໃຫ້ພວກເຮົາຄືນດີກັບພຣະອົງໂດຍຜ່ານທາງການຕາຍຂອງພຣະເຢຊູຄຣິດແລະເຮັດໃຫ້ພວກເຮົາບໍຣິສຸດຢູ່ຕໍ່ໜ້າຂອງພຣະເຈົ້າ. ຂໍ້ຄວາມນີ້ມີຄວາມໝາຍວ່າ ພວກເຮົາບໍ່ສາມາດຈະເຮັດດີດ້ວຍຕົນເອງໄດ້. ພວກເຮົາຈຶ່ງໄດ້ເພິ່ງໃນພຣະເມດຕາແລະພຣະຄຸນຂອງພຣະເຈົ້າ.

ປະຊາຊົນໃນສມັຍນີ້ມັກຈະເວົ້າວ່າພວກເຂົາໄດ້ພົບພຣະເຈົ້າ. ແທ້ຈິງແລ້ວບໍ່ເປັນຢ່າງນັ້ນ ພວກເຮົາບໍ່ໄດ້ພົບພຣະເຈົ້າ. ແມ່ນພຣະອົງຊົງພົບພວກເຮົາໃນຂນະທີ່ພວກເຮົາຍັງເຮັດໄປຕາມໃຈຂອງພວກເຮົາ. ພວກເຮົາໄດ້ເຮັດຜິດໄປເມື່ອພວກເຮົາເວົ້າອ້າງວ່າ ພວກເຮົາໄດ້ສ້າງສັນຕິພາບກັບພຣະເຈົ້າ. ມີເງື່ອນໄຂອັນໃດ ພວກເຮົາຈຶ່ງສາມາດຈະໄປສ້າງສັນຕິພາບກັບພຣະເຈົ້າໄດ້? ພຣະເຈົ້າໄດ້ຊົງບັນດານໃຫ້ເກີດສັນຕິພາບດ້ວຍພຣະໂລຫິດຂອງພຣະບຸດອົງດຽວຂອງພຣະອົງ.

<u>ຊົງເປັນເອກໃນສັພສິ່ງທັງປວງ</u> (1:15-17)

ໃນການຊົງສ້າງ ພຣະເຢຊູຊົງເປັນເອກໃນສັພສິ່ງທັງປວງ. ພຣະຜູ້ຊົງສ້າງມີສິດທີ່ຈະເຮັດນຳສິ່ງທີ່ຖືກສ້າງຂຶ້ນໄປຕາມພຣະປະສົງຂອງພຣະອົງ. ພວກເຮົາຈະເຫັນຮອຍສີພຣະຫັດຂອງພຣະອົງໃນໂລກທີ່ພຣະອົງໄດ້ສ້າງຂຶ້ນມາ. ໃນສັພທຸກສິ່ງຈະນ້ອຍຫລືໃຫຍ່ໄດ້ເປັນພະຍານໃຫ້ເຫັນຣິດທານຸພາບຂອງການຊົງສ້າງ.

ຄຣິສຕະຈັກໃນເມືອງໂກໂລຊາຍປະເຊີນກັບບັນຫາໃນເຣື່ອງຄຳສອນທີ່ຜິດໄປນັ້ນ ຄື ຄົນກຸ່ມນຶ່ງເຊື່ອໃນຫລັກຄຳສອນຂອງ ຜູ້ທີ່ຕິດຕາມ ນໍສຕິກ (Gnosticism) ຄຳນີ້ມີຄວາມໝາຍວ່າຄວາມຮູ້. ພວກເຂົາສອນວ່າພຣະເຢຊູ
ບໍ່ໄດ້ເປັນພຣະ
ເຈົ້າ. ໂປໂລຈຶ່ງໄດ້ໃຫ້ຄວາມແຈ່ມແຈ້ງວ່າ "ພຣະອົງຊົງເປັນແບບລັກສະນະຂອງພຣະເຈົ້າ ຜູ້ຊຶ່ງຕາເຫັນບໍ່ໄດ້" ໝາຍຄວາມວ່າພຣະເຢຊູຊົງເປັນພຣະເຈົ້າ (1:15). ພວກເຮົາຈະເຫັນໃນພຣະທັມໂຢຮັນກໍໄດ້ສອນຢ່າງດຽວກັນ 1:1-18 ແລະ ເຮັບເຣີ 1:1-4.

ອີກປະການນຶ່ງ ພຣະເຢຊູຊົງເປັນ "ບຸດແຣກເໜືອສາຣະພັດທີ່ຊົງນິຣະມິດສ້າງຂຶ້ນນັ້ນ" (1:15). ໃນທີ່ນີ້ ບໍ່ໄດ້ໝາຍຄວາມວ່າ ພຣະເຢຊູເປັນຜົນແຣກຂອງການຊົງສ້າງຈາກພຣະເຈົ້າ ແຕ່ມີຄວາມໝາຍວ່າ ພຣະເຢຊູຊົງເປັນຜູ້ລິເລີ້ມໃນຄວາມສຳຄັນໃນພາຣະກິດຂອງການຊົງສ້າງ. ພຣະເຢຊູຊົງເປັນພຣະທັມ ພຣະທັມນັ້ນຊົງສະຖິດຢູ່ກັບພຣະເຈົ້າຕັ້ງແຕ່ຕົ້ນເດີມນັ້ນ ແລະພຣະອົງຊົງເປັນພຣະເຈົ້າຕັ້ງແຕ່ໃດມາ (ໃຫ້ອ່ານ ໂຢຮັນ 1:1-3).

ເຣື່ອງພຣະເຈົ້າຊົງສ້າງພວກເຮົາ ເປັນເຣື່ອງສຳຄັນແທ້? ຄຳຕອບກໍຄືວ່າຖ້າບໍ່ມີຜູ້ຊົງສ້າງພວກເຮົາ ພວກເຮົາກໍບໍ່ຕ້ອງຈົງຮັກພັກດີແລະໃຫ້ການຮັບຜິດຊອບຕໍ່ພຣະປະສົງຂອງຜູ້ຊົງສ້າງເລີຍ. ການປະຕິເສດການຊົງສ້າງຂອງພຣະເຈົ້າ ກໍເປັນການແກ້ຕົວ ເພາະບໍ່ຕ້ອງການເຊື່ອຟັງຄຳສອນຂອງພຣະເຈົ້າ.

ພຣະຄຣິດຊົງເປັນເອກໃນສັພສິ່ງທັງປວງໄດ້ຂຍາຍວົງກວ້າງອອກສູ່ພວກເຮົາ. ໂປໂລໄດ້ສັຣເສີນກິຈການຂອງພຣະຄຣິດໃນການຊົງສ້າງ ລາວໄດ້ຊີ້ໃຫ້ເຫັນຈຸດສຳຄັນມີຢູ່ວ່າ "ສິ່ງທັງປວງເຫລົ່ານີ້ແມ່ນພຣະເຈົ້າໄດ້ສ້າງໂດຍທາງພຣະອົງແລະສຳລັບພຣະອົງ" (1:16). ໃນຂໍ້ຄວາມນີ້ແມ່ນຮ່ວມທັງພວກເຮົາດ້ວຍ. ພຣະຄຣິດໄດ້ຊົງສ້າງພວກເຮົາດ້ວຍຣິດທານຸພາບຂອງພຣະອົງຕາມພຣະປະສົງຂອງພຣະອົງ. ພຣະເຈົ້າມີພຣະປະສົງອັນໃດໃນການຊົງສ້າງ? ພຣະອົງຕ້ອງການຄວາມສາມັກຄີທັມ, ການເຂົ້າຮ່ວມ, ແລະການເຂົ້າໃກ້ສນິດກັບມະນຸດ.

ຜູ້ນຳທາງສາສນາ ອໍກັດສະຕິນ (Augustine) ໄດ້ໃຫ້ຂໍ້ຄິດດັ່ງນີ້ "ພຣະອົງຊ
ົງສ້າງພວກຂ້າພະອົງໄວ້ສຳລັບພຣະອົງ
ແລະຈິດໃຈຂອງພວກຂ້າພະອົງຈະບໍ່ໄດ້ພັກຜ່ອນຈັກເທື່ອຈົນກວ່າພວກຂ້າພະອົງໄດ້ພັກຜ່ອນໃນພຣະອົງ."[1] ເປັນດ້ວຍເຫດນັ້ນບໍ ຈິດໃຈຂອງພວກເຮົາຈຶ່ງບໍ່ມີຄວາມສງົບສຸກຈັກເທື່ອ? ພວກເຮົາບໍ່ໄດ້ພົບຄວາມສງົບສຸກໃນພຣະເຈົ້າບໍ? ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດຕັກຕື່ມຄວາມວ່າງເປົ່າໃນຈິດໃຈຂອງພວກເຮົາໃຫ້ເຕັມໄດ້?

ພວກເຮົາຮູ້ວ່າພຣະເຢຊູໄດ້ທຳພາຣະກິດໃນການຊົງສ້າງມາແລ້ວ. ພຣະອົງຍັງຊົງສ້າງຢູ່ບໍ່ເຊົາ. ໂປໂລໄດ້ບັນທຶກໄວ້ໃນ 2 ໂກຣິນໂທ 5:17 ວ່າດັ່ງນີ້ "ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກສ້າງຂຶ້ນໃຫມ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ, ກາຍເປັນສິ່ງໃຫມ່ທັງນັ້ນ!"

<u>ຊົງເປັນເອກເຫນືອຄຣິສຕະຈັກ</u> (1:18)
ແມ່ນຜູ້ໃດເປັນນາຍໃນຄຣິສຕະຈັກຂອງທ່ານ? ຫລັງຈາກໂປໂລຂອບຄຸນພຣະເຈົ້າສຳລັບຄວາມເຊື່ອ ຄວາມຫວັງແລະຄວາມຮັກຂອງພີ່ນ້ອງ ເມືອງໂກໂລຊາຍແລ້ວ ລາວໄດ້ເຕືອນພວກເຂົາເຣື່ອງພຣະຄຣິດຊົງເປັນເອກເຫນືອຄຣິສຕະຈັກ. ເນື້ອຄວາມໃນເພງຄຣິສຕຽນໄດ້ຂຽນດັ່ງນີ້ " ພຣະເຢຊູຄຣິດຄືຮາກຫມັ້ນໃຫ້ຄຣິສຕະຈັກຕັ້ງຂຶ້ນ ພຣະອົງຊົງສ້າງພວກໃຫມ່ນີ້ດ້ວຍພຣະຄັມພີເປັນເຄົ້າ!"[2]

ໃນພຣະທັມໂກໂລຊາຍ 1:18 ໄດ້ຂຽນໄວ້ວ່າ "ເພື່ອພຣະອົງຈະຊົງເປັນເອກໃນສັພສິ່ງທັງປວງ."ນີ້ແມ່ນຄຳອ້ອນວອນຂອງທ່ານບໍ່ ສຳລັບຄຣິສຕະຈັກທີ່ທ່ານໄປຮ່ວມນະມັສການ-ທີ່ປະກາດວ່າ ພຣະຄຣິດຊົງປະກາດໃຫ້ເປັນຜູ້ນຳຂອງຄຣິສຕະຈັກຂອງພຣະອົງແລະທຸກຫົວເຂົ່າຈະໄດ້ຄຸລົງຂາບພຣະອົງແລະທຸກລີ້ນຈະຍອມຮັບວ່າພຣະອົງຊົງເປັນເອກໃນຈັກກະວານ?

ມີອັນໃດເປັນພື້ນຖານທີ່ໄດ້ອ້າງວ່າພຣະເຢຊູຊົງເປັນສີສະຂອງຄຣິສຕະຈັກ? ໂປໂລໄດ້ໃຊ້ຄຳວ່າ "ບຸດແຣກ" ເຫນືອສາຣະພັດທີ່ຖືກສ້າງຂຶ້ນມາ ແລະ "ຜູ້ແຣກ" ທີ່ຖືກຊົງບັນດານໃຫ້ຄືນມາຈາກຕາຍ (1:15,18). ຄຳວ່າ "ບຸດແຣກ" ບໍ່ໄດ້ເພັ່ງໃສ່ເວລາແຕ່ວ່າຫມາຍເຖິງຄວາມສຳຄັນສຸດ. ພຣະຄຣິດຊົງເປັນເອກເຫນືອອຳນາດຕ່າງໆ. ພຣະເຢຊູບໍ່ພຽງແຕ່ເປັນຜູ້ແຣກໃນກິຈການຂອງການຊົງສ້າງ ພຣະອົງຍັງຊົງຢືນຢັດຢູ່ວ່າເປັນຜູ້ແຣກໃນການຄືນມາຈາກຕາຍ. ເຖິງແມ່ນວ່າຄົນອື່ນໆທີ່ຕາຍໄປໃນພຣະຄັມພີແລະຟື້ນຂຶ້ນມາ ພວກເຂົາໄດ້ຕາຍໄປອີກ. ມີແຕ່ພຣະເຢຊູເທົ່ານັ້ນທີ່ຄືນມາແລ້ວຍັງເປັນຢູ່ຕລອດໄປ. ໃນເຫດການທັງສອງນີ້ ການຊົງສ້າງໂລກຂອງພຣະເຢຊູແລະການຄືນພຣະຊົນຂອງພຣະອົງ-ພຣະເຢຊູຈຶ່ງພິສູດໃຫ້ເຫັນວ່າ ພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າຂອງຈັກກະວານແລະຂອງຄຣິສຕະຈັກຕລອດໄປ.

ຖ້າພວກເຮົາຍັງລັງເລໃຈຢູ່ວ່າໃຜເປັນນາຍໃນຄຣິສຕະຈັກ-ຄະນະສິດຍາພິບານ, ຄະນະມັຄນາຍົກ, ຫລື ຄະນະກັມມະການ ຄຳຕອບກໍຄືວ່າບໍ່ມີໃຜເລີຍທີ່ກ່າວມານີ້. ໃນພວກເຮົາບໍ່ມີໃຜເລີຍໄດ້ສ້າງຄຣິສຕະຈັກຂຶ້ນມາ ແລະບໍ່ມີໃຜເລີຍໄດ້ຕາຍເທິງໄມ້ກາງແຂນເພື່ອຄຣິສຕະຈັກ. ພວກເຮົາທັງຫມົດໄດ້ຖືກດຶງອອກມາ, ຖືກໄຖ່, ແລະໃຫ້ກັບຄືນດີກັບພຣະເຈົ້າໂດຍທາງພຣະເຢຊູ ຜູ້ຊົງສ້າງສັພທຸກສິ່ງ ແລະຜູ້ຊົງຖືກຄຶງຢູ່ເທິງໄມ້ກາງແຂນ ແລະໄດ້ຄືນຂຶ້ນມາພຣະອົງຊົງເປັນພຣະຜູ້ເປັນເຈົ້າ.

ເມື່ອເບິ່ງແລ້ວ ພຣະຄຣິດຊົງເປັນຜູ້ກະທຳໃຫ້ສຳເຣັດ, ມີໃຜແດ່ໃນຖ້າມກາງພວກເຮົາກ້າເວົ້າວ່າ, <u>ນີ້ແມ່ນຄຣິສຕະຈັກຂອງຂ້າພະເຈົ້າ!</u> ພວກເຮົາກ້າເວົ້າບໍ່ວ່າ <u>ຂ້າພະເຈົ້າໄດ້ໃຊ້ຫນີ້ເພື່ອຄຣິສຕະຈັກ?</u> ພວກເຮົາສາມາດຈ່າຍຄ່າຕຶກ ແລະແບ່ງເບົາລາຍຈ່າຍຂອງງົບປະມານ, ແຕ່ພວກເຮົາໄດ້ໃຊ້ເງິນຂອງພຣະເຈົ້າຈ່າຍທັງຫມົດ. ນອກເຫນືອໄປກວ່ານັ້ນບໍ່ມີ

ໃຜເລີຍໃນພວກເຮົາສາມາດຈະເປັນເຄື່ອງບູຊາໄຖ່ອັນສຳລອງຂອງພຣະຄຣິດໃຫ້ແກ່ຄຣິສຕະຈັກໄດ້.

<u>ຜູ້ຕິດຕາມນໍສຕິກ</u> (Gnosticism)
ໃຜເປັນຜູ້ຕໍ່ຕ້ານໂປໂລໃນເມືອງໂກໂລຊາຍ? ຈົດໝາຍຂອງລາວໄດ້ເຜີຍໃຫ້ພວກເຮົາເຫັນວ່າ ຫລັກຄຳສອນຂອງນໍສຕິກໄດ້ແຜ່ຜາຍໃນຄຣິສຕະຈັກ ເມືອງໂກໂລຊາຍ. ນໍສຕິກ (Gnosticism) ຄຳນີ້ມີຄວາມໝາຍວ່າ ຄວາມຮູ້. ພວກ
ເຂົາສອນວ່າ ໂລກນີ້ເປັນໂລກອັນຊົ່ວຮ້າຍ ແລະຮ່າງກາຍຂອງມະນຸດກໍຊົ່ວຮ້າຍ. ພຣະເຈົ້າຊົງແຍກພຣະອົງເອງໃຫ້ໄກຈາກໂລກນີ້. ເມື່ອພຣະເຢຊູມາບັງເກີດເປັນມະນຸດ ພຣະອົງຈະເປັນພຣະເຈົ້າບໍ່ໄດ້.[3]

ໂປໂລໄດ້ທ້າທາຍຜູ້ຕິດຕາມ ນໍສຕິກ ທີ່ເຂົ້າໃຈເຣື່ອງພຣະຄຣິດຜິດ. ໃນພຣະທັມໂກໂລຊາຍ 1:19 ແລະ2:9 ລາວໄດ້ກ່າວເຖິງເຣື່ອງພຣະເຈົ້າສະຖິດຢູ່ໃນພຣະບຸດຢ່າງເຕັມບໍຣິບູນ.

ເມື່ອພວກເຮົາຮັບເອົາພຣະຄຣິດ, ສະນັ້ນ ພວກເຮົາໄດ້ຮັບຄວາມບໍຣິບູນຂອງພຣະເຈົ້າເຂົ້າມາໃນຊີວິດຂອງພວກເຮົາ. ຊີວິດທີ່ເຕັມລົ້ນດ້ວຍພຣະຄຣິດກໍໄດ້ບັນລຸຜົນຕາມພຣະປະສົງຂອງພຣະເຈົ້າໃນການຊົງສ້າງໂລກ.

<u>ຄຳຖາມ</u>
1. ເຣື່ອງກ່ຽວກັບວ່າພຣະຄຣິດຊົງເປັນເອກນັ້ນຈະເຮັດໃຫ້ການຕັດສິນໃຈຂອງພວກເຮົາແຕ່ລະວັນແຕກຕ່າງຢ່າງໃດ?
2. ຄຳຮັບຮອງຈາກໂປໂລ ໃນ1:16 ສິ່ງທັງປວງເຫລົ່ານີ້ແມ່ນພຣະເຈົ້າໄດ້ສ້າງໂດຍທາງພຣະຄຣິດ ແລະສຳລັບພຣະຄຣິດ ທ່ານຈະຕີຄວາມໝາຍໃນຂໍ້ນີ້ວ່າຢ່າງໃດ?
3. ເຣື່ອງການເປັນເອກຂອງພຣະເຢຊູນັ້ນຈະປະສານງານກັບນະໂຍບາຍຂອງຄຣິສຕະຈັກ, ລະບຽບການ, ແລະພາກປະຕິບັດໄດ້ຢ່າງໃດ?
4. ທ່ານຈະສະແດງອອກໃຫ້ຄົນອື່ນຮູ້ວ່າ ທ່ານໃຫ້ພຣະຄຣິດເປັນນ້ຳເບີນຶ່ງໃນຊີວິດຂອງທ່ານໄດ້ຢ່າງໃດ?

---

[1] ຄຳສາຣະພາບຂອງທ່ານ ອໍກັດສຕິນ, Augustin, Confession, I.1.
[2] "ພຣະເຢຊູຄືຣາກໝັ້ນ" ບົດເພງຄຣິສຕຽນ, 1989
[3] ພຣະທັມໂກໂລຊາຍ, ຄູ່ມືພຣະຄັມພີຂອງບຣອດແມນ, Colossians, The Broadman Bible Commentary, 1971

# ບົດຮຽນບົດທີ 7
# ລຶບລ້າງກົດລະບຽບ

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ໂກໂລຊາຍ 2:6-23
ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ໂກໂລຊາຍ 1:24-2:23
ຈຸດສໍາຄັນຂອງບົດຮຽນນີ້: ຊີວິດຄຣິສຕຽນບໍ່ຢູ່ທີ່ພິທີແລະການຮັກສາກົດແຕ່ເປັນການເພິ່ງໃນພຣະເຢຊູຄຣິດ, ຜູ້ຊົງສົມບູນທຸກຢ່າງສໍາລັບຜູ້ທີ່ເຊື່ອ.

ຄໍາຖາມເພື່ອການສໍາຣວດ: ພິທີການແລະກົດລະບຽບມີສ່ວນແນວໃດໃນຊີວິດຄຣິສຕຽນ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສໍາຣວດວ່າພິທີການແລະກົດລະບຽບມີສ່ວນແນວໃດໃນຊີວິດຂອງຂ້ອຍ ແລ້ວຕັດສິນໃຈທີ່ຈະເພິ່ງພຣະເຢຊູຄຣິດຜູ້ດຽວເທົ່ານັ້ນ.

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສໍາຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

## ຄໍານໍາ

ພຣະເຢຊູພຽງພໍສໍາລັບພວກເຮົາບໍ່? ໄມ້ກາງແຂນຂອງພຣະຄຣິດຊ່ວຍເຮົາໃຫ້ຄືນດີກັບພຣະເຈົ້າຫລືບໍ່? ຖ້າທ່ານເຊື່ອໃນພຣະຄຣິດ, ທ່ານກໍຢູ່ໃນພຣະອົງ. ບໍ່ພຽງແຕ່ພວກເຮົາໄດ້ຮັບການອະພັຍຄວາມຜິດບາບເທົ່ານັ້ນ ແຕ່ພວກເຮົາຍັງໄດ້ບັບຕິສະມາເຂົ້າໃນການຕາຍຂອງພຣະຄຣິດ, ພວກເຮົາໄດ້ຕາຍໄປຈາກຫລັກການຕ່າງໆຂອງໂລກ, ແລະພວກເຮົາໄດ້ເປັນຄືນມາດ້ວຍກັນກັບພຣະຄຣິດເພື່ອດໍາເນີນຊີວິດໃໝ່.

ມີຄົນບາງກຸ່ມໃນເມືອງໂກໂລຊາຍໃນສັຕວັດທີນຶ່ງໄດ້ພຍາຍາມບັງຄັບຄຣິສຕຽນໃຫ້ເຂົ້າຢູ່ໃນກົດລະບຽບຂອງສາສນາຢູດາຍ. ຄົນເຫລົ່ານີ້ພຍາຍາມກີດກັ້ນເສຣີພາບຂອງຄຣິສຕຽນພ້ອມທັງບັງຄັບໃຫ້ພວກເຂົາເຈົ້າໄປເຮັດພິທີຂອງພວກຊາວຢິວ ແລະໄປຖືກົດເຣື່ອງອາຫານ. ການເນັ້ນເຣື່ອງກົດລະບຽບຂອງຊາວຢິວໃນຄຣິສຕະຈັກຂອງພຣະຄຣິດໄດ້ສ້າງຄວາມສະດຸດໃຈໃຫ້ຜູ້ເຊື່ອຫລາຍໆຄົນ.

ໂປໂລຮັກຄຣິສຕະຈັກຂອງພຣະຄຣິດທີ່ເມືອງໂກໂລຊາຍ. ທ່ານໄດ້ພຍາຍາມສັ່ງສອນພວກຜູ້ເຊື່ອໃຫ້ເຕີບໃຫຍ່ແລະໃຫ້ຄົບຖ້ວນໃນພຣະຄຣິດ (1:28-29). ຄວາມສົມບູນນີ້ບໍ່ໄດ້ເກີດຂຶ້ນເພາະການຖືກົດລະບຽບແຕ່ມາຈາກການຕັ້ງໝັ້ນຢູ່ໃນ

ພຣະຄຣິດ. ໂປໂລຈຶ່ງໝາຍເຕືອນຄຣິສຕຽນທີ່ເມືອງໂກໂລຊາຍວ່າ, "ການມີພຣະຄຣິດນັ້ນພຽງພໍແລ້ວ." ແລະພວກເຂົາບໍ່ຈຳເປັນຕ້ອງມີກົດລະບຽບໃດໆມາເພີ້ມໃສ່ການຊົງໄຖ່ຂອງພຣະຄຣິດອີກ.

<u>ໃນພຣະຄຣິດ, ພຣະເຈົ້າສະຖິດຢູ່ຢ່າງຄົບບໍຣິບູນ (2:6-9)</u>

ພວກຄຣູສອນປອມທີ່ເມືອງໂກໂລຊາຍອ້າງຕົວເອງວ່າເປັນຜູ້ມີສະຕິປັນຍາແລະພວກເຂົາຮູ້ຄວາມຈິງທີ່ຄົນທັງຫລາຍບໍ່ອາດຈະຮູ້ໄດ້. ໃນຂະນະດຽວກັນພວກເຂົາກໍພຍາຍາມເຮັດໃຫ້ພຣະຄຣິດມີຄວາມໝາຍນ້ອຍລົງ ພ້ອມຍັງຕັ້ງຕົນເປັນຜູ້ພິພາກສາຄຣິສຕຽນ. ພວກເຂົາກໍພຍາຍາມເຮັດໃຫ້ພຣະຄຣິດມີຄວາມໝາຍນ້ອຍລົງໂດຍການແຍກພຣະຄຣິດໃຫ້ໄກອອກຈາກພຣະຜູ້ເປັນເຈົ້າ (2:8-9). ພວກເຂົາຈະອ້າງວ່າ ພຣະເຈົ້າດີຫລາຍແຕ່ໂລກນີ້ຊົ່ວຊ້າ ສນັ້ນຜູ້ສ້າງໂລກກໍເປັນຜູ້ຊົ່ວຊ້າ. ພຣະເຈົ້າຈະບໍ່ແຕະຕ້ອງສິ່ງຊົ່ວຊ້າ; ນອກຈາກໄດ້ສົ່ງພວກເທວະດາແລ້ວ, ພຣະເຈົ້າໄດ້ສົ່ງພຣະຄຣິດ ເປັນຜູ້ສຸດທ້າຍເພື່ອລົງມາໃນໂລກ. ສະນັ້ນພຣະຄຣິດກໍເປັນຜູ້ທີ່ຢູ່ຫ່າງໄກຈາກພຣະເຈົ້າ.

ໂປໂລໄດ້ໂຕ້ຕອບຄຳສອນປອມນີ້ວ່າ, "ພຣະບິດາຊົງພໍພຣະທັຍ ທີ່ຈະໃຫ້ສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະບຸດຢ່າງເຕັມບໍຣິບູນ" (1:19). ພຣະຄຣິດຄືພຣະບຸດຂອງພຣະເຈົ້າ. ນອກນັ້ນພວກເຮົາຍັງໄດ້ຮຽນຮູ້ຈາກ 2:2 ວ່າ, ພຣະຄຣິດຄື "ຂໍ້ລັບເລິກຂອງພຣະເຈົ້າ" ແລະໃນພຣະຄຣິດ "ຊັບສົມບັດແຫ່ງສະຕິປັນຍາແລະຄວາມຮູ້ທັງໝົດຊົງບັງຊ່ອນໄວ້." ໂປໂລຂຽນໃນ 2:9 ວ່າ, "ໃນພຣະອົງນັ້ນສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະກາຍຢ່າງເຕັມບໍຣິບູນ."

ມີຫລາຍຄົນໃນສມັຍນີ້ ພຍາຍາມເຮັດໃຫ້ພຣະຄຣິດມີຄວາມໝາຍນ້ອຍລົງໃນຫລັກສາສນາສາດຂອງພວກເຂົາ. ໝາຍຂອງຄຳສອນປອມຢ່າງນີ້ງຄືການເຮັດໃຫ້ພຣະຄຣິດມີຄວາມໝາຍນ້ອຍລົງໃນຫລັກຄວາມເຊື່ອ. ບາງສາສນາຍັງໄດ້ພຍາຍາມສອນວ່າພຣະເຢຊູເປັນພຽງມະນຸດທັມມະດາ ແລະເບິ່ງຂ້າມຄວາມເປັນພຣະເຈົ້າຂອງພຣະອົງ.

<u>ໃນພຣະຄຣິດ, ພວກເຮົາໄດ້ຮັບທຸກຢ່າງທີ່ຕ້ອງການ (2:10-15)</u>

ພວກເຮົາໄດ້ຮັບຄວາມພົ້ນເພາະເຮົາເຊື່ອແລະຮັບເອົາພຣະຄຣິດມາເປັນພຣະເຈົ້າໃນຊີວິດ (2:5-6). ໃນຂໍ້ 6-7, ພວກເຮົາຮຽນຮູ້ວ່າ ເຮົາເຕີບໃຫຍ່ໃນພຣະຄຣິດເມື່ອເຮົາ "ດຳເນີນຊີວິດໃນພຣະອົງ...ຢັ່ງຮາກແລະກໍ່ຮ່າງໃນພຣະອົງ ແລະຕັ້ງໝັ້ນໃນຄວາມເຊື່ອ ຕາມທີ່ພວກເຮົາທັງຫລາຍໄດ້ຮັບຄຳສັ່ງສອນມາແລ້ວ. " ເມື່ອພວກເຮົາດຳເນີນຊີວິດໃນພຣະຄຣິດຜູ້ທີ່ພຣະເຈົ້າສະຖິດຢູ່ຢ່າງເຕັມບໍຣິບູນ, ພວກເຮົາທັງຫລາຍກໍຈະໄດ້ຊີວິດຄົບບໍຣິບູນໃນພຣະອົງ. ເມື່ອພວກເຮົາມີພຣະຄຣິດ, ພວກເຮົາກໍມີທຸກຢ່າງ.

ພຣະທັມຂໍ້ 10-15 ເນັ້ນເຖິງຄວາມຄົບບໍຣິບູນໃນພຣະຄຣິດ. ພຣະທັມຕອນນີ້ເວົ້າເຖິງຄວາມຈິງດ້ານຈິດວິນຍານເມື່ອທ່ານມີຄວາມສັມພັນສ່ວນຕົວກັບພຣະຄຣິດ. ທຸກຢ່າງໄດ້ສຳເຣັດລົງບໍ່ແມ່ນຍ້ອນພິທີການຕ່າງໆ ແຕ່ຍ້ອນການກະທຳຂອງພຣະເຈົ້າໃນພຣະເຢຊູຄຣິດ. ໂດຍຣິດອຳນາດຂອງພຣະເຈົ້າ, ພວກເຮົາຖືກຝັງໄວ້ກັບພຣະອົງໃນພິທີບັບຕິສະມາ ແລະໄດ້ຮັບການຊົງບັນດານໃຫ້ຄືນມາດ້ວຍກັນກັບພຣະອົງ (2:12). ນອກນັ້ນພຣະເຈົ້າໄດ້ຊົງບັນດານໃຫ້ພວກເຮົາມີຊີວິດຮ່ວມກັນກັບພຣະຄຣິດ (2:13).

ພວກເຮົາບໍ່ຈຳເປັນຕ້ອງເຮັດພິທີໃດໆຫລືຮັກສາກົດເພີ້ມເຕີມ ເພາະທຸກຢ່າງໄດ້ຄົບບໍຣິບູນແລ້ວໃນພຣະຄຣິດ. "ພຣະອົງໄດ້ຊົງລຶບລ້າງກົດທີ່ຜູກມັດເຮົາດ້ວຍບັນຍັດຕ່າງໆ ຊຶ່ງຂັດຂວາງພວກເຮົານັ້ນ ແລະໄດ້ຊົງຍົກເລີກເສັຽໂດຍຕອກຕິດໄວ້ທີ່ໄມ້ກາງແຂນ" (2:14). ຊັຍຊະນະທີ່ພຣະຄຣິດໄດ້ຮັບຄື, "ໂດຍໄມ້ກາງແຂນນັ້ນ ພຣະອົງໄດ້ຊົງປົດຜູ້ປົກຄອງ ແລະອຳນາດທັງຫລາຍເສັຽ ແລະໄດ້ຊົງປະຈານເຂົາຢ່າງເປີດເຜີຍ" (2:15). ພຣະເຢຊູຄຣິດໄດ້ຊັຍຊະນະຕໍ່ພວກອຳນາດໃນຈັກວານທີ່ເຮັດໃຫ້ຄົນທັງຫລາຍກາຍເປັນທາດໂດຍການປະກອບພິທີແລະການຮັກສາກົດບັນຍັດຕ່າງໆ.

ໃນພຣະຄຣິດ, ຂໍ້ກົດຖືກທຳລາຍທີ່ໄມ້ກາງແຂນ (2:16-23)

ພວກຄຣູສອນປອມທີ່ເມືອງໂກໂລຊາຍເຊື່ອວ່າການເຊື່ອພຣະຄຣິດນັ້ນຍັງບໍ່ພຽງພໍສຳລັບຄວາມລອດພົ້ນ. ພວກເຂົາຈຶ່ງພາກັນຕັ້ງກົດຂຶ້ນເພີ້ມເຕີມເພື່ອຈະໃຫ້ວຽກຂອງພຣະຄຣິດໄດ້ສຳເຣັດ. ພວກເຂົາໄດ້ບອກຄຣິສຕຽນວ່າ: ພວກທ່ານຈະຕ້ອງຖືຮັກສາກົດຕ່າງໆເຫຼົ່ານີ້ ເພື່ອພວກທ່ານຈະໄດ້ເປັນຜູ້ຄົບບໍຣິບູນເໝືອນກັບພວກເຮົາ. ໂປໂລໂຕ້ຕອບພວກເຂົາໃນ 1:28-29 ແລະໃນຕອນນີ້ວ່າ, ມີທາງດຽວທີ່ທຸກຄົນຈະຄົບບໍຣິບູນໄດ້ ຄືທາງຂອງພຣະຄຣິດ, ຂ້າພະເຈົ້າພຍາຍາມນຳພາພວກທ່ານໃຫ້ມາຫາພຣະເຈົ້າດ້ວຍຄວາມບໍຣິບູນທຸກຢ່າງ.

ພວກຄຣູສອນປອມຖືວ່າພວກຕົນເປັນຕົວຢ່າງທີ່ຖືກຕ້ອງໃນເຣື່ອງການກິນການດື່ມ ແລະໃນການຮັກສາພິທີທາງສາສນາແລະການຮັກສາວັນຊະບາໂຕ (2:16, 21). ພວກເຂົາລືມເຖິງຄຳສອນຂອງພຣະເຢຊູຄຣິດທີ່ວ່າ, "ວັນຊະບາໂຕຊົງຕັ້ງໄວ້ເພື່ອມະນຸດ ບໍ່ແມ່ນຊົງສ້າງມະນຸດໄວ້ສຳລັບວັນຊະບາໂຕ" (ມຣກ 2:28). ຈາກພຣະທັມ 2:15-17, ພວກເຮົາພໍສລູບໄດ້ວ່າ, ຖ້າພຣະເຢຊູໄດ້ຊົງປົດຜູ້ປົກຄອງແລະອຳນາດທັງຫລາຍແລ້ວ, ພວກເຮົາກໍບໍ່ຕ້ອງໃຫ້ພວກເຂົາເປັນຜູ້ພິພາກສາພວກເຮົາອີກຕໍ່ໄປ. ກົດເຣື່ອງການກິນການດື່ມແລະວັນຊະບາໂຕເປັນພຽງເງົາ ແຕ່ຕົວຈິງນັ້ນຄືອົງພຣະເຢຊູຄຣິດ. ຖ້າພວກເຮົານຳເອົາກົດແລະພິທີຕ່າງໆເຂົ້າມາເພີ້ມເຕີມຄວາມເຊື່ອ, ພວກເຮົາກໍໄດ້ເຮັດຄວາມຜິດໂດຍບໍ່ໄດ້ "ຍຶດໝັ້ນໃນພຣະຄຣິດຜູ້ເປັນສີສະ" (2:19).

ຄວາມໝາຍສຳລັບພວກເຮົາ:

ຄຣິສຕຽນຈະບໍ່ຖືກພິພາກສາເພາະຄວາມຜິດພາດເລັກນ້ອຍໃນຊີວິດ ແຕ່ດ້ວຍພຣະຄຸນອັນຮຸ່ງເຮື່ອງຂອງພຣະເຈົ້າ. ບັດຍັດແລະກົດລະບຽບຕ່າງໆບໍ່ສາມາດຊ່ວຍໃຫ້ພວກເຮົາລອດພົ້ນໄດ້. ພຣະເຢຊູຄຣິດໄດ້ຊົງທຳໃຫ້ສຳເຣັດໃນສິ່ງທີ່ບັນຍັດແລະກົດລະບຽບທັງໝົດບໍ່ສາມາດຈະເຮັດໄດ້. ໃນພຣະຄຣິດ, ພວກເຮົາມີອິສຣະພາບຈາກອຳນາດແລະການພິພາກສາຂອງບັນຍັດແລະກົດລະບຽບທັງຫລາຍ.

ຄຳຖາມ:

1. ທ່ານໄດ້ເຫັນຫລັກຖານກ່ຽວກັບຂໍ້ກົດແນວໃດແດ່ໃນຄຣິສຕະຈັກໃນສມັຍນີ້?
2. ການກ່າວໂທດຄົນອື່ນມີສ່ວນແນວໃດໃນຊີວິດທ່ານ ແລະສິ່ງນັ້ນເຮັດໃຫ້ທ່ານຕ້ອງກ່າວໂທດຄົນອື່ນບໍ່? ຄຳສອນຂອງພຣະເຢຊູເຣື່ອງການກ່າວໂທດໃນມັດທາຍ 7:1 ມີຄວາມໝາຍແນວໃດສຳລັບພວກເຮົາ?
3. ທ່ານຈະເອົາຄຳສອນຂອງໂປໂລໃນ ໂກໂລຊາຍ 2:9-10 ໄປໃຊ້ໄດ້ແນວໃດ? ຊີວິດຂອງທ່ານກ້າວໄປເຖິງຄວາມບໍຣິບູນບໍ່ເພາະທ່ານມີພຣະຄຣິດໃນຊີວິດ?
4. ຄຣິສຕຽນຈະສະແດງຄວາມຮັກຂອງພຣະຄຣິດກັບພວກຖືກົດ ແລະຜູ້ທີ່ຖືກກົດບັງຄັບໄດ້ຢ່າງໃດ?
5. ທ່ານຄິດເຫັນວ່າຄຣິສຕຽນບາງຄົນມັກຈະເພິ່ງກົດ ແລະເອົາໃຈໃສ່ເຣື່ອງກົດເກນຫລາຍກວ່າເພິ່ງພຣະຄຣິດບໍ່?

# ບົດຮຽນບົດທີ 8
# ຊີວິດໃໝ່

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ໂກໂລຊາຍ 3:1-4:1
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ໂກໂລຊາຍ 3:1- 4:6
ຈຸດສຳຄັນຂອງບົດຮຽນນີ້: ຄຣິສຕຽນຈະຕ້ອງດຳເນີນຊີວິດແບບໃຫ້ຄົນທັງຫລາຍໄດ້ເຫັນພຣະຄຣິດໃນຊີວິດເຂົາ.

ຄຳຖາມເພື່ອການສຳຣວດ: ຄວາມເຊື່ອຄວນມີຜົນສະທ້ອນແນວໃດໃນຊີວິດຂອງພວກເຮົາ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສລູບເບິ່ງຄຳສອນຂອງໂປໂລເຣື່ອງຊີວິດຄຣິສຕຽນ ແລະຈະນຳເອົາຄຳສອນຢ່າງນ້ອຍນຶ່ງຢ່າງໄປໃຊ້ໃນຊີວິດ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.
- ເສີມສ້າງຜູ້ນຳທີ່ມີຈິດໃຈເປັນຜູ້ຮັບໃຊ້.

## ຄຳນຳ

ຄຣິສຕຽນຈະດຳເນີນຊີວິດແບບມີສິນທັມໂດຍບໍ່ຈຳເປັນຈະຕ້ອງເປັນຜູ້ສອນສິນທັມໄດ້ແນວໃດ? ພວກເຮົາສາມາດເປັນຄົນບໍຣິສຸດໂດຍບໍ່ຕ້ອງອວດອ້າງວ່າ "ຂ້ອຍບໍຣິສຸດກ່ອນເຈົ້າ" ໄດ້ບໍ່? ສຳລັບຄຣິສຕຽນ, ພຣະເຢຊູຊົງເປັນຊີວິດທີ່ແທ້ຈິງຂອງພວກເຮົາ; ພຣະອົງຊົງເປັນທຸກຢ່າງ ແລະຊົງຢູ່ໃນທຸກຢ່າງ. "ຊີວິດຂອງພວກເຈົ້າກໍຊົງບັງໄວ້ດ້ວຍກັນກັບພຣະຄຣິດໃນພຣະເຈົ້າ" (3:3). ໃນພຣະຄຣິດ, ພວກເຮົາຈຶ່ງສາມາດດຳເນີນຊີວິດໂດຍຣິດເດດຂອງພຣະເຈົ້າ.

ໃນບົດຮຽນນີ້, ໂປໂລຊັກຊວນຊາວຄຣິສຕຽນທີ່ເມືອງໂກໂລຊາຍໃຫ້ດຳເນີນຊີວິດຂອງພວກເຂົາເຈົ້າໃຫ້ສົມກັບຖານະຂອງຕົນໃນພຣະເຢຊູຄຣິດ. ໂປໂລມີຄວາມຫ່ວງໃຍພວກຄຣິສຕຽນທີ່ມົວເມົາກັບໂລກຫລາຍຈົນພວກເຂົາບໍ່ເປັນປໂຍດຫຍັງເລີຍສຳລັບຣາຊອານາຈັກຂອງພຣະເຈົ້າ. ໂປໂລບອກວ່າ, "ຈົ່ງເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງ" (3:2).

### ສິ່ງໃດທີ່ຄວນປະຖິ້ມ (3:1-9)
ໃນພຣະທັມຂໍ້ 1-9, ໂປໂລກ່າວວ່າໃນພຣະຄຣິດ ຜູ້ເຊື່ອຈະຕ້ອງຖິ້ມນິສັຍທີ່ອ່ຽງໄປຝ່າຍໂລກ ແລະຄວາມຜິດບາບທີ່ເຄີຍເຮັດມາກ່ອນ. ທ່ານເຕືອນວ່າຜູ້ເຊື່ອທີ່ແທ້ຈິງໄດ້ຕາຍໄປແລ້ວ (3:3) ສນັ້ນພວກເຂົາກໍບໍ່ຕ້ອງດຳເນີນຊີວິດຕາມກົດ

ບັນຍັດນັ້ນຕໍ່ໄປ. ຄຣິສຕຽນໄດ້ປະຫານຄວາມຜິດບາບແລ້ວ ຄວາມຜິດບາບທີ່ຈະນຳພຣະພິໂຣດຂອງພຣະເຈົ້າມາສູ່ຕົວເອງ. ໂປໂລສັ່ງວ່າ, "ແຕ່ບັດນີ້ເຈົ້າທັງຫລາຍຈົ່ງເລີກຖິ້ມສິ່ງສາຣະພັດເຫລົ່ານັ້ນເສັຽ" (3:7) ເພາະໃນພຣະຄຣິດທຸກຢ່າງຈະຢູ່ເໝືອນເດີມອີກຕໍ່ໄປບໍ່ໄດ້ (3:8-14).

ຜູ້ເຊື່ອທັງຫລາຍຈະຕ້ອງປະຫານການຫລິ້ນຊູ້, ການຊົ່ວຮ້າຍ, ຣາຄະຕັນຫາ, ແລະຄວາມປາຖນາຊົ່ວ. ຄຣິສຕຽນຈະຕ້ອງປະຫານຄວາມໂລບມາກ. ໃນຕອນນີ້ ໂປໂລທຽບຄວາມໂລບໃສ່ກັບການໄຫວ້ພຣະທຽມ. ພຣະທຽມບໍ່ໄດ້ໝາຍເຖິງຮູບໂຄຣົບທີ່ມະນຸດໄດ້ສ້າງຂຶ້ນແຕ່ຢ່າງດຽວ ແຕ່ໝາຍເຖິງທຸກຢ່າງທີ່ເຮົາຖືວ່າສຳຄັນທີ່ສຸດໃນຊີວິດຊຶ່ງບໍ່ແມ່ນພຣະຜູ້ເປັນເຈົ້າ. ການມີເງິນຫລາຍນັ້ນດີ ແຕ່ຢ່າໃຫ້ເງິນມີເຮົາ; ທຸກຢ່າງລ້ວນແຕ່ເປັນເຣື່ອງອະນິຈັງແລະຫວ່າງເປົ່າ.

ໂປໂລສັ່ງຄຣິສຕຽນໃຫ້ເລີກຖິ້ມຄວາມຄຽດ, ຄວາມໂມໂຫ, ການຄິດປອງຮ້າຍ, ການກ່າວສຽດສີ, ແລະຄຳຫຍາບຊ້າຕ່າງໆ. ພວກເຮົາທີ່ເຊື່ອໃນອົງພຣະຄຣິດຈະຕ້ອງຫລີກເວັ້ນຈາກສິ່ງສາຣະພັດເຫລົ່ານີ້ເພື່ອພຣະເຈົ້າຈະພໍພຣະທັຍກັບຊີວິດຂອງພວກເຮົາ. ນອກນັ້ນຄຣິສຕຽນຈະຕ້ອງຫລີກເວັ້ນຈາກການຕົວະ ແລະການເຮັດແແບບບໍ່ສັດຊື່ ເພາະສິ່ງເຫລົ່ານີ້ ແມ່ນສະພາບມະນຸດເກົ່າແລະບໍ່ເໝາະສົມກັບບຸກຄົນທີ່ເປັນລູກຂອງພຣະເຈົ້າ.

## <u>ສິ່ງໃດທີ່ຄວນສວມໃສ່ (3:10-17)</u>

ໃນພຣະທັມ ໂກໂລຊາຍ 1:15, ໂປໂລໄດ້ບອກຄຣິສຕຽນວ່າພຣະເຢຊູຊົງເປັນແບບລັກສະນະຂອງພຣະເຈົ້າ. ໃນຂໍ້ 3:10, ພວກເຮົາຮູ້ວ່າຄຣິສຕຽນໄດ້ສວມສະພາບໃໝ່ ແລະກຳລັງຖືກສ້າງຂຶ້ນໃໝ່ເພື່ອໃຫ້ມີພຣະລັກສະນະຂອງພຣະເຢຊູຄຣິດ. ການປ່ຽນແປງນີ້ຈະຕ້ອງກ້າວໜ້າຕໍ່ໄປເລື້ອຍໆ ແລະທຸກຢ່າງຈະຄົບບໍຣິບູນລົງເມື່ອພຣະຄຣິດຊົງສເດັດມາປາກົດ (1 ຢຮ 3:2). ພຣະເຈົ້າຊົງມີພຣະປະສົງໃຫ້ມະນຸດທຸກຄົນເປັນເໝືອນພຣະເຢຊູຄຣິດ ເພື່ອພວກເຂົາຈະໄດ້ມີຄວາມສຳພັນກັບພຣະອົງແລະດຳເນີນຊີວິດຢູ່ກັບພຣະອົງຕລອດໄປເປັນນິດ.

ພຣະເຈົ້າຊົງເລືອກທຸກຄົນໃຫ້ໄດ້ຮັບຊີວິດໃໝ່ (3:11). ໃນພຣະຄຣິດພວກເຮົາບໍ່ມີຄວາມແຕກຕ່າງເຣື່ອງສັນຊາດ, ເຣື່ອງການສຶກສາ, ແລະເຣື່ອງຖານະດ້ານເສຖກິດ. ພວກເຮົາແຕ່ລະຄົນຕ່າງກໍມີເປົ້າໝາຍຂອງໃຜລາວ; ບາງຄົນອາດຈະມີຄວາມໄຝ່ຝັນເຣື່ອງການເມືອງ, ອີກບາງຄົນອາດຈະມີຄວາມຄິດຂອງຕົວເອງເຣື່ອງສາສນາ. ແຕ່ໃນຄຣິສຕະຈັກຂອງພຣະເຈົ້າ, ຄຣິສຕຽນຢ່າໃຫ້ສິ່ງເຫລົ່ານັ້ນພາເຮົາໃຫ້ລືມຈຸດສຳຄັນຂອງຊີວິດຊຶ່ງແມ່ນອົງພຣະເຢຊູຄຣິດຂອງພວກເຮົາທັງຫລາຍ.

ພວກເຮົາຈົ່ງສວມເອົາພຣະຄຣິດແລ້ວເຮົາຈະມີໃຈເມດຕາ, ໃຈປານີ, ໃຈຖ່ອມລົງ, ໃຈອ່ອນສຸພາບ, ແລະໃຈອົດທົນດົນນານ (3:12). ພຣະຄຣິດມີໃຈອ່ອນສຸພາບ. ຖ້າພວກເຮົາປະພຶດຕົວແບບບໍ່ສຸພາບກັບຄົນທັງຫລາຍ, ພວກເຮົາກໍສິ່ງຮູບພຣະຄຣິດທີ່ບໍ່ຖືກຕ້ອງໃຫ້ຄົນທັງຫລາຍໄດ້ເຫັນ. ພວກເຮົາຈະຕ້ອງຍົກໂທດໃຫ້ກັນແລະກັນ ເພາະພຣະເຈົ້າໃນພຣະຄຣິດໄດ້ຊົງໂຜດຍົກໂທດໃຫ້ພວກເຮົາ (3:13). ໂປໂລຍັງໄດ້ບອກພວກເຮົາໃຫ້ສວມເອົາຄວາມຮັກໃສ່ໃນຕົວເຮົາ, ໃຫ້ເອົາຄວາມຮັກ "ເປັນສາຍຜູກມັດທຸກສິ່ງໄວ້ໃຫ້ຄວາມຄົບຖ້ວນ" (3:14).

ໃນພຣະທັມຂໍ້ 3:15-17, ພວກເຮົາຮູ້ວ່າພຣະເຢຊູຄຣິດຊົງຄຸ້ມຄອງຈິດໃຈຂອງພວກເຮົາດ້ວຍສັນຕິສຸກຂອງພຣະອົງ. ສນັ້ນໃຫ້ພວກເຮົາຈົ່ງຮ້ອງເພງສັຣເສີນ, ເພງນະມັສການ, ແລະເພງຍ້ອງຍໍສັຣະເສີນ ຖວາຍແດ່ພຣະເຈົ້າດ້ວຍໃຈໂມທະນາພຣະຄຸນ. ຄຳສອນຂອງໂປໂລໃນຕອນນີ້ໄດ້ເຕືອນພວກເຮົາທັງຫລາຍວ່າ ຢ່າໃຫ້ຄຣິສຕະຈັກຂອງພຣະຄຣິດແຕກແຍກກັນເພາະສຽງເພງນະມັສການທີ່ອາດຈະບໍ່ຖືກກັບຣົດນິຍົມຂອງຜູ້ໃດຜູ້ນຶ່ງ, ແຕ່ໃຫ້ໃຊ້ສຽງເພງເພື່ອເປັນການສັຣເສີນ, ການນະມັສການ, ແລະການຂອບພຣະຄຸນພຣະເຈົ້າ.

วิທີດຳເນີນຊີວິດໃນບ້ານແລະທີ່ທຳງານ (3:18-4:1)
ແມ່ນຫຍັງຄືສິ່ງທີ່ຈຳເປັນທີ່ສຸດໃນຄອບຄົວ? ໂປໂລໃຫ້ຄຳຕອບວ່າ, ຄວາມສຳພັນສ່ວນຕົວກັບພຣະເຢຊູຄຣິດເຈົ້າ. ມາເຖິງຕອນນີ້ ໂປໂລໄດ້ໃຫ້ຄຳອະທິບາຍເຣື່ອງຄວາມສຳພັນລະຫວ່າງຜົວແລະເມັຽ, ລະຫວ່າງພໍ່ແມ່ແລະລູກ, ແລະລະ ຫວ່າງຂ້ອຍຂ້າແລະເຈົ້ານາຍ. ໃນສມັຍຂອງໂປໂລ, ສັງຄົມຖືວ່າຜູ້ຍິງເປັນພຽງເຂົ້າຂອງແລະບໍ່ມີສິດທີຫຍັງເລີຍ. ຝ່າຍເຈົ້ານາຍກໍມີສິດເຕັມສ່ວນຕໍ່ຂ້ອຍຂ້າຂອງຕົນ.

ຖ້າຈະຄິດເບິ່ງຄຳສອນຕອນນີ້ໃສ່ສມັຍປັດຈຸບັນ ທ່ານອາດຈະຖາມຕົວເອງວ່າ: ຖ້າປາສຈາກພຣະຄຣິດ,ຈຳເປັນຫຍັງທີ່ຜົວແລະເມັຽຈະຕ້ອງຟັງຄວາມກັນ ນອກຈາກຈະຟັງພຣະເຈົ້າ? ຈຳເປັນຫຍັງທີ່ພວກເຮົາຈະຕ້ອງຮັກ, ເຊື່ອຟັງ, ຫລືລ້ຽງດູ ຖ້າບໍ່ເຫັນແກ່ພຣະເຈົ້າ? ຄວາມຈິງແລ້ວ, ຄວາມສຳພັນໃດໆກໍຕາມຈະຂາດຄວາມພຍາຍາມຂອງທັງສອງຝ່າຍບໍ່ໄດ້. ໂດຍສເພາະໃນຄອບຄົວ, ແຕ່ລະຄົນຈະຕ້ອງເຮັດພາຣະຂອງຕົວເອງ ເພື່ອເສີມສ້າງຄອບຄົວໃຫ້ເຂັ້ມແຂງ. ພວກເຮົາຍອມເຮັດທຸກຢ່າງນັ້ນກໍເພາະເຫັນແກ່ພຣະຄຣິດ. ເພາະວັນນຶ່ງພວກເຮົາທຸກຄົນຈະຕ້ອງປາກົດຕົວຕໍ່ພຣະພັກຂອງພຣະອົງແລະໃຫ້ຄຳຕອບສຳລັບທຸກຢ່າງທີ່ເຮົາໄດ້ກະທຳໃນຊີວິດນີ້. ຮ່ວມຢູ່ໃນນັ້ນມີ ການຮັກຄູ່ຄອງ, ການລ້ຽງດູລູກ, ແລະການປະພຶດກັບນາຍຈ້າງ ແລະລູກຈ້າງຂອງພວກເຮົາ.

ພຣະທັມເອເຟໂຊ 5:21 ສອນໃຫ້ສາມີແລະພັລຍາຈົ່ງຍອມຟັງເຊິ່ງກັນແລະກັນເພາະຄວາມຢຳເກງພຣະຄຣິດ. ການຍອມຢູ່ໃຕ້ບັງຄັບຂອງກັນແລະກັນ ບໍ່ໄດ້ໝາຍເຖິງວ່າຝ່າຍນຶ່ງຝ່າຍໃດເປັນຝ່າຍຖືກ ແຕ່ເພາະຄວາມຮັກແລະການບໍ່ເຫັນແກ່ຕົວ. ໃນ ເອເຟໂຊ 5:25, ໂປໂລເຕືອນພວກສາມີວ່າ, "ຈົ່ງຮັກພັຣຍາຂອງຕົນ ເໝືອນດັ່ງພຣະຄຣິດໄດ້ຊົງຮັກຄຣິສຕະຈັກ ແລະຊົງສະລະພຣະອົງເອງ."

ໂປໂລສັ່ງສອນໃຫ້ພໍ່ແມ່ຈົ່ງໜູນໃຈລູກເຕົ້າ ແລະຝ່າຍລູກກໍໃຫ້ເຊື່ອຟັງພໍ່ແມ່ ເພາະການເຮັດດັ່ງນັ້ນເປັນທີ່ຊອບພຣະທັຍຂອງພຣະເຈົ້າ (3:20-21). ພຣະເຈົ້າສ້າງຄວາມສຳພັນນີ້ຂຶ້ນມາເພື່ອພໍ່ແມ່ຈະໄດ້ປົກປັກຮັກສາແລະລ້ຽງດູລູກຂອງຕົນ. ສນັ້ນພໍ່ແມ່ມີໜ້າທີ່ໃນການຕິສອນໂດຍບໍ່ໃຫ້ພວກລູກຂັດເຄືອງໃຈ.

ຄວາມສຳພັນສຸດທ້າຍໃນບົດຮຽນນີ້ແມ່ນຄວາມສຳພັນລະຫວ່າງນາຍແລະຂ້ອຍຂ້າ. ຂ້ອຍຂ້າຈະຕ້ອງຟັງຄວາມຜູ້ເປັນນາຍຂອງຕົນ (3:22). ຄວາມສຳພັນລະຫວ່າງນາຍແລະຂ້ອຍຂ້າໃນຕອນນີ້ແມ່ນເວົ້າເຖິງສະພາບໃນຄອບຄົວຂອງຊາວໂຣມໃນສມັຍຂອງໂປໂລ. ພວກເຮົາສາມາດນຳຄຳສອນນີ້ມາໃຊ້ສຳລັບຄວາມສຳພັນລະຫວ່າງນາຍຈ້າງແລະລູກຈ້າງໃນສມັຍປັດຈຸບັນ. ພວກເຮົາຈະຕ້ອງເບິ່ງຄຳສອນໃນ 3:22- 4:1 ດ້ວຍອຸດົມການທີ່ວ່າ, "ເມື່ອພວກເຈົ້າທັງຫລາຍຈະເຮັດສິ່ງໃດດ້ວຍວາຈາ ຫລືດ້ວຍການກະທຳກໍຕາມ ຈົ່ງເຮັດທຸກສິ່ງໃນພຣະນາມຂອງພຣະເຢຊູຄຣິດເຈົ້າ..." ສນັ້ນຄຣິສຕຽນຜູ້ທີ່ເປັນລູກຈ້າງ ຫລືພະນັກງານຈະຕ້ອງເຮັດວຽກຂອງຕົນ ບໍ່ແມ່ນພຽງແຕ່ເຫັນແກ່ນາຍຈ້າງ ແຕ່ຕ້ອງທຳງານໃຫ້ດີທີ່ສຸດເໝືອນເຮົາທຳງານເພື່ອພຣະເຈົ້າ. ລູກຈ້າງຈະຕ້ອງຟັງຄວາມນາຍຈ້າງ; ຝ່າຍນາຍຈ້າງກໍຈົ່ງເຮັດທຸກຢ່າງກັບລູກຈ້າງຢ່າງຖືກຕ້ອງແລະຍຸດຕິທັມ. ບໍ່ວ່າທ່ານຈະເປັນລູກຈ້າງຫລືເປັນນາຍຈ້າງ ຈົ່ງຢ່າລືມວ່າພວກເຮົາແຕ່ລະຄົນຈະຕ້ອງໃຫ້ຄຳຕອບກັບພຣະເຈົ້າເຣື່ອງການປະພຶດຂອງຕົນໃນວັນສຸດທ້າຍ.

ຄຳຖາມ:

1. ການຄືນພຣະຊົນຂອງພຣະຄຣິດຈະປ່ຽນແປງຊີວິດປະຈຳວັນຂອງພວກເຮົາແນວໃດແດ່? (3:1-3)

2. ຄວາມສຳພັນສ່ວນຕົວທີ່ເຮົາມີກັບພຣະຄຣິດຈະມີສ່ວນຫຍັງແດ່ກັບຄວາມສຳພັນລະຫວ່າງເຮົາ ແລະບຸກຄົນທີ່

ແຕກຕ່າງກັບເຮົາໃນເຣື່ອງປະເພນີ, ເຊື້ອຊາດ, ແລະ ຖານະທາງເສຖກິດ?

3. ມີຫຍັງແດ່ທີ່ຄຣິສຕະຈັກສາມາດເຮັດໄດ້ເພື່ອຈະຊ່ວຍຜ່ອນຄາຍຄວາມແຕກແຍກທີ່ເກີດຂຶ້ນເພາະຄວາມແຕກຕ່າງກັນຂອງບຸກຄົນ?

4. ມີຫຍັງແດ່ໃນຊີວິດເກົ່າທີ່ທ່ານຈະຕ້ອງປະຖິ້ມ ເມື່ອຊີວິດຂອງທ່ານໄດ້ເຂົ້າຮ່ວມຢູ່ໃນພຣະຄຣິດແລະຣິດອຳນາດຂອງພຣະອົງ? (3:5-9)

5. ມີນິສັຍໃໝ່ໆແນວໃດແດ່ທີ່ທ່ານຈະຕ້ອງສວມໃສ່? (3:10-17)

6. ການປະພຶດຂອງທ່ານໃນທີ່ທຳງານ ເປັນຕົວຢ່າງແນວໃດແດ່ເຣື່ອງພຣະເຢຊູຄຣິດ?

# ບົດຮຽນທີ 9
# ຄຣິສຕະຈັກທີ່ເຮົາຄວນຂອບພຣະຄຸນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: 1 ເທຊະໂລນີກ 1:1-10; 2:13-14
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: 1 ເທຊະໂລນີກ 1:1-10;2:13-14; 3:1-13; 2 ເທຊະໂລນີກ 1:14
ຈຸດສຳຄັນຂອງບົດຮຽນນີ້: ຄຣິສຕະຈັກທີ່ເຮົາຄວນຂອບພຣະຄຸນມີຄວາມສັດຊື່ໃນການປະກາດຂ່າວປະເສີດຜ່ານທາງ ຄວາມເຊື່ອ, ຄວາມຫວັງ, ແລະຄວາມຮັກ.

ຄຳຖາມເພື່ອການສຳຣວດ: ມີຫຍັງແດ່ໃນຄຣິສຕະຈັກຂອງທ່ານທີ່ເຮັດໃຫ້ທ່ານຢາກຈະຂອບພຣະຄຸນພຣະເຈົ້າ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊອກຫາໝາຍສຳຄັນໃນຄຣິສຕະຈັກທີ່ເຮັດໃຫ້ມີການຢາກຈະຂອບພຣະຄຸນ ແລະສຳຫລວດເບິ່ງວ່າຄຣິສຕະຈັກຂອງພວກເຮົາໄດ້ເຮັດສິ່ງເຫລົ່ານັ້ນຫລືບໍ່.

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.
- ສົ່ງເສີມຄອບຄົວໃຫ້ເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຄົນດ້ານວັດຖຸ, ດ້ານຈິດວິນຍານ, ແລະຄວາມຮູ້ສຶກ.
- ສ້າງຜູ້ນຳທີ່ມີນ້ຳໃຈເປັນຜູ້ຮັບໃຊ້.

## ຄຳນຳ

ເພາະພຣະຄຣິດຊົງສະຖິດຢູ່ໃນຊີວິດຂອງມະນຸດ, ຄຣິສຕະຈັກຈຶ່ງສາມາດເປັນພຍານເຣື່ອງຄວາມຈິງກ່ຽວກັບວຽກງານຂອງພຣະວິນຍານບໍຣິສຸດ. ຊີວິດຂອງຄຣິສຕະຈັກບໍ່ໄດ້ໝາຍເຖິງຕຶກອາຄານ ແຕ່ໝາຍເຖິງຊີວິດຂອງຄົນ. ຄຣິສຕຽນຄືຜູ້ທີ່ພຣະເຢຊູໄດ້ຊົງເອີ້ນອອກມາໃຫ້ເຮັດພັນທະກິດຂອງພຣະອົງ. ພຣະເຢຊູຄົງຮູ້ວ່າພວກເຮົາບໍ່ສາມາດທີ່ຈະເປັນຕົວແທນຂອງພຣະອົງໄດ້ຢ່າງຄົບບໍຣິບູນ, ແຕ່ພຣະອົງໄດ້ສະຖາປະນາຄຣິສຕະຈັກຂຶ້ນເພື່ອໃຫ້ເປັນສູນຮ່ວມຂອງຜູ້ທີ່ເຊື່ອທັງຫລາຍ.

ຈົດໝາຍຂອງໂປໂລຫລາຍໆສະບັບໄດ້ສແດງເຖິງຄວາມຮັກຄວາມສຳພັນຂອງລາວທີ່ມີຕໍ່ຄຣິສຕະຈັກຫລາຍແຫ່ງໃນສມັຍນັ້ນ. ຈົດໝາຍເຫລົ່ານັ້ນສະແດງໄດ້ເຖິງຄວາມຍິນດີຂອງໂປໂລໃນຄວາມສຳເຣັດຂອງຄຣິສຕະຈັກ ແລະຄວາມຫ່ວງ ໃຍຂອງລາວໃນຄວາມຜິດພາດຂອງພວກເຂົາ. ໂປໂລລະນຶກເຖິງກິຈການທີ່ຜ່ານມາຂອງຄຣິສຕະຈັກທຸກແຫ່ງທີ່ລາວຊ່ວຍຈັດຕັ້ງ ແລະລາວສາມາດສລູບເຖິງຄຸນລັກສະນະຕ່າງໆທີ່ພາໃຫ້ຄຣິສຕະຈັກເຫລົ່ານັ້ນໄດ້ຮັບຄວາມສຳ

ເຮັດ.

ຜູ້ເຊື່ອແລະຄຣິສຕະຈັກຄືຈຸດສຳຄັນຂອງຄຣິສຕະສາສນາ. ທັງສອງສາມາດເປັນພຍານໃຫ້ກັບຊາວໂລກເຣື່ອງຣິດອຳນາດໃນການປ່ຽນແປງຊີວິດຂອງພຣະເຢຊູຄຣິດເຈົ້າຜູ້ຊົງຄືນມາຈາກຄວາມຕາຍ. ການສຶກສາພຣະທັມ ເທຊະໂລນິກາຈະຊ່ວຍໃຫ້ໄດ້ຮຽນຮູ້ເຖິງວິທີທີ່ຈະຊ່ວຍປັບປຸງແກ້ໄຂຄຣິສຕະຈັກໃນສມັຍນີ້ໃຫ້ດີຂຶ້ນ.

<u>ຄຳອະທິຖານຂອບພຣະຄຸນຂອງສາສນາທູດ (1:1-5)</u>

ໂປໂລເລີ້ມຈົດໝາຍສບັບນີ້ໂດຍການຂອບຄຸນແລະການຍ້ອງຍໍຄຣິສຕະຈັກທີ່ເທຊະໂລນິກ. ທ່ານໄດ້ເວົ້າເຖິງຄວາມເສັຽສະລະຂອງພວກເຂົາທັງຫລາຍເຊັ່ນ "ກິຈການທີ່ເກີດຈາກຄວາມເຊື່ອ," "ການງານອັນໜັກໜ່ວງທີ່ເກີດຈາກຄວາມຮັກ," ແລະ "ຄວາມໝັ່ນພຽນອັນເກີດມາຈາກຄວາມຫວັງ" (1:3). ໂປໂລໄດ້ເວົ້າເຖິງຄຳສອນສຳຄັນສາມຢ່າງທີ່ເຮັດໃຫ້ຊີວິດຄຣິສຕຽນກ້າວໜ້າໄປຄື: ຄວາມເຊື່ອ, ຄວາມຫວັງ, ແລະ ຄວາມຮັກ (ໂຣມ 5:1-5; 1 ກຣທ 13:13; ຄລຕ 5:5-6; ກລຊ 1:4-5).

ຄວາມເຊື່ອໝາຍເຖິງຄວາມໝັ້ນໃຈວ່າ ພຣະເຈົ້າໄດ້ທຳງານເພື່ອຄວາມລອດພົ້ນຂອງໄພ່ພົນຂອງພຣະອົງຜ່ານທາງພຣະເຢຊູຄຣິດ. ຄວາມຮັກຄືສິ່ງທີ່ຄຣິສຕຽນຈະສແດງອອກໃນຄວາມສຳພັນລະຫວ່າງກັນແລະກັນ. ຄວາມຫວັງຄືຄວາມໝັ້ນໃຈວ່າ ພຣະເຈົ້າຜູ້ຊົງເລີ້ມທຸກຢ່າງຜ່າງທາງພຣະເຢຊູຄຣິດຈະນຳພາຄຣິສຕຽນຜ່ານການທົດລອງຕ່າງໆໃຫ້ໄປເຖິງໄຊຊະນະຊຶ່ງຢູ່ໃນພຣະຄຣິດ.

ໂປໂລໄດ້ສແດງຄວາມໝັ້ນໃນວ່າຄຣິສຕຽນທີ່ເທຊະໂລນິກໄດ້ຮັບຂ່າວປະເສີດຢ່າງແທ້ຈິງ ເພາະທ່ານໄດ້ເຫັນຄວາມສັດຊື່ຂອງພວກເຂົາເຈົ້າແລະໄດ້ເຫັນຣິດອຳນາດຂອງພຣະວິນຍານບໍຣິສຸດໃນຖ້າມກາງພວກເຂົາ (1:5). ໂປໂລເອີ້ນພວກຄຣິສຕຽນທີ່ເທຊະໂລນິກວ່າ "ພີ່ນ້ອງທັງຫລາຍ" ໃນ 1:4 (ພຣະຄັມພີພາສາອັງກິດໃຊ້ຄຳວ່າ "ອ້າຍທັງຫລາຍ") ຊຶ່ງ ເປັນຄຳເວົ້າທີ່ຖືກຕ້ອງເພາະທ່ານຂຽນຈົດໝາຍນີ້ເຖິງຄຣິສຕຽນທັງຊາຍແລະຍິງ. ຜູ້ຍິງໃນສມັຍນັ້ນບໍ່ໄດ້ອອກໜ້າອອກຕາເໝືອນຜູ້ຍິງໃນສມັຍປັດຈຸບັນ. ແຕ່ພວກເຮົາໄດ້ຮຽນຮູ້ວ່າ "ຜູ້ຍິງສຳຄັນ" ຫລາຍຄົນໄດ້ມີສ່ວນໃນການຮັບໃຊ້ຂອງໂປໂລ (ກິຈການ 17:4).

<u>ຄວາມໄຝ່ຝັນຂອງຜູ້ກໍ່ຕັ້ງຄຣິສຕະຈັກ (1:6-10)</u>

ຄວາມຫວັງຂອງຜູ້ກໍ່ຕັ້ງຄຣິສຕະຈັກກໍຄືຢາກເຫັນຄຣິສຕະຈັກນັ້ນເຕີບໃຫຍ່, ອອກໄປປະກາດແລະນຳຄົນອື່ນໆມາຫາພຣະເຈົ້າ, ແລະມີການຮັບໃຊ້. ຄວາມໄຝ່ຝັນອັນສຳຄັນກໍຄືການຢາກເຫັນຄຣິສຕະຈັກເຫລົ່ານັ້ນສາມາດກຸ້ມຕົວເອງແລະ ເປັນພຍານໃຫ້ກັບພຣະເຈົ້າ. ແນ່ນອນທີ່ສຸດ ທຸກຄົນທີ່ມີສ່ວນໃນການກໍ່ຕັ້ງຄຣິສຕະຈັກໃໝ່ຈະຕ້ອງເຕັມໄປດ້ວຍຄວາມ ຫວັງ. ໃນຂະນະດຽວກັນ ຄວາມກັງວົນແລະຄວາມຢ້ານກົວກໍເປັນເຣື່ອງທີ່ຫລີກບໍ່ໄດ້ເຊັ່ນດຽວກັນ. ໂປໂລແລະສີລາຄົງຈະມີຄວາມໄຝ່ຝັນຫລາຍໆຢ່າງ ໃນເວລາກໍ່ຕັ້ງຄຣິສຕະຈັກຫລາຍແຫ່ງຢູ່ໃນໂຊງເຂດເມືອງເທຊະໂລນິກ. ພ້ອມດຽວກັນເຂົາເຈົ້າກໍຄົງຈະມີຄວາມຫ່ວງໃຍຢູ່ຫລາຍຢ່າງ. ຄຳລາຍງານຈາກຕີໂມທຽວກ່ຽວກັບເຣື່ອງຄຣິສຕະຈັກທີ່ເທຊະໂລນິກໄດ້ນຳຄວາມຕື່ນເຕັ້ນແລະຄວາມຮູ້ສຶກເຖິງຄວາມສຳເຣັດມາໃຫ້ໂປໂລ.ຈົດໝາຍຂອງໂປໂລທີ່ສົ່ງເຖິງຄຣິສຕະຈັກທີ່ເທຊະໂລນິກ ໄດ້ເຕືອນພວກເຮົາເຖິງຄວາມລຳບາກຂອງການເປັນຄຣິສຕຽນໃນສັຕວັດທີນີ້. ໃນຂະນະດຽວກັນ ຈົດໝາຍນີ້ກໍໄດ້ເປັນພຍານເຖິງຄວາມສັດຊື່ແລະຄວາມກ້າຫານຂອງພວກຜູ້ເຊື່ອທັງຫລາຍ.

ບັນຫາທີ່ຄຣິສຕຽນໃນສມັຍນັ້ນຕ້ອງຕໍ່ສູ້ຢູ່ທຸກໆມື້ກໍຄື: (1) ຄວາມຕິຕຽນ ແລະການປອງຮ້າຍຈາກຄົນຢິວບາງກຸ່ມ; (2) ການທົດລອງ ເພາະພວກເຂົາມາຈາກປະເພນີຂອງຄົນຕ່າງຊາດ; (3) ຂາດປະສົບການ ແລະຕົວຢ່າງເຣື່ອງຫລັກ

ຄວາມເຊື່ອ ແລະການປະພຶດຈາກຄຣິສຕະຈັກອື່ນໆ; (4) ການບໍ່ເຂົ້າໃຈຄົນເພື່ອນບ້ານທີ່ບໍ່ເປັນຄຣິສຕຽນ; ແລະ (5) ການເຂົ້າໃຈຜິດເຣື່ອງການກັບມາຄັ້ງທີສອງຂອງພຣະເຢຊູຄຣິດ. ຊີລາອາດຈະໄດ້ໃຊ້ເວລາບໍ່ນ້ອຍໃນການຈັດຕຽມຄຣິສຕຽນພວກນີ້; ຄຳຖາມມີຢູ່ວ່າ: ພວກເຂົາເຂົ້າໃຈດີຫລືບໍ່? ພວກເຂົາຕຽມພ້ອມແລ້ວບໍ່ທີ່ຈະຕໍ່ສູ້ກັບການທົດລອງ?

ລາຍງານເຣື່ອງການປະພຶດທີ່ດີເລີດຂອງຄຣິສຕຽນໃໝ່ໃນເມືອງເທຊະໂລນິກ ເຮັດໃຫ້ໂປໂລ, ຊີລາ, ແລະຕີໂມທຽວມີຄວາມຕື່ນເຕັ້ນເປັນພິເສດ. ແບບຢ່າງເຣື່ອງຄວາມເຊື່ອຂອງຄຣິສຕຽນກຸ່ມນີ້ໄດ້ເປັນຄຳຊ່າລືໄປເຖິງແຂວງມາເກໂດເນັຽ, ແຂວງອະຂາຢາ, ແລະໄປທົ່ວທຸກແຫ່ງຫົນ.

<u>ຜູ້ຮັບໃຊ້ທີ່ຖືກຄວາມລຳບາກ (2:13-14)</u>

ເພາະຄວາມທຸກລຳບາກ ຄຣິສຕຽນທີ່ເມືອງເທຊະໂລນິກຈຶ່ງໄດ້ກາຍເປັນພາກສ່ວນຂອງຄຣິສຕະຈັກທັງຫລາຍທີ່ໄດ້ຖືກຄວາມທຸກລຳບາກມາແລ້ວ (2:14). ຄຣິສຕະຈັກເທຊະໂລນິກເປັນຄຣິຕະຈັກນ້ອຍແລະຍັງບໍ່ມີໂອກາດໄດ້ພົວພັນຫລືຕິດຕໍ່ກັບຄຣິສຕະຈັກອື່ນເທື່ອ. ແຕ່ພວກເຂົາໄດ້ມີສ່ວນຮ່ວມໃນເຣື່ອງການທົນທຸກລຳບາກເໝືອນຄຣິສຕະຈັກທັງຫລາຍ. ໂປໂລສັຣເສີນຄວາມສັດຊື່ຂອງພວກເຂົາແລະຮັບຮູ້ວ່າພວກເຂົາສາມາດຢູ່ໄດ້ເພາະພຣະທັມຂອງພຣະເຈົ້າ.

ຜູ້ທີ່ສັດຊື່ໃນການຕິດຕາມພຣະເຢຊູມັກຈະພົບພໍ້ກັບການຕໍ່ສູ້ແລະການທ້າທາຍນາໆປະການ. ໃນລະຍະບໍ່ນານມານີ້ພວກເຮົາກໍໄດ້ຍິນຂ່າວເຣື່ອງການຂົ່ມເຫງຄຣິສຕຽນ ຢູ່ໃນຫລາຍໆປະເທດ. ພວກເຮົາໄດ້ຍິນຂ່າວເຣື່ອງນັກສາສນາທູດຖືກສັງຫານ, ວິຫານຖືກວາງເພີງ, ຄອບຄົວຖືກແບ່ງແຍກ, ແລະຕໍ່ໆໄປ. ພວກເຮົາແຕ່ລະຄົນອາດຈະມີປະສົບການໃນເຣື່ອງນີ້ເປັນທາງສ່ວນຕົວ. ພວກເຮົາອາດຈະເຄີຍຖືກຄົນອື່ນເຂົ້າໃຈຜິດ, ຖືກເຍາະເຍີ້ຍ, ຫລືຖືກດູຖູກຈາກສັງຄົມທີ່ບໍ່ເປັນຝ່າຍຄວາມເຊື່ອ.

ໂປໂລເຕືອນຄຣິສຕຽນທີ່ເທຊະໂລນິກວ່າຄວາມທຸກທໍຣະມານຂອງພວກເຂົາຍັງບໍ່ສິ້ນສຸດເທື່ອ. ການຖືກຂົ່ມຂູ່ອາດຈະຜ່ານໄປບາງຄັ້ງບາງຄາວ ແຕ່ບັນຫາອື່ນໆກໍຈະກັບມາໃໝ່. ພຣະເຢຊູຄຣິດເຄີຍປະສົບກັບອຸປສັກສັນໃດ, ຄຣິສຕຽນກໍຈະປະສົບກັບອຸປສັກສັນນັ້ນ. ຄຣິສຕຽນໃໝ່ບາງຄົນອາດຈະຖາມໃນຕອນນີ້ວ່າ, ອີກດົນປານໃດນໍຄວາມທຸກລຳບາກ, ການທົດລອງ, ແລະການຕໍ່ສູ້ຄວາມເຊື່ອຂອງພວກເຮົາຈະໝົດໄປ? ໂປໂລບໍ່ສາມາດຈະໃຫ້ຄຳຕອບໃນຂໍ້ນີ້ໄດ້ ແຕ່ສິ່ງນຶ່ງທີ່ທ່ານຮູ້ດີກໍຄື: ພຣະພິໂຣດຂອງພຣະເຈົ້າໄດ້ຕົກໃສ່ຜູ້ທີ່ຕໍ່ສູ້ໄພ່ພົນຜູ້ສັດຊື່ຂອງພຣະເຈົ້າແລ້ວ (2:16) ແລະໃນທີ່ສຸດຊັຍຊະນະຄັ້ງສຸດທ້າຍກໍຈະມາເຖິງພວກຜູ້ເຊື່ອທຸກຄົນ.

<u>ຄຳຖາມ:</u>

1. ຖ້າມີຄຣິສຕຽນໃໝ່ຄົນນຶ່ງຖາມທ່ານເຖິງເຣື່ອງການດຳເນີນຊີວິດຄຣິສຕຽນ, ທ່ານຈະຕອບລາວແນວໃດແດ່?

2. ທ່ານຈະແນະນຳໃຫ້ເຂົາໄປໂບດບໍ່? ມີຫຍັງແດ່ໃນໂບດທ່ານທີ່ຈະຊ່ວຍຄຣິສຕຽນໃໝ່ຄົນນີ້ໃຫ້ເຕີບໃຫຍ່?

3. ມີຫຍັງແດ່ໃນຄຣິສຕະຈັກຂອງທ່ານທີ່ຈະບໍ່ຊ່ວຍໃນການເຕີບໃຫຍ່ສຳລັບຄຣິສຕຽນໃໝ່?

4. ທ່ານຄິດວ່າແມ່ນຫຍັງຄືສິ່ງທີ່ຈະເປັນອຸປສັກອັນຍິ່ງໃຫຍ່ສຳລັບຄົນທີ່ເປັນຄຣິສຕຽນໃໝ່ໃນຄຸ້ມບ້ານຂອງທ່ານ?

# ບົດຮຽນ 10
# ການນຳທີ່ຄົນຢາກຕິດຕາມ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: 1 ເທຊະໂລນິກ 2:1-12; 5:12-13
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: 1 ເທຊະໂລນິກ 2:1-12; 5:12-13
ຈຸດສຳຄັນຂອງບົດຮຽນນີ້: ຜູ້ນຳຄຣິສຕະຈັກຈະມີຄົນຕິດຕາມເມື່ອພວກເຂົາເຈົ້າຮັບໃຊ້ພຣະເຈົ້າ ແລະຮັບໃຊ້ຄຣິສຕະຈັກດ້ວຍຄວາມສັດຊື່, ດ້ວຍກຽດສັກສີ, ແລະດ້ວຍຄວາມຮັກ.

ຈຸດປະສົງຂອງບົດຮຽນນີ້: ເພື່ອຊອກຫາຄຸນວຸດທິຂອງຜູ້ນຳໃນຄຣິສຕະຈັກ ຜູ້ທີ່ເຮົາຄວນຮັບຮອງແລະຕິດຕາມ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

## ຄຳນຳ

ຜູ້ນຳຄຣິສຕະຈັກທັງຫລາຍຄວນຮູ້ວ່າການໃຫ້ຫລາຍຄົນມີສ່ວນໃນການຕັດສິນໃຈ ແລະການດຳເນີນຊີວິດຢ່າງຊື່ສັດບໍ່ພຽງແຕ່ຈະຊ່ວຍໃຫ້ເຂົາເຈົ້າໄດ້ເປັນຜູ້ນຳທີ່ດີເທົ່ານັ້ນ ແຕ່ຈະຊັກຊວນໃຫ້ຄົນທັງຫລາຍໃຫ້ຕິດຕາມ ແລະເອົາແບບຢ່າງເຣື່ອງຄວາມເຊື່ອຂອງພວກຕົນ. ໃນບົດຮຽນນີ້ ພວກເຮົາຈະຄົ້ນຫາຄຸນສົມບັດຫລາຍຢ່າງສຳລັບຜູ້ນຳຄຣິສຕຽນທີ່ຄົນທັງຫລາຍຢາກຈະຕິດຕາມ. ຄຸນສົມບັດຂອງຜູ້ນຳມີຄວາມສຳຄັນຫລາຍສຳລັບການຮັບໃຊ້ໃນຄຣິສຕະຈັກ, ໃນທັນມາດບ່ອນເທສນາ, ແລະໃນມ້ານັ່ງໃນໂບດ.

### ການຮັບໃຊ້ແບບທີມ

ຈົດໝາຍທັງສອງສບັບທີ່ໂປໂລຂຽນເຖິງຄຣິສຕຽນທີ່ເມືອງເທຊະໂລນິກາໄດ້ເລີ້ມຕົ້ນແບບດຽວກັນ; ທຸກຄົນຈະຮູ້ວ່າຈົດໝາຍນີ້ ໄດ້ມາຈາກ ໂປໂລ, ຊີລາ, ແລະຕີໂມທຽວ (1 ທຊນ 1:1; 2 ທຊນ 1:1). ຕັ້ງແຕ່ເລີ້ມຕົ້ນມາ ໂປໂລຈະມີເພື່ອນຮ່ວມງານຢູ່ຕລອດ. ພວກເຮົາໄດ້ເຫັນຫລາຍໆຄົນເຊັ່ນ: ບາຣະນາບາ, ມາຣະໂກ, ຊີລາ, ຕີໂມທຽວ, ແລະຄົນອື່ນໆທີ່ມີຊື່ປາກົດຢູ່ໃນງານການປະກາດຂອງໂປໂລ. ລູກາຊຶ່ງເປັນຜູ້ຂຽນພຣະທັມກິຈການກໍເປັນເພື່ອນຮ່ວມງານຄົນນຶ່ງຂອງໂປໂລ. ທີມງານຂອງໂປໂລມີທັງຜູ້ຊາຍແລະຜູ້ຍິງ; ແຕ່ລະຄົນມີສ່ວນໃນການປ່າວປະກາດແລະການຕັ້ງໂບດໃໝ່ໃນຫລາຍໆແຫ່ງ. ພັນທະກິດຂອງພຣະເຈົ້າຍິ່ງໃຫຍ່ເກີນກວ່າຄົນຜູ້ດຽວຈະເຮັດໄດ້.

ຈາກຈົດໝາຍຂອງໂປໂລເຖິງຄຣິສຕຽນທີ່ເທຊະໂລນິກນີ້ ພວກເຮົາສາມາດວາດພາບໄດ້ວ່າ ເຖິງໂປໂລຈະເປັນເຈົ້າຂອງຈົດໝາຍ ທ່ານຄົງຈະມີບາງບຸກຄົນເຊັ່ນ ຊີລາ ແລະຕີໂມທຽວທີ່ຄອຍນັ່ງໃຫ້ຄຳເຫັນໃນຫົວເຣື່ອງຕ່າງໆ. ສິ່ງນຶ່ງທີ່ສາມາດສັງເກດໄດ້ກໍຄືການໃຊ້ຄຳວ່າ "ພວກເຮົາ" ຫລາຍໆຄັ້ງຢູ່ໃນຈົດໝາຍ. ຕັ້ງແຕ່ຕອນເລີ້ມຕົ້ນ ທີມງານນີ້ໄດ້ໄປປະກາດແລະໄດ້ຕັ້ງຄຣິສຕະຈັກໃໝ່ທີ່ເມືອງເທຊະໂລນິກ. ຕໍ່ມາພວກເຂົາເຈົ້າໄດ້ອອກຈາກເມືອງນີ້ໄປເພາະການເຂົ້າໃຈຜິດແລະການຕໍ່ສູ້ຈາກຄົນບາງກຸ່ມ. ເພາະຄວາມຫ່ວງໃຍ ເຂົາເຈົ້າໄດ້ສົ່ງຕີໂມທຽວໃຫ້ກັບໄປຍັງເມືອງເທຊະໂລນິກອີກ. ຈາກຄຳລາຍງານຂອງຕີໂມທຽວ, ໂປໂລໄດ້ຂຽນຈົດໝາຍສບັບນີ້ເພື່ອສແດງຄວາມສັຣເສີນແລະຂອບພຣະຄຸນຕໍ່ພຣະເຈົ້າ ແລະຕໍ່ພວກຄຣິສຕຽນຜູ້ສັດຊື່ທີ່ເທຊະໂລນິກ.

ການທຳງານແບບທີມມີປໂຍດແນວໃດ? ທີມສາມາດຊ່ວຍໃຫ້ຄວາມຄິດຄວາມເຫັນກັບພວກຜູ້ນຳ. ທີມຊ່ວຍປ້ອງກັນບໍ່ໃຫ້ບຸກຄົນໃດຄົນນຶ່ງມີອຳນາດຈົນເກີນໄປ ແລະຊ່ວຍໃຫ້ຜູ້ນຳມີຄວາມຮັບຜິດຊອບ. ໃນຂະນະທີ່ໂປໂລກຳລັງຈັດຕຽມເພື່ອຈະອອກໄປປະກາດຖ້ຽວທີສອງ ການຖົກຖຽງກັນຢ່າງຮ້າຍແຮງກໍໄດ້ເກີດຂຶ້ນລະຫວ່າງໂປໂລ ແລະບາຣະນາບາ ກ່ຽວກັບມາຣະໂກ. ແຕ່ການນຳພາແບບທີມຊ່ວຍແກ້ໄຂບັນຫາຂັດແຍ່ງນັ້ນໄດ້ ແລະກໍ່ໃຫ້ເກີດມີທາງອອກທີ່ເປັນປໂຍດຫລາຍ. ໂປໂລໄດ້ເລືອກເອົາຊີລາ ແລະບາຣະນາບາໄດ້ເລືອກເອົາມາຣະໂກ. ເຖິງຈະມີການຖົກຖຽງກັນກໍຕາມ, ຜົນທີ່ໄດ້ຮັບກໍຄືການມີທີມງານສອງທີມເພື່ອຈະອອກໄປທຳພັນທະກິດຂອງພຣະເຈົ້າ (ກິຈການ 15:36-40).

### ຄວາມອົງອາດຂອງຜູ້ນຳຄຣິສຕຽນ (2:1-6)

ປະການທຳອິດ, ຄວາມກ້າຫານແລະຄວາມຕັ້ງໃຈຂອງໂປໂລແລະເພື່ອນຮ່ວມງານຂອງທ່ານໃນການກັບໄປທີ່ເມືອງເທຊະໂລນິກ ໄດ້ສແດງເຖິງການເປັນຜູ້ນຳຂອງພວກເຂົາເຈົ້າຫລາຍຢ່າງ. ໃນການປະກາດຂ່າວປະເສີດ, ໂປໂລແລະພັກພວກໄດ້ພົບ ກັບການຕໍ່ສູ້ຢ່າງຫລວງຫລາຍ; ພວກເຂົາເຈົ້າໄດ້ຖືກປະຈານຂາຍໜ້າຈາກພວກອວດສລາດ ແລະໄດ້ທົນກັບການ ລຳບາກອື່ນໆ (ກກ 13:8-10, 49-50; 14:2-5, 19-20; 16:19-24). ສິ່ງເຫລົ່ານີ້ອາດຈະເຮັດໃຫ້ບາງຄົນປະຖິ້ມພັນທະກິດຂອງພຣະເຈົ້າ, ແຕ່ໂປໂລແລະຄະນະບໍ່ໄດ້ຖອຍຫລັງໃຫ້ກັບອຸປສັກ. ເວລາພຣະເຈົ້າປິດປະຕູທີ່ເມືອງນຶ່ງ, ພວກ ເຂົາເຈົ້າກໍຍ້າຍໄປທີ່ເມືອງໃໝ່ເພື່ອປະກາດຂ່າວປະເສີດຕໍ່ໄປ.

ປະການທີສອງ, ໂປໂລແລະຄະນະບໍ່ໄດ້ໃຊ້ຄຳຖແລງຍ້ອງຍໍ ຫລືກົນອຸບາຍໃນການປະກາດ (1 ທຊນ 2:3), ແຕ່ພວກເຂົາເຈົ້າໄດ້ປະກາດດ້ວຍຄວາມໝັ້ນໃຈ ແລະດ້ວຍປະສົບການທີ່ເກີດຈາກຄວາມສຳພັນສ່ວນຕົວກັບພຣະເຈົ້າ. ພຣະເຢຊູຄຣິດກໍບໍ່ເຄີຍໃຊ້ສິ່ງອັສຈັນເພື່ອດຶງດູດໃຈຄົນທັງຫລາຍໃຫ້ຕິດຕາມພຣະອົງ. ພຣະອົງໄດ້ເນັ້ນຄວາມຈິງເຣື່ອງພຣະເຈົ້າເພື່ອນຳຄົນໃຫ້ມາເຖິງຣົ່ມພຣະຄຸນພຣະເຈົ້າ.

ປະການທີສາມ, ໂປໂລ, ຊີລາ, ແລະຕີໂມທຽວບໍ່ໄດ້ສແວງຫາຄວາມຍ້ອງຍໍແລະກຽດຕິຍົດຈາກມະນຸດ. ຫລາຍກວ່າສິ່ງອື່ນໃດ, ພວກເຂົາເຈົ້າພຍາຍາມປະກາດພຣະຄຳດ້ວຍຄວາມສັດຊື່ແລະປະກາດເຣື່ອງຂອງພຣະຄຣິດທີ່ໄດ້ປ່ຽນແປງຊີວິດຂອງພວກຕົນ. ພວກເຂົາເຈົ້າໄດ້ປະກາດຄວາມລອດພົ້ນໂດຍທາງພຣະເຢຊູຄຣິດຢ່າງດຽວ.

### ຄຸນວຸດທິຂອງຜູ້ນຳຄຣິສຕຽນ (2:6-12)

ໃນພຣະທັມຫລາຍຂໍ້ຕໍ່ໄປນີ້ ພວກເຮົາໄດ້ເຫັນຄຸນວຸດທິຂອງຜູ້ນຳທີ່ໄດ້ປາກົດໃຫ້ເຫັນໃນຊີວິດຂອງໂປໂລແລະຄະນະ. ເຂົາເຈົ້າມີຄວາມເມດຕາກະຣຸນາຕໍ່ພວກຜູ້ເຊື່ອໃໝ່. ເຖິງຈະມີບັນຫາຫລາຍຢ່າງທີ່ຕ້ອງແກ້ໄຂ ແຕ່ໂປໂລແລະຄະນະໄດ້ສແດງຄວາມອົດທົນເປັນພິເສດ. "ພວກເຮົາໄດ້ຢູ່ຖ້າມກາງພວກເຈົ້າດ້ວຍໃຈສຸພາບອ່ອນໂຍນ ເໝືອນດັ່ງແມ່ທີ່ລ້ຽງລູກອ່ອນນ້ອຍຂອງຕົນ" (2:7). ໂປໂລແລະຄະນະໄດ້ສແດງຄວາມເປັນຜູ້ນຳທີ່ດີ ເພື່ອເປັນຕົວຢ່າງໃຫ້ກັບຊາວເທຊະ

ໂລນີກ. ພວກເຂົາໄດ້ສແດງຄວາມຮັກແພງ, ຄວາມເພື່ອແຜ່, ແລະຄວາມເສັຽສລະໃນການດໍາເນີນຊີວິດແລະການສັ່ງສອນຖ້າມກາງພວກຜູ້ເຊື່ອໃໝ່.

ເພື່ອບໍ່ໃຫ້ເປັນພາຣະອັນໜັກແກ່ຄຣິສຕະຈັກໃໝ່ທີ່ເທຊະໂລນີກ, ໂປໂລແລະຄະນະໄດ້ພາກັນທໍາງານທັງກາງເວັນແລະກາງຄືນ ເພື່ອຈະກຸ້ມຕົນເອງໃນຂະນະທີ່ພວກເຂົາເຈົ້າປະກາດພຣະທັມຢູ່ທີ່ນັ້ນ (2:9). ຈາກກິຈການ 18:3, ພວກເຮົາຮຽນຮູ້ວ່າໂປໂລມີອາຊີບເປັນຊ່າງເຮັດຜ້າເຕັນ. ໂປໂລຍັງໄດ້ເຕືອນທຸກຄົນວ່າໃຫ້ເຮັດການເພື່ອຫລີກເວັ້ນການເປັນພາຣະອັນໜັກໃຫ້ກັບຄົນອື່ນໆ (2 ທຊນ 3:7-8). ນອກນັ້ນ, ການປະຕິບັດຕົນຢ່າງບໍຣິສຸດເປັນອີກລັກສະນະນຶ່ງ ທີ່ຈໍາເປັນສໍາລັບຜູ້ນໍາ. ຄຣິສຕຽນທີ່ເທຊະໂລນີກໄດ້ເຫັນຄວາມບໍຣິສຸດ, ຄວາມທ່ຽງທັມ, ແລະບໍ່ມີຂໍ້ຕິຕຽນໃນຊີວິດຂອງໂປໂລ (1 ທຊສ 2:10).

ໂປໂລແລະຄະນະໄດ້ສແດງຄວາມອົດທົນໃນການສັ່ງສອນແລະເຕືອນສະຕິໝູນໃຈພວກຄຣິສຕຽນໃໝ່. ໂດຍສເພາະແມ່ນເຣື່ອງການດໍາເນີນຊີວິດໃນທາງຊອບທັມ ເພື່ອໃຫ້ສົມກັບເປັນຜູ້ທີ່ໄດ້ຖືກຊົງເອີ້ນໃຫ້ເຂົ້າມາໃນຣາຊອານາຈັກແລະໃນສງ່າຣາສີຂອງພຣະເຈົ້າ (2:11-12). ຈາກຈົດໝາຍທັງສອງສບັບທີ່ໂປໂລໄດ້ຂຽນເຖິງຄຣິສຕຽນທີ່ເທຊະໂລນີກນີ້ ພວກເຮົາສາມາດສລູບໄດ້ວ່າໂປໂລມີຄວາມຫ່ວງໃຍພວກເຂົາເຈົ້າເປັນພິເສດ. ລາວລໍຄອຍວັນເວລາທີ່ຈະໄດ້ກັບມາຮ່ວມສາມັກຄີທັມກັບພວກເຂົາ (1 ທຊນ 3:11-13). ຜູ້ນໍາທີ່ດີມີຄວາມຕ້ອງການໃຫ້ສາວົກຂອງຕົນເຕີບໃຫຍ່ໃນຄວາມເຊື່ອແລະຄວາມຮັກ. ສິ່ງເຫລົ່ານີ້ຄົງຈະສ້າງຄວາມເຊື່ອໝັ້ນໃຫ້ກັບຊາວຄຣິສຕຽນທັງຫລາຍໃນເທຊະໂລນີກ.

ຄຸນສົມບັດຂອງຜູ້ນໍາທີ່ດີທີ່ໂປໂລແລະຄະນະໄດ້ສແດງອອກໃຫ້ເຫັນໃນພຣະທັມຕອນນີ້ເປັນສິ່ງທີ່ບໍ່ຫລ້າສມັຍ. ພວກເຮົາຍັງຕ້ອງການຜູ້ນໍາຄຣິສຕຽນປະເພດນີ້ໃນຄຣິສຕະຈັກ, ໃນທັມມາດບ່ອນເທສນາ, ແລະໃນມ້ານັ່ງຂອງພວກເຮົາ.

<u>ສິດອໍານາດໄດ້ມາຈາກແບບຢ່າງ (5:12-13)</u>

ພວກຜູ້ປະກາດພຣະທັມຊັກຊວນຄຣິສຕະຈັກທີ່ເທຊະໂລນີກໃຫ້ນັບຖື ແລະຊ່ວຍເຫລືອພວກຜູ້ນໍາຂອງເຂົາເຈົ້າໂດຍສເພາະພວກຜູ້ນໍາທີ່ໄດ້ສແດງຄວາມຈິງໃຈແລະຄວາມເສັຽສະລະ. ສິດອໍານາດຂອງຜູ້ນໍາບໍ່ໄດ້ເກີດມາຈາກຕໍາແໜ່ງ. ພວກເຮົາຢູ່ໃນຍຸກທີ່ຄົນສ່ວນຫລາຍກໍາລັງປະຕິເສດເຣື່ອງພຣະເຢຊູຄຣິດ . ຄົນສມັຍນີ້ບໍ່ນັບຖືຄໍາເທສນາຫລືຄໍາສອນທີ່ອອກມາຈາກໂບດເໝືອນຄົນໃນສມັຍກ່ອນ; ສນັ້ນພວກຜູ້ນໍາຈໍາເປັນຈະຕ້ອງສແດງຄວາມເປັນຜູ້ນໍາທີ່ເຂັ້ມແຂງແລະເຊື່ອຖືໄດ້ໃຫ້ກັບຄົນທັງຫລາຍ.

ສິດອໍານາດຂອງຜູ້ນໍາໄດ້ມາຈາກສມາຊິກ ແລະສິດອໍານາດນີ້ເກີດມາຈາກຕົວຢ່າງທີ່ຜູ້ນໍາໄດ້ສະແດງໃຫ້ເຫັນເຣື່ອງການເສັຽສະລະ, ການເຮັດວຽກງານແບບບໍ່ອິດເມື່ອຍ, ແລະຄວາມຈົ່ງຮັກພັກດີ ຕໍ່ພຣະຄຣິດແລະຕໍ່ສມາຊິກ. ຄວາມຈິງແທ້ ສິດອໍານາດຂອງການຮັບໃຊ້ແມ່ນມາຈາກພຣະຜູ້ເປັນເຈົ້າຜູ້ຊົງເອີ້ນພວກເຮົາ ແຕ່ພວກເຮົາກໍຮັບໃຊ້ຝູງຊົນທີ່ສແວງຜູ້ນໍາທີ່ຈິງໃຈຮັບໃຊ້ພວກເຂົາ. ຖ້າພວກເຮົາມີຄຸນສົມບັດເຫລົ່ານີ້, ພວກເຂົາເຈົ້າກໍຕຽມພ້ອມທີ່ຈະຕິດຕາມ.

ພຣະເຢຊູຄຣິດເປັນຕົວຢ່າງເຣື່ອງການເປັນຜູ້ນໍາສໍາລັບພວກເຮົາ. ຄົນທັງຫລາຍຕິດຕາມພຣະອົງເພາະເຂົາເຈົ້າໄດ້ເຫັນຄວາມເສັຽສະລະແລະຄວາມຊື່ສັດຂອງພຣະອົງຕໍ່ວຽກງານທີ່ພຣະອົງກະທໍາ ແລະຕໍ່ຝູງຄົນທີ່ພຣະອົງຊົງມາຮັບໃຊ້. ທຸກຄົນທີ່ໄດ້ເຫັນການທໍາງານຂອງພຣະເຢຊູກໍໄດ້ເຫັນຄວາມຮັກ ແລະພຣະຄຸນຂອງພຣະເຈົ້າຜ່ານທາງພຣະອົງ. ການຖືກເລືອກໃຫ້ເປັນຜູ້ນໍາໃນຄຣິສຕະຈັກກໍນັບວ່າເປັນກຽດອັນສູງສົ່ງ. ການຖືກເລືອກອາດຈະເກີດຂຶ້ນໄດ້ເພາະຄົນທັງຫລາຍໄດ້ເຫັນຄຸນສົມບັດໃນການເປັນຜູ້ນໍາ. ການເປັນຜູ້ນໍາບໍ່ແມ່ນພຽງແຕ່ການມີຊື່ຢູ່ໃນລາຍຊື່ຂອງຜູ້ນໍາຄຣິສຕະຈັກເທົ່ານັ້ນ; ການເປັນຜູ້ນໍາໝາຍເຖິງການຊ່ວຍນໍາພາຄຣິສຕະຈັກໃຫ້ສໍາເຣັດຕາມເປົ້າໝາຍໂດຍການຊ່ວຍເຫລືອຂອງ

ສມາຊິກທັງຫລາຍ.   ຄວາມຫວັງຂອງຜູ້ນຳທຸກຄົນກໍຄືຢາກເຫັນຄົນອື່ນໆເອົາຕົວຢ່າງຂອງພວກເຂົາ ແລ້ວພາກັນເຂົ້າມີສ່ວນໃນວຽກງານຂອງພຣະເຈົ້າ.

ຄຳຖາມ:

1. ທ່ານມີຄວາມຄິດເຫັນແນວໃດກ່ຽວກັບການນຳພາແບບທີມທີ່ເຫັນຢູ່ໃນ 1 ທຊນ 1:1? ທ່ານເຄີຍມີປະສົບການແນວນີ້ບໍ່ໃນຄຣິສຕະຈັກຂອງທ່ານ?

2. ທ່ານເຄີຍຖືກຕິຕຽນຈົນບາງຄັ້ງທ່ານຄິດຢາກຈະເຊົາໃນການເປັນພຍານ ຫລືປະຖິ້ມອຸດົມການຂອງຕົນເອງບໍ່? ແມ່ນຫຍັງແດ່ທີ່ຊ່ວຍທ່ານໄດ້ໃນສະຖານະການເຊັ່ນນັ້ນ?

3. ທວນຄິດເບິ່ງຄຣິສຕຽນຜູ້ນຳຜູ້ທີ່ທ່ານນັບຖືຫລາຍທີ່ສຸດໃນຊີວິດຄຣິສຕຽນ. ມີຄຸນວຸດທິແນວໃດແດ່ທີ່ຊ່ວຍໃຫ້ຜູ້ນຳຄົນນີ້ມີຄວາມສຳເຣັດ? ທ່ານເຫັນຄຸນວຸດທິເຫລົ່ານັ້ນຈາກຜູ້ນຳໃນຄຣິສຕະຈັກຂອງທ່ານບໍ່? ໃນຕົວທ່ານເອງ?

4. ມີຫຍັງແດ່ທີ່ຄຣິສຕະຈັກຂອງທ່ານສາມາດເຮັດເພື່ອສແດງຄວາມຍິນດີ ແລະຄວາມສນັບສນູນສຳລັບຜູ້ທີ່ຮັບໃຊ້ໃນຖານະຜູ້ນຳຢູ່ໃນຄຣິສຕະຈັກຂອງທ່ານ?

# ບົດຮຽນທີ 11
# ຊີວິດທີ່ພຣະເຈົ້າພໍພຣະທັຍ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: 1 ເທຊະໂລນີກ 4:1-12; 5:14-22

ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້: 1 ເທຊະໂລນີກ 4:1-12; 5:14-22

ຈຸດສໍາຄັນຂອງບົດຮຽນນີ້: ເພື່ອບອກໃຫ້ເຮົາເຂົ້າໃຈວ່າ ຄຣິສຕຽນທຸກຄົນສົມຄວນຈະມີຊີວິດທີ່ພຣະເຈົ້າພໍພຣະທັຍເພື່ອນໍາພຣະພອນໄປເຖິງຄົນທັງຫລາຍ.

ຄໍາຖາມເພື່ອການສໍາຣວດ ການດໍາຣົງຊີວິດທີ່ພໍພຣະທັຍນັ້ນເປັນແນວໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ອຍໃຫ້ຊີວິດການເປັນຢູ່ຢ່າງຄຣິສຕຽນສົມບູນ ແລະເປັນແຫລ່ງແຫ່ງພຣະພອນໄປຍັງຄົນທັງຫລາຍ.

ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຮູ້ວ່າເຮົາທຸກຄົນເປັນສີພຣະຫັດຂອງພຣະເຈົ້າໃນຮູບຮ່າງຄ້າຍຄືພຣະອົງ.
- ສົ່ງເສີມຄອມຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກໍາລັງກາຍ, ກໍາລັງໃຈ ແລະສຸດຄວາມຄິດ.

ຫລາຍຄົນຮ້ອງຕົນເອງວ່າເປັນຄຣິສຕຽນທັງທີ່ຕົນເອງບໍ່ໄດ້ໄປໂບດ ຫລືບາງຄົນອາດຈະໄປປີລະເທື່ອສອງເທື່ອເທົ່ານັ້ນ. ອີກຈໍາພວກນຶ່ງກໍໄປໂບດທຸກອາທິດ ແຕ່ຊີວິດການເປັນຢູ່ບໍ່ແຕກຕ່າງຫຍັງກັບເວລາກ່ອນໜ້າໄປໂບດ. ທ່ານ ດຣ ບຸນ ວົງສຸຣິດ ກ່າວທີ່ກອງປະຊຸມຫລວງວ່າ "ຄຣິສຕຽນອ່ານພຣະຄັມພີ ແຕ່ຄົນທີ່ບໍ່ໄປໂບດອ່ານຄຣິສຕຽນ" ຊຶ່ງໝາຍຄວາມວ່າ ຄົນທັງຫລາຍພາກັນເບິ່ງຊີວິດການເປັນຢູ່ຂອງຄຣິສຕຽນ ດັ່ງນັ້ນຫາກຄຣິສຕຽນເຮັດດີ, ຄົນທັງຫລາຍກໍຈະມາເປັນຄຣິສ ຕຽນ ເພາະຄຣິສຕຽນເຫລົ່ານັ້ນໃຊ້ຊີວິດການເປັນຢູ່ເພື່ອເປັນພະຍານຝ່າຍພຣະເຢຊູຄຣິດ, ແລະພຣະເຈົ້າຈະພໍພຣະທັຍກັບຄົນນັ້ນ.

## ຕັກເຕືອນໃຫ້ປະຕິບັດສິ່ງທີ່ຮຽນຮູ້ແລ້ວ (4:1-3)

ຄຣິສຕຽນໃນສມັຍນັ້ນແລະສມັຍນີ້ກໍບໍ່ມີຫຍັງແຕກຕ່າງກັນເທົ່າໃດ ຄືພາກັນສົນໃຈຮໍ່າຮຽນພຣະທັມພຣະເຈົ້າຢູ່ທຸກມື້ທຸກຄືນມີການຮໍ່າຮຽນສັມມະນາຢູ່ບ່ອນໃດກໍພາກັນໄປຊຶ່ງເປັນໜ້າຊື່ນຊົມຍິນດີຫລາຍ. ສິ່ງທີ່ຫນ້າເສົ້າໃຈກໍຄືຮຽນມາແລ້ວກໍບໍ່ຄ່ອຍປະຕິບັດ ຫລືຜູ້ເຖົ້າມັກເວົ້າວ່າຮຽນໄປຫນ້າລືມຫລັງ ເບິ່ງອີກຢ່າງນຶ່ງກໍຄ້າຍຄືຄົນຜູ້ນຶ່ງຍ່າງຫລິ້ນຕາມແຄມທະເລຊາຍ ເມື່ອຟອງນໍ້າຂຶ້ນມາກໍລຶບຮອຍຕີນນັ້ນເສັງ. ຄຣິສຕຽນໃນໂບດຂອງຂ້າພະເຈົ້າຜູ້ນຶ່ງກ່າວວ່າ "ຄຣິສຕຽນນີ້ຮຽນຫລາຍຫົວໃຫຍ່, ກິນຫລາຍທ້ອງປຸ້ງ" ລາວອາດຈະໝາຍຄວາມວ່າມີແຕ່ຮຽນເອົາຄວາມຮູ້ໃສ່ຫົວແຕ່ຕົວເອງບໍ່ໄດ້ປະຕິບັດ. ດ້ວຍເຫດນີ້ອາຈານໂປໂລຈຶ່ງຂຽນໄປເຖິງຄຣິສຕຽນທີ່ເທຊະໂລນີກໃຫ້ປະຕິບັດສິ່ງທີ່ຮຽນຮູ້ດີກວ່າ

ຊອກຮຽນແນວບໍ່ທັນຮູ້.

ໂປໂລຂຽນວ່າ *"ສຸດທ້າຍນີ້"* ໃນຣະຫວ່າງກາງຂອງ ຈ.ມ ຊຶ່ງທ່ານອາດຈະໝາຍຄວາມວ່າທ່ານບໍ່ມີຫຍັງຈະເວົ້າອີກ ດ້ວຍວ່າ ສິ່ງທີ່ທ່ານຢາກເວົ້ານັ້ນທ່ານກໍໄດ່ເວົ້າໄປໝົດແລ້ວໃນຄາວທີ່ທ່ານຢ້ຽມຢາມຄັ້ງກ່ອນ. ແຕ່ທ່ານຢາກຂໍເຕືອນ ພີ່ນ້ອງ ເທຊະໂລນິກໃນພຣະນາມແຫ່ງພຣະເຢຊູຄຣິດວ່າ ໃຫ້ພາກັນປະຕິບັດສິ່ງທີ່ຮຽນຮູ້ມາແລ້ວນັ້ນໃຫ້ ຫລາຍກວ່າ ເກົ່າ.

ຫາກເຮົາຖາມກັນໃນໂບດວ່າທ່ານເປັນຄຣິສຕຽນມາດົນເທົ່າໃດແລ້ວ? ຫລາຍຄົນຈະຕອບຕ່າງກັນ. ເຮົາພໍທີ່ຈະເຂົ້າ ໃຈບໍ່ວ່າຄົນທີ່ມານຳຫລັງເຮົາກາຍເປັນຄຣູສອນເຮົາແລ້ວ? ສຳລັບຂ້າພະເຈົ້າເຂົ້າໃຈວ່າບຸກຄົນນັ້ນອາດຈະມີພື້ນຖານ ຄວາມຮູ້ດີແດ່, ແລະລາວອາດຈະຖືກຊົງເລືອກຈາກພຣະເຈົ້າໃຫ້ເປັນຜູ້ສອນເຮົາ ຫລືບາງທີລາວອາດຈະເປັນຄົນໄດ້ ຍິນພຣະທັມແລ້ວ ປະຕິບັດຈຶ່ງຊ່ອຍໃຫ້ລາວຈະເຣີນໄວກວ່າເຮົາ. ຖ້າເຮົາຫາກສັງເກດເບິ່ງລູກຫລານເຮົາຜູ້ກິນແຊບ ນອນຫລັບ, ຜູ້ສຸຂພາບແຂງແຮງລາວກໍໃຫຍ່ໄວກວ່າອ້າຍຫລືເອື້ອຍຂອງລາວແມ່ນບໍ່?. ດັ່ງນັ້ນຫາກເຮົາຢາກຈະເຣີນ ຝ່າຍຈິດວິນຍານ ຈົ່ງ ຮັບເອົາພຣະທັມແລ້ວມາປະຕິບັດ ແລ້ວເຮົາກໍຈະໃຫຍ່ຢ່າງບໍ່ມີສິ່ງໃດຢຸດຢັ້ງໄດ້.

ໂປໂລບອກອີກວ່າການປະຕິບັດຕາມພຣະທັຍຂອງພຣະເຈົ້ານັ້ນເປັນນໍ້າພຣະທັຍຂອງພຣະເຈົ້າ, ເມື່ອຄົນໃດໃຊ້ຊີວິດ ຂອງຕົນປະຕິບັດຕາມພຣະທັມພຣະອົງ ບຸກຄົນນັ້ນຈະກາຍເປັນຜູ້ທີ່ມີຊີວິດຢູ່ຕາມນໍ້າພຣະທັຍພຣະອົງ. ດັ່ງນັ້ນຫາກ ເຮົາຊອກສແວງຫານໍ້າພຣະທັຍພຣະເຈົ້າ ຫລືຢາກຮູ້ວ່າພຣະເຈົ້າຢາກໃຫ້ເຮົາເຮັດຫຍັງແດ່ນັ້ນໂປໂລໄດ້ບອກເຮົາແລ້ວ ຄືໃຫ້ປະຕິບັດສິ່ງທີ່ຮຽນຮູ້.

<u>ຍອມຈຳນົນຕົວຕໍ່ພຣະເຈົ້າ</u> (4:4-8)

ໃນສັດຕະວັດທີນຶ່ງຂອງຄຣິສຕຽນຍິວມີບັນຫາເກີດຂຶ້ນຫລາຍຢ່າງ ດ້ວຍເຫດວ່າພວກເຂົາເຈົ້າຍັງບໍ່ທັນຮູ້ຈັກຈະວາງ ຕົວແນວໃດ ດ້ວຍວ່າເມື່ອເຂົາເຈົ້າເຂົ້າມາເຊື່ອໃນພຣະເຢຊູຄຣິດແລ້ວຍັງດຳຣົງຊີວິດເໝືອນແຕ່ກ່ອນ. ເທຊະໂລນິກ ເປັນເມືອງທີ່ຈະເຣີນທາງດ້ານວັດຖຸສິ່ງຂອງ ດັ່ງນັ້ນພວກພໍ່ຄ້າຊາວຂາຍຈຶ່ງພາກັນຫລັ່ງໄຫລກັນໄປຊື້ຂາຍກັນທີ່ນັ້ນ. ເມື່ອເສຖກິຈຂອງເມືອງນັ້ນຈະເຣີນດ້ານການໂສເພນີກໍຈະເຣີນໄປພ້ອມໆກັນ ນອກນັ້ນພວກຄົນຮັ່ງມີທັງຫລາຍກໍນິຍົມ ກັນໃນການມີບ້ານນ້ອຍຊ້ອນບ້ານໃຫຍ່ ຫລືເວົ້າພາສາເຮົາແມ່ນມີເມັຽນ້ອຍຫ້ອຍເມັຽຫລວງ ແລະການຊົ່ວຊ້າອື່ນໆ. ດ້ວຍ ເຫດນີ້ໂປໂລຈຶ່ງຂຽນ ຈ.ມ ໄປເພື່ອສັ່ງສອນເຕືອນສະຕິພວກເຂົາເຈົ້າໃຫ້ປະຕິບັດສິ່ງໄດ້ຮຽນຮູ້ຈາກການປະກາດ ຂອງໂປໂລຄັ້ງທີສອງ. ເພື່ອຄຣິສຕຽນໃນເມືອງເທຊະໂລນິກຈະມີຊີວິດຢູ່ເປັນທີ່ພໍພຣະທັຍພຣະເຈົ້າບໍ່ແມ່ນເຮັດຕາມ ໃຈຕົນເອງ.

ໂປໂລສັ່ງວ່າ *"ໃຫ້ເຈົ້າທຸກຄົນຮູ້ຈັກມີເມັຽໃນທາງບໍຣິສຸດ ແລະທາງນັບຖື"* (ຂໍ້ 5). ມີຄວາມໝາຍວ່າໃຫ້ຍິງຊາຍແຕ່ງ ງານຢ່າງຖືກຕ້ອງ ກ່ອນຈະຢູ່ກິນນຳກັນ ບໍ່ດັ່ງນັ້ນຈະກາຍເປັນການບາບຫາກຢູ່ກິນນຳກັນກ່ອນແຕ່ງງານ. ບ່າວໃດ ຫລືສາວໃດກໍຕາມຫາກບໍ່ທັນແຕ່ງງານແລະຢູ່ນຳກັນກ່ອນຖືວ່າເປັນການລ່ວງປະເວນີ. ສຳລັບການແຕ່ງງານນີ້ມີດີດັ່ງ ນີ້: 1. ຖືກຕ້ອງຕາມນໍາພຣະທັຍພຣະເຈົ້າ. 2. ຖືກຕ້ອງຕາມກົດໝາຍ. 3. ເພື່ອກຽດສັກສີຂອງຄອບຄົວຜູ້ຍິງ ແລະ 4. ເປັນການປ້ອງກັນບໍ່ໃຫ້ຫລິ້ນຊູ້ (ບ່າວສາວນອນນຳກັນກ່ອນແຕ່ງງານກໍແມ່ນການຫລິ້ນຊູແລ້ວ).

<u>ພື້ນຖານຂອງຜູ້ເຊື່ອຄືຮັກກັນແລະກັນ</u> (4:9-10)

*"ສ່ວນເລື່ອງການຮັກພີ່ນ້ອງທັງຫລາຍນັ້ນ, ເຮົາບໍ່ຈຳເປັນຂຽນຝາກມາໃຫ້ພວກເຈົ້າ"* ມີຄວາມໝາຍວ່າເລື່ອງຄວາມຮັກກັນແລະກັນນັ້ນໂປໂລໄດ້ສອນແລ້ວ ບໍ່ຈຳເປັນຕ້ອງເວົ້າອີກເທື່ອນຶ່ງ, ແຕ່ເມື່ອເຮົາອ່ານດີງແລ້ວ ໂປໂລໄດ້ເນັ້ນໜັກເລື່ອງຄວາມຮັກກັນແລະກັນອີກ ດ້ວຍວ່າຫາກເພິ່ນເວົ້າວ່າບໍ່ຈຳເປັນຕ້ອງຂຽນບອກໃຫ້ຮູ້ອີກເພິ່ນຈະບໍ່ກ່າວເຖິງເລີຽ. ໂປໂລຮູ້ວ່າຄຣິສຕຽນທັງຫລາຍຮັກກັນແລະກັນແຕ່ຍັງບໍ່ພຽງພໍ ເພາະວ່າພວກເຂົາເຈົ້າຈະຮັກແຕ່ຜູ້ຮັກຕົນເທົ່ານັ້ນ. *"ເຮົາທູນຂໍພຣະເຈົ້າຊົງໂຜດໃຫ້ພວກເຈົ້າຈະເຣີນຂຶ້ນ ແລະລົ້ນເຫລືອໄປດ້ວຍຄວາມຮັກກັນແລະກັນທັງຮັກຄົນທັງປວງເໝືອນດັ່ງພວກເຮົາໄດ້ຮັກພວກເຈົ້າທັງຫລາຍແລ້ວນັ້ນ"* (3:12). ບາງເທື່ອຄຣິສຕຽນເຮົາກໍເຂົ້າໃຈຜິດເລື່ອງຄວາມຮັກກັນແລະກັນ ດ້ວຍເຫດວ່າຄຣິສຕຽນສ່ວນຫລາຍຍັງຢູ່ຝ່າຍເນື້ອໜັງຈຶ່ງຮັກແບບເນື້ອໜັງ ຄືການໄດ້ກິນແລະດື່ມນຳກັນເປັນໃຫຍ່ກວ່າການກິນແລະດື່ມຝ່າຍພຣະວິນຍານ.

<u>ຕັ້ງເປົ້າໝາຍຊີວິດປະຈຳວັນ</u> (4:11-12)

ໂປໂລສັ່ງວ່າ "ໃຫ້ຕັ້ງເປົ້າໝາຍວ່າຈະຢູ່ຢ່າງສງົບ" ຊຶ່ງທ່ານບໍ່ໄດ້ໝາຍຄວາມວ່າບໍ່ໃຫ້ຄຣິສຕຽນນັ່ງມິດຢູ່ບໍ່ປາກບໍ່ເວົ້າຫຍັງເລີຽ, ທ່ານໝາຍເຖິງການຢູ່ດ້ວຍກັນໂດຍຖືກຕ້ອງປອງດອງ, ຮູ້ຈັກຜ່ອນສັ້ນຜ່ອນຍາວຊຶ່ງກັນແລະກັນ. ຫາກຜູ້ໃດເຮັດຫລືເວົ້າໃຫ້ຜິດໃຈທ່ານກໍຢ່າຖືຊາເພິ່ນ ຈົ່ງຄຶດເສັຽວ່າສັດສີ່ຕີນຍັງຮູ້ພະລາດ ນັກປາດຍັງຮູ້ຫລົງຄວາມ. ເມື່ອລູກຫລາຍພໍ່ ຫລາຍແມ່ມາເຕົ້າໂຮມກັນໃນໂບດ ຊຶ່ງພວກເຮົາຮ້ອງພຣະເຈົ້າວ່າພຣະບິດາເຮົາກໍກາຍເປັນອ້າຍນ້ອງກັນໃນພຣະອົງ ສັນໃດເຮົາຈຶ່ງຮູ້ຈັກຍົກໂທດໃຫ້ແກ່ກັນແລະກັນ ເໝືອນພຣະອົງໃຫ້ອະພັຍເຮົານັ້ນດ້ວຍ ແລະການເຮັດເຊັ່ນນີ້ເປັນນ້ຳພຣະທັຍພຣະເຈົ້າ.

*"ເຮັດການກ່ຽວກິດທຸຣະສ່ວນຕົວ"* ບໍ່ໄດ້ໝາຍຄວາມວ່າບໍ່ໃຫ້ຜູ້ອື່ນຊ່ອຍ ແຕ່ໝາຍຄວາມວ່າຕັ້ງໃຈເຮັດພາຣະໜ້າທີ່ຂອງຕົນໃຫ້ຮຽບຮ້ອຍ, ຫາກບໍ່ຈຳເປັນຢ່າກິນເຂົ້າໂຕໄປໂສຄວາມເພິ່ນ, ຫາກໂສຄວາມເພິ່ນໃນທາງລົບເຮົາກໍກາຍເປັນຄົນຊຸບຊິບນິນທາຊຶ່ງພາໃຫ້ກາຍເປັນຄວາມຜິດບາບເທົ່ານັ້ນ. *"ເຮັດວຽກດ້ວຍມືຂອງຕົນ"* ທີ່ໂປໂລກ່າວນີ້ມີຄວາມໝາຍວ່າ ຄຣິສຕຽນໃນເມືອງເທຊະໂລນິກລາງຄົນກິນແຮງຄົນອື່ນໂດຍສະເພາະຢ່າງຍິ່ງພວກຮັ່ງມີມັກໃຊ້ແຮງງານຜູ້ອື່ນເພື່ອຜົນກຳໄລ ແລະຍັງດູຖູກຄົນເຮັດງານດ້ວຍເຫື່ອແຮງອີກ. ຄຣິສຕຽນສົມຄວນຈະເຮັດງານດ້ວຍມືຂອງຕົນດີກວ່າ ກິນແຮງງານຄົນອື່ນຊຶ່ງພຣະຄັມພີຖືວ່າເປັນຄົນກຽດຄ້ານ. *"ຖ້າຜູ້ໃດບໍ່ມີນ້ຳໃຈຢາກເຮັດການກໍຢ່າໃຫ້ຜູ້ນັ້ນ ກິນ"* (2 ເທຊະໂລນິກ 3: 10).

<u>ການຢູ່ຮ່ວມກັນໂດຍພຣະວິນຍານ</u> (5:14-22).

ໃນຕອນທ້າຍໂປໂລສລູບຄວາມໃນຈົດໝາຍວ່າ *"ຈົ່ງຢູ່ຮ່ວມກັນດ້ວຍຄວາມສງົບສຸກ; ຂໍອອນໃຫ້ເຕືອນຄົນທີ່ບໍ່ຢູ່ໃນລະບຽບຊູໃຈຜູ້ນ້ອຍໃຈ, ຈົ່ງຊ່ອຍຜູ້ອ່ອນກຳລັງ,ຈົ່ງອົດທົນຕໍ່ຄົນທັງປວງ, ຢ່າເຮັດຊົ່ວຕອບແທນຊົ່ວ ແຕ່ຈົ່ງສແວງຫາທາງທີ່ເຮັດດີຕໍ່ກັນແລະກັນຢູ່ສເມີ ແລະຕໍ່ຄົນທັງປວງ. ຈົ່ງຊົມຊື່ນຍິນດີຢູ່ສເມີ. ຈົ່ງອ້ອນວອນຢູ່ບໍ່ຂາດ, ຈົ່ງຂອບພຣະຄຸນພຣະເຈົ້າໃນທຸກສິ່ງ ເພາະວ່ານີ້ແຫລະ, ເປັນນ້ຳພຣະທັຍພຣະເຈົ້າ"* (ຂໍ້ 14-17). ເມື່ອອ່ານເບິ່ງຂໍ້ຄວາມທີ່ໂປໂລຂຽນເຖິງຄຣິສຕຽນທີ່ເທຊະໂລນິກແລ້ວ ເຮົາທັງຫລາຍຜູ້ເປັນຢູ່ໃນສມັຍນີ້ກໍໄດ້ຮັບຂໍ້ຄວາມເຫລົ່ານີ້ຕັ້ງຫລາຍເທື່ອເໝືອນ ກັນ, ເຮົາທັງຫລາຍພະຍາຍາມທີ່ຈະປະຕິບັດຕາມພຣະຄັມພີສັ່ງສອນທຸກປະການ ແຕ່ເຮົາກໍເຮັດໄດ້ຍາກເພາະເຮົາຍັງຢູ່ ໃນໂລກນີ້ຢູ່ ແຕ່ຖ້າເຮົາຫລັບຕາລາໂລກເຮົາກໍໝົດໂອກາດທີ່ຈະປະຕິບັດຕາມພຣະຄັມພີ.

"*ຢ່າຫັກຫ້າມພຣະວິນຍານ*" ເປັນພາສາທີ່ເຂົ້າໃຈຍາກແຕ່ພໍຈະສລູບໄດ້ຈາກ ຄອມເມັນແທຣີດັ່ງນີ້; ພຣະວິນຍານຂອງພຣະເຈົ້າເປັນເໝືອນໄຟ ດັ່ງໃນພຣະທັມກິຈການ ບົດທີ 2 ເມື່ອພຣະວິນຍານເຂົ້າໃນໃຈຜູ້ໃດແລ້ວ ໄຟນັ້ນກໍຈະເຮັດໃຫ້ຈິດໃຈຜູ້ນັ້ນຮ້ອນຮົນໃນເຣື່ອງຣາຊແຜ່ນດິນສວັນ ແລະໄຟນັ້ນຈະນໍາຄວາມສວ່າງມາຍັງຈິດໃຈຜູ້ນັ້ນ, ດ້ວຍເຫດນີ້ເມື່ອໃຜຜູ້ນຶ່ງໄດ້ຮັບພຣະວິນຍານບໍຣິສຸດໃນໃຈ ກໍຢ່າຫ້າມຜູ້ນັ້ນເວົ້າເຣື່ອງແຜ່ນດິນສວັນ ຫລືເອົານໍ້າເຢັນໄປດັບໄຟນັ້ນ. "*ແຕ່ຈົ່ງທົດລອງ ເບິ່ງທຸກສິ່ງ ສິ່ງໃດດີຈົ່ງຍຶດຖືໄວ້ໃຫ້ໝັ້ນ ຈົ່ງເວັ້ນຈາກຄວາມຊົ່ວທຸກຊະນິດ*" (ຂໍ້ 22).

<u>ຄໍາຖາມ</u>

1. ພຣະຄັມພີກ່າວວ່າເຮົາພົ້ນດ້ວຍພຣະຄຸນ ແຕ່ເປັນຫຍັງຄຣິສຕຽນຈຶ່ງຕ້ອງປະຕິບັດພຣະຄັມພີທຸກຂໍ້?

2. ເປັນຍັງຄຣິສຕຽນຈຶ່ງຢາກຮູ້ນໍ້າພຣະທັຍພຣະເຈົ້າ?

3. ແມ່ນຫຍັງແມ່ນນໍ້າພຣະທັຍພຣະເຈົ້າໃນບົດຮຽນນີ້?

4. ເມື່ອເຮົາທັງຫລາຍຮູ້ຈັກນໍ້າພຣະທັຍພຣະເຈົ້າແລ້ວ ເຮົາຈະເຮັດແນວໃດ?

5. ຕັ້ງເປົ້າໝາຍຢູ່ຢ່າງສງົບ ໝາຍຄວາມວ່າແນວໃດ?

6. ວັນນີ້ເຮົາຄວນຕອບພຣະເຈົ້າຢ່າງໃດ ເມືອເພິ່ນສັ່ງເຮົາແລ້ວ?

## ບົດຮຽນທີ 12
## ຄວາມຫວັງຂອງເຮົາ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: 1 ເທຊະໂລນີກ 4:13; 5:11

ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້: 1 ເທຊະໂລນີກ 4:13--5:14; 1 ເທຊະໂລນີກ 1:5--2:12.

ຈຸດສໍາຄັນຂອງບົດຮຽນນີ້: ເພື່ອບອກໃຫ້ເຮົາເຂົ້າໃຈວ່າ ການຟື້ນພຣະຊົນຂອງພຣະເຢຊຄຣິດ ແລະພຣະສັນຍາຂອງພຣະອົງເປັນຫລັກຄໍ້າປະກັນໃຫ້ເຮົາຜູ້ທີ່ເຊື່ອໃນພຣະເຢຊູ.

ຄໍາຖາມເພື່ອການສໍາຫລວດ: ເມື່ອລັບຕາລາໂລກນີ້ໄປເຮົາຫວັງອັນໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາຄໍານຶງເຖິງພຣະເຢຊູຜູ້ຍອມຕາຍແທນເຮົາແມ່ນຄວາມຫວັງຂອງເຮົາ.

ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂື້ນແຕ່ລະວັນໆ.
- ສົ່ງເສີມຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກໍາລັງກາຍ, ກໍາລັງໃຈ ແລະສຸດຄວາມຄິດ.

ການຮ້ອງໃຫ້ເສັຽນໍ້າຕາເປັນຂອງທັມະດາມະນຸດເມື່ອມີໃຜຜູ້ນຶ່ງທີ່ຮັກແພງກັນໄດ້ລັບຕາລາໂລກໄປ, ແຕ່ຄວາມເຊື່ອທີ່ມີໃນພຣະເຢຊູຈະຊ່ອຍຊູໃຫ້ມີຄວາມຫວັງວ່າຜູ້ທີ່ລ່ວງລັບໄປນັ້ນໄດ້ໄປຢູ່ກັບພຣະເຢຊູທີ່ຟ້າສັວນແລ້ວ. ການຮ້ອງໃຫ້ທີ່ຄຣິສຕຽນຮ້ອງໃຫ້ນໍາຜູ້ຕາຍນັ້ນບໍ່ແມ່ນການຮ້ອງໃຫ້ດ້ວຍຄວາມໝົດຫວັງໃຈແຕ່ ແມ່ນການຮ້ອງໃຫ້ເພາະຄິດຮອດຄິດເຖິງກັນໃນຂະນະທີ່ໃຊ້ຊີວິດຮ່ວມກັນໃນໂລກນີ້ມາຫລາຍປີດ້ວຍຄວາມຮັກແພງກັນ.

ການຕາຍແມ່ນການສິ້ນສຸດຊີວິດໃນໂລກນີ້ເທົ່ານັ້ນເພາະໃນວັນດຽວກັນນັ້ນກໍເປັນວັນເລີ້ມຕົ້ນອີກຊີວິດນຶ່ງ. ຫລືເວົ້າອີກຢ່າງນຶ່ງວ່າການຕາຍບໍ່ແມ່ນການສິ້ນສຸດ ແຕ່ແມ່ນການເລີ້ມຕົ້ນໄປຮັບຜົນກັມທີ່ເຮົາສ້າງໃນຂະນະທີ່ຍັງມີຊີວິດຢູ່ໃນໂລກ. ດັ່ງນັ້ນເມື່ອເວລາທີ່ເຮົາຍັງເປັນຄົນຢູ່ຈຶ່ງເປັນໂອກາດເງິນໂອກາດທອງທີ່ຈະສ້າງຄຸນງາມຄວາມດີ ພ້ອມທັງຊອກ ສແວງຫາພຣະເຈົ້າຜູ້ຊົງເປັນເຈົ້າຂອງຟ້າສວັນ ເມື່ອເວລາຫລັບຕາລາໂລກໄປຈະມີໂອກາດເຂົ້າໄປເມືອງສວັນເພາະຮູ້ ຈັກເຈົ້າຂອງສວັນ. ຫາກການຕາຍເປັນການສິ້ນສຸດຄົງບໍ່ມີໃຜດອກທີ່ຈະເຮັດດີ ຫລືສ້າງສິນກິນທານ ຫລືພາກັນເຂົ້າ ໂບດ, ແລະເຮົາຄວນເຂົ້າໃຈວ່າການເຂົ້າໂບດນັ້ນແມ່ນເພື່ອຊີວິດຈະມາເຖິງ ຄືຊີວິດຫລັງຈາກຕາຍ.

ຄວາມໂສກເສົ້າ ແລະ ຄວາມຫວັງ (4:13-18)

ໂປໂລໄດ້ຂຽນ ຈ.ມ ສອນເຣື່ອງຄົນທີ່ຫລັບໄປ (ຕາຍໄປ) ກ່ອນທີ່ພຣະເຢຊູຄຣິດຈະກັບຄືນມາຄັ້ງທີສອງເພື່ອຊູໃຈຄອບຄົວຜູ້ທີ່ເສັຽຊີວິດໄປແລ້ວ ສ່ວນຜູ້ທີ່ຍັງມີຊີວິດຢູ່ຢ່າພາກັນໂສກເສົ້າເໝືອນດັ່ງຄົນບໍ່ມີຄວາມຫວັງ. ເພາະວ່າພຣະເຢຊູຜູ້

ຊົງເປັນພຣະເຈົ້າຂອງພວກເຮົາທັງຫລາຍໄດ້ຕາຍເພື່ອເປັນຄ່າໄຖ່ຄວາມຜິດບາບຂອງເຮົາທັງຫລາຍ ແລະພຣະອົງຊົງຟື້ນພຣະຊົນໃນວັນຖ້ວນສາມສັນໃດ ຄົນທີ່ເຊື່ອໃນພຣະອົງກໍຈະຟື້ນກັບຄືນມາກັບພຣະອົງສັນນັ້ນ. "*ໂດຍພຣະເຢຊູນັ້ນແຫລະ, ພຣະເຈົ້າຈະຊົງນໍາບັນດາຄົນທີ່ຫລັບໄປແລ້ວນັ້ນໃຫ້ກັບມາ*" ((ຂໍ້ 14). ຄໍາເວົ້າຂອງໂປໂລຄັ້ງນີ້ໄດ້ຊ່ອຍແກ້ບັນຫາເຣື່ອງການຄືນມາຈາກຕາຍຂອງຜູ້ທີ່ເຊື່ອໃນພຣະເຈົ້າ.

ພຣະຄັມພີໃຊ້ຄໍາວ່າ "<u>*ຫລັບ*</u>" ກໍເພາະວ່າເພິ່ນມີເຫດຜົນໃນການໃຊ້ຄໍານີ້, ເຮົາຈະເຫັນຕົວຢ່າງບາງຕອນດັ່ງນີ້; "*ລາຊະໂຣເພື່ອນຂອງເຮົາກໍຫລັບໄປແລ້ວ ແຕ່ເຮົາຈະປຸກລາວໃຫ້ຕື່ນ*" (ໂຢຮັນ 11:11). "*ດ້ວຍເຫດນີ້ໃນພວກເຈົ້າຫລາຍຄົນຈຶ່ງອ່ອນແຮງແລະປ່ວຍຢູ່ ແລະບາງຄົນກໍລ່ວງລັບໄປ*" (ໃນພາສາອັງກິດແມ່ນ Fall asleep ) (1ກຣທ 11:30). "*ນີ້ແຫລະ, ເຮົາມີຂໍ້ເລິກລັບບອກພວກເຈົ້າວ່າ ເຮົາທັງຫລາຍຈະບໍ່ລ່ວງລັບໄປໝົດທຸກຄົນ (ໃນພາສາອັງກິດແມ່ນ* All Sleep*) ແຕ່ເຮົາທັງຫລາຍຈະຊົງຖືກປ່ຽນແປງໃຫມ່ຫມົດທຸກຄົນ*" (1ກຣທ 15:51). ອີງຕາມ Disciple's Commentary ກ່າວວ່າ ສໍາລັບຄຣິສຕຽນແມ່ນການນອນຫລັບພັກຜ່ອນໃນອ້ອມແຂນຂອງພຣະເຢຊູດ້ວຍຄວາມອົບອຸ່ນ ຊຶ່ງເປັນພາບທີ່ສວຍງາມທັງປອດພັຍທີ່ໄດ້ຢູ່ໃນອ້ອມແຂນຂອງພຣະເຢຊູ. ຄວາມຫວັງໃຈໃນວັນສຸດທ້າຍພຣະອົງຈະປຸກໃຫ້ລຸກເໝືອນຂໍ້ພຣະຄັມພີ ທີ່ໄດ້ກ່າວມາຂ້າງເທິງນັ້ນ. "*ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວກໍຈະຄືນມາອີກກ່ອນ*" (ຂໍ້ 16) "*ຫລັງຈາກ ນັ້ນເຮົາທັງຫລາຍຜູ້ມີຊີວິດຍັງເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັນກັບຄົນພວກນັ້ນ ແລະຈະພົບອົງພຣະຜູ້ເປັນ ເຈົ້າໃນຟ້າອາກາດ ຢ່າງນັ້ນແຫລະ, ພວກເຮົາກໍຈະຢູ່ນໍາພຣະຜູ້ເປັນເຈົ້າເປັນນິດ*" (ຂໍ້ 17).

ໃນພຣະທັມມັດທາຍບົດ 24 ແລະພະນິມິດບົດ 19 ໄດ້ບອກເລົ່າເຖິງການສະເດັດມາຄັ້ງທີສອງດັ່ງນີ້: <u>1.</u> ພຣະເຢຊູຈະປາກົດໃນທ້ອງຟ້າ. <u>2.</u> ມາຮວບຮວມເອົາຄົນທັງປວງຕລອດເຖິງຜູ້ທີ່ຕາຍໄປແລ້ວ. <u>3.</u> ຊົງຮັບຄົນຜູ້ທີ່ຕາຍໃນຄວາມເຊື່ອ ແລະ 4. ຮັບເອົາຜູ້ເຊື່ອທຸກຄົນໄປຢູ່ກັບພຣະອົງ. "*ເຫດສັນນັ້ນຈົ່ງເລົ້າໂລມອອຍໃຈກັນແລະກັນ ດ້ວຍຂໍຄວາມທັງຫລາຍນີ້ເທີ້ນ*" (ຂໍ້ 18)

<u>ເຣື່ອງວັນເວລາຂອງພຣະຄຣິດ</u> ( 5:1-3).

ຂ້າພະເຈົ້າເຄີຍເວົ້າຢອກຫລິ້ນກ່ອນໜ້າເທສນາເປັນບາງຄັ້ງໃຫ້ພີ່ນ້ອງໄດ້ ຫົວເລາະເພື່ອຜ່ອນຄາຍຄວາມຕຶງຄຽດ. ຂ້າພະເຈົ້າບອກພີ່ນ້ອງໃຫ້ເປີດພຣະຄັມພີໄປຍັງພຣະທັມ 1ເທຊະໂລນີກ ບົດ5, ຂໍ້ 1. ພີ່ນ້ອງໃນໂບດກໍພາກັນເປີດຊອກຫາ ຈົນສຽງດັງອຶກກະທຶກໄປທົ່ວໂບດ. ປະມານເຄິ່ງນາທີຫລາຍຄົນກໍພົບແລະອີກຫລາຍຄົນຍັງຊອກຫາຢູ່ຂ້າພະເຈົ້າຈຶ່ງເວົ້າໃສ່ ໄມໂກຣໂຟນ ອີກວ່າ ຂ້າພະເຈົ້າຂໍບອກພີ່ນ້ອງຜູ້ທີ່ມາໂບດໃຫມ່ວ່າພຣະທັມຕອນ ນີ້ຢູ່ໜ້າ 693 ສໍາລັບຜູ້ທີ່ມາໂບດດົນແລ້ວຂ້າພະເຈົ້າຈະບໍ່ບອກ ໃຫ້ຊອກເອົາເອງ.

ໂປໂລຂຽນເຖິງພີ່ນ້ອງເທຊະໂລນີກວ່າ "*ພີ່ນ້ອງທັງຫລາຍເອີຍ, ເຣື່ອງເວລາແລະວັນທີ່ຊົງກໍານົດໄວ້ນັ້ນບໍ່ຈໍາເປັນຕ້ອງຂຽນບອກພວກເຈົ້າຮູ້. ເພາະວ່າເຈົ້າເອງຮູ້ດີແລ້ວວ່າວັນຂອງພຣະຜູ້ເປັນເຈົ້າຈະມາເໝືອນຂະໂມຍມາໃນເວລາກາງຄືນ*" (ຂໍ້ 1-2). ຫາກເຮົາຟັງບໍ່ຄັກເຮົາກໍຈະເວົ້າວ່າໂປໂລບໍ່ໄດ້ຂຽນບອກເຖິງວັນເວລາຂອງພຣະເຢຊູຄຣິດຈະສະເດັດມາຄັ້ງທີສອງ ແຕ່ເມື່ອອ່ານອີກເທື່ອນຶ່ງຈຶ່ງຮູ້ວ່າໂປໂລໄດ້ຂຽນເຕືອນໃຫ້ຣະວັງຕົວເພາະວ່າພຣະເຢຊູຈະສເດັດມາເໝືອນຂະໂມຍມາ. ດ້ວຍເຫດນີ້ທ່ານຈຶ່ງກ່າວເຕືອນໃຫ້ເຮົາທັງຫລາຍຈົ່ງເຝົ້າຣະວັງຕົວຢູ່ທຸກວັນເວລາ ຢ່າລະເລີຍຄວາມເຊື່ອ. ຂະໂມຍມາລັກເຄື່ອງບໍ່ເຄີຍບອກເຈົ້າຂອງບ້ານວ່າຈະມາລັກສັນໃດ ຄວາມຊົ່ວຮ້າຍແລະຄວາມບາບຈະເຂົ້າມາ ໃນຊີວິດຂອງເຮົາສັນນັ້ນຫາກເຮົາບໍ່ເຝົ້າຣະວັງ.

ມະນຸດເຮົາພະຍາຍາມທີ່ຈະໜີບັນຫາຫລາຍແບບຫລາຍວິທີ ແຕ່ຈະເຮັດແນວໃດກໍຕາມບັນຫາກໍຍັງຕາມມາຢູ່ ເໝືອນກັບວ່າເຮົາພ່າຍແພ້ເປັນປະຈຳເພາະເຮົາບໍ່ໄດ້ສູ້ກັບມັນ ເຮົາຄວນຈະສູ້ມັນໂດຍການຊົງນຳຂອງອົງພຣະຜູ້ເປັນເຈົ້າເຮົາຈະ ຕ້ອງສູ້ເມື່ອສັດຕຣູພ່າຍແພ້ກໍບໍ່ໄດ້ປະມາດເພາະເຮົາບໍ່ຮູ້ວ່າຈະມີຫຍັງເກີດຂື້ນ. ໂປໂລກ່າວວ່າ *"ເມື່ອໃດເຂົາຫາກເວົ້າວ່າ ສງົບສຸກແລະປອດພັຍຢູ່ແລ້ວ ເມື່ອນັ້ນແຫລະ, ຄວາມພິນາດຈິບຫາຍກໍຈະມາເຖິງເຂົາທັນທີ ເໝືອນດັ່ງຄວາມເຈັບປວດມາເຖິງຍິງທີ່ມີທ້ອງ ແລະເຂົາຈະໜີບໍ່ພົ້ນເປັນແນ່"* (ຂໍ 3). ໂປໂລໄດ້ຄິດເຫັນສະພາບການຂອງຊາວຢິວທີ່ໄດ້ຮັບເອກຣາດຈາກໂຣມັນ ແລ້ວກໍພາກັນລືມວ່າຄັ້ງນຶ່ງເຄີຍຖືກຈັກກະພັດໂຣມັນປົກຄອງແບບຂົ່ມເຫັງ. ທ່ານຢາກບອກເຂົາໃຫ້ເຂົ້າໃຈແລະຕຽມພ້ອມຢ່າປະມາດ ຫາກບໍ່ຕຽມພ້ອມເມື່ອຈັກກະພັດໂຣມັນກັບມາ ກໍຈະເສັຽຊັຍອີກ. ສຳລັບຄຣິສຕຽນກໍເຊັ່ນດຽວກັນ ເຮົາທັງຫລາຍໄດ້ຮັບການປົດປ່ອຍຈາກຊາຕານ ແລະຄວາມຊົ່ວຂອງໂລກແລ້ວ ໂດຍພຣະໂລຫິດຂອງພຣະເຢຊູ ກໍຢ່າປະມາດລະເລີຍ ເພື່ອຈະບໍ່ຈິບຫາຍອີກເມື່ອມານໂຈມຕີ.

<u>ລໍຄອຍດ້ວຍໃຈຈົດຈໍ່</u> (5:4-11).

ເນື່ອງຈາກວ່າວັນເວລາການສະເດັດມາຂອງພຣະເຢຊູຄຣິດບໍ່ມີໃຜຮູ້ແນ່ນອນ ແຕ່ຮູ້ໄດ້ວ່າເພິ່ນຈະມາເໝືອນຂະໂມຍຊຶ່ງໝາຍຄວາມວ່າ ອາດຈະມາກາງເວັນຫລືກາງຄືນສຸດແລ້ວແຕ່ເວລາຂອງພຣະອົງ ແລະກໍບໍ່ແມ່ນໜ້າທີ່ຜູ້ໃດຜູ້ນຶ່ງຈະຮູ້ເຣື່ອງວັນເວລາ ແຕ່ເຮົາມີໜ້າທີ່ເຝົ້າຣະວັງ. *"ພວກເຈົ້າບໍ່ໄດ້ຢູ່ ໃນຄວາມມືດແລ້ວ"* (ຂໍ້ 4). ມີຄວາມໝາຍວ່າຈິດວິນ ຍານຂອງທ່ານໄດ້ຮັບຄວາມສວ່າງແລ້ວແລະຮູ້ແລ້ວວ່າພຣະເຢຊູເປັນ ພຣະເຈົ້າທັງຮູ້ວ່າພຣະອົງຈະສເດັດມາເພື່ອຕັດສິນລົງໂທດ ແລະຮັບເອົາຜູ້ທີ່ເຊື່ອໃນພຣະອົງໄປຢູ່ກັບພຣະອົງ *"ເພື່ອ ວ່າເຮົາຢູ່ທີ່ໃດທ່ານຈະຢູ່ຢ່າງນັ້ນເໝືອນກັນ"* (ຢຮ 14: 3). ດັ່ງນັ້ນເມື່ອພວກທ່ານຢູ່ຝ່າຍຄວາມສວ່າງກໍສົມຄວນຈະຮູ້ ວ່າອັນໃດດີ ແລະອັນໃດຊົ່ວແລະຄົນທີ່ຢູ່ໃນຄວາມສວ່າງຈະປະຕິເສດບໍ່ເຮັດຄວາມຊົ່ວຮ້າຍ. *"ສນັ້ນແຫລະ, ຢ່າໃຫ້ເຮົາ ທັງຫລາຍຫລັບຢູ່ເໝືອນດັ່ງຄົນອື່ນແຕ່ໃຫ້ເຮົາເຝົ້າຣະວັງແລະຢ່າມົວເມົາ"* (ຂໍ້ 6). ເພາະວ່າຄົນທີ່ຫລັບຢູ່ບໍ່ຮູ້ຢ້ານກົວ ແລະບໍ່ຈັກວ່າໃຜຈະເຮັດຫຍັງໃຫ້ລາວ.

ເພື່ອເປັນການຕຽມພ້ອມ *"ຈົ່ງສຸບເອົາຄວາມເຊື່ອແລະຄວາມຮັກເປັນເຄື່ອງປ້ອງກັນໜ້າເອິກໄວ້ ແລະເອົາຄວາມໄວ້ໃຈວ່າຈະໄດ້ພົ້ນເປັນເຄື່ອງປ້ອງກັນຫົວໄວ້"* (ຂໍ້ 8). ເພື່ອຄວາມເຂົ້າໃຈກ່ຽວກັບເຣື່ອງເຄື່ອງປ້ອງກັນທີ່ໂປໂລໄດ້ກ່າວ ກະຣຸນາອ່ານ ເອເຟໂຊ 6:10. ເພື່ອເຮົາຈະບໍ່ຫລັບເໝືອນຄົນອື່ນດັ່ງທີ່ໂປໂລກ່າວ *"ຢ່າໃຫ້ພວກເຮົາທັງຫລາຍຫລັບຢູ່ເໝືອນດັ່ງຄົນອື່ນ ແຕ່ໃຫ້ເຮົາເຝົ້າຣະວັງແລະຢ່າມົວເມົາ"* (ຂໍ້ 6). ໝາຍຄວາມວ່າຢ່າລະເລີຍໃຫ້ເອົາໃຈໃສ່ຫລືຢ່າປະມາດຕໍ່ສິ່ງໃດ ຈົ່ງຕັ້ງໃຈຄອຍຖ້າພຣະເຢຊູສເດັດມາ ເພາະຄົນທີ່ກຳລັງນອນຫລັບຢູ່ບໍ່ຮູ້ເຣື່ອງຂອງພຣະອົງ.

ຄຣິສຕຽນທຸກຄົນໄດ້ຮັບການສຶກສາເຣື່ອງການສເດັດມາຄັ້ງທີສອງມາຫລາຍຄັ້ງແລ້ວ ດັ່ງນັ້ນຄຣິສຕຽນຈຶ່ງບໍ່ຢູ່ໃນຄວາມມືດອີກຕໍ່ໄປ. ພວກເຂົາເຈົ້າຈະພາກັນຕັ້ງໃຈດ້ວຍຄວາມຣະມັດຣະວັງໂດຍເພິ່ງຣິດອຳນາດຂອງພຣະ ວິນຍານບໍຣິສຸດ. ຄຣິສຕຽນຈຶ່ງກາຍເປັນຜູ້ຕຽມພ້ອມສເມີໂດຍບໍ່ຫວັ່ນກົວຕໍ່ອຸປສັກຂວາງໜ້າ. ໂບດທຸກໂບດ ແລະຄຣິສຕຽນທຸກຄົນຕ່າງກໍເລົ້າໂລມໃຈກັນເພື່ອຊ່ວຍໃຫ້ຜູ້ອື່ນຕຽມພ້ອມທີ່ຈະໄປຢູ່ກັບພຣະເຢຊູຄຣິດໃນວັນນັ້ນ.

<u>ຄຳຖາມ</u>

1. ທ່ານມີວິທີທີ່ດີຈະເລົ້າໂລມໃຈຜູ່ທີ່ເສັຽຄົນຮັກໄປຢູ່ກັບພຣະເຈົ້າຢ່າງໃດ?

2. ທ່ານຈະເອົາເຣື່ອງການລັບຕາລາໂລກໄປເລົ້າໂລມໃຈຄອບຄົວທີ່ເສັຽຊີວິດຢ່າງໃດແດ່?

3. ເປັນຫຍັງການຕາຍຈຶ່ງບໍ່ແມ່ນການສິ້ນສຸດ ແຕ່ແມ່ນການເລີ່ມຕົ້ນ?

4. ມີໃຜແດ່ຮູ້ຈັກວັນເວລາການສເດັດຄືນມາຄັ້ງທີສອງຂອງພຣະເຢຊູຢ່າງແນ່ນອນ?

5. ຕັ້ງໃຈລໍຄອຍ ໝາຍຄວາມວ່າແນວໃດ?

# ບົດຮຽນທີ 13
# ການລ້ຽງຊີບຂອງຜູ້ເຊື່ອ

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຂ ເທຊະໂລນີກ 3:6-13
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ຂ ເທຊະໂລນີກ 3:6-13
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າການເຮັດການຫາລ້ຽງຊີບເປັນໜ້າທີ່ຂອງເຮົາ.
ຄຳຖາມເພື່ອການສຳຫລວດ: ເຮັດແນວໃດເຮົາຈຶ່ງຈະບໍ່ໄດ້ແກ່ນເປືອງຜູ້ອື່ນ.
ຈຸດປະສົງຂອງບົດຮຽນນີ້: ເພື່ອສອນໃຫ້ຮູ້ວ່າການເຮັດການກໍເປັນພິຍານວ່າບໍ່ເປັນຄົນຂີ້ຄ້ານ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

ໃນບັນດາພວກອາຈານ ແລະສາສນາຈານໄດ້ມີຄວາມຄິດເຫັນຕ່າງກັນກ່ຽວກັບເຣື່ອງການຮັບໃຊ້ຕົນເອງເປັນແບບຢ່າງແກ່ຄຣິສຕຽນທົ່ວໄປ. ລາງຄົນກໍໄດ້ບອກພີ່ນ້ອງໃນຄຣິສຕຈັກວ່າ ການມາໂບດບໍ່ແມ່ນມາຫາອາຈານແລະຢ່າພະຍາຍາມເບິ່ງອາຈານເປັນຕົວຢ່າງ ເພາະຢ້ານວ່າວັນນຶ່ງຂ້າງໜ້າຫາກມີອັນເປັນໄປໃນຊີວິດອາຈານແລ້ວທ່ານຈະຜິດຫວັງ ດ້ວຍເຫດນີ້ອາຈານຜູ້ນີ້ຈຶ່ງຂໍໃຫ້ເບິ່ງພຣະເຢຊູເປັນຕົວຢ່າງ ແລະເອົາແບບຢ່າງສາວົກຂອງພຣະອົງ.

ສ່ວນອາຈານ ແລະສາສນາຈານລາງຄົນມີຄຳເຫັນວ່າ ການເປັນຜູ້ນຳຈຳຕ້ອງເປັນແບບຢ່າງແກ່ສະມາຊິກທົ່ວໄປ, ຫາກຜູ້ນຳບໍ່ສາມາດເປັນແບບຢ່າງແລ້ວຜູ້ນຳນັ້ນກໍບໍ່ສົມຄວນທີ່ຈະເປັນຜູ້ນຳ. ສຳລັບໂປໂລມີຄວາມເຫັນຢ່າງດຽວກັນກັບບັນດາອາຈານ ແລະສາສນາຈານກຸ່ມທີສອງນີ້. ໂປໂລຍັງບອກອີກວ່າເພິ່ນເຮັດການກິນໂດຍບໍ່ໄດ້ແກ່ນອາຫານການກິນກັບໃຜ ດ້ວຍວ່າໂປໂລເຮັດການງານດ້ວຍມືເພິ່ນເພື່ອລ້ຽງຊີບ. ດ້ວຍເຫດນີ້ຄຳເຫັນອັນແຂງແຮງຂອງໂປໂລແມ່ນໃຫ້ແຕ່ລະຄົນເຮັດການ ແລະໃຫ້ຫລີກເວັ້ນຈາກທຸກຄົນທີ່ບໍ່ຢູ່ໃນຄຳສອນທີ່ໄດ້ຮຽນມາແລ້ວ.

ຄົນບໍ່ມລະບຽບ (3:6)

"*ພີ່ນ້ອງທັງຫລາຍເອີຍ, ພວກເຮົາສັ່ງເຈົ້າທັງຫລາຍໃນພຣະນາມຂອງພຣະເຢຊູຄຣິດເຈົ້າວ່າ ຈົ່ງຜີກອອກຈາກພີ່ນ້ອງທຸກຄົນທີ່ດຳເນີນຊີວິດນອກລະບຽບ ແລະບໍ່ເຮັດຕາມຄຳສອນທີ່ສືບໆມາ*" (ຂໍ້ 6). ນີ້ເປັນຄຳເວົ້າທີ່ຮຸນແຮງທີ່ສຸດ ດ້ວຍວ່າໂປໂລເອງຢາກສັ່ງສອນຄົນຂີ້ຄ້ານ ແລະຄົນທີ່ບໍ່ຟັງຄວາມຜູ້ນຳຄຣິສຕະຈັກ. ໂປໂລໄດ້ບອກຄົນທັງຫລາຍທີ່ຢູ່ໃນຣະບຽບຜີກຕົວອອກຫ່າງຈາກຄົນທີ່ບໍ່ຢູ່ໃນຣະບຽບ ເລີ້ມຕົ້ນຈາກຄົນຂີ້ຄ້ານຈົນເຖິງຄົນບໍ່ຟັງຄວາມ. ຫາກຄຣິສຕຽນບໍ່ປະຕິບັດຕາມຄຳສັ່ງພຣະເຈົ້າ ແລ້ວຍັງປະຕິເສດບັນດາພວກຜູ້ນຳໃນຄຣິສຕະຈັກແລ້ວຜູ້ນັ້ນຈະຟັງໃຜ? ການຜີກຕົວຫ່າງບໍ່ໄດ້ໝາຍຄວາມວ່າປ່ອຍປະລາວໃຫ້ຕາຍໃນຄວາມຜິດບາບ ແຕ່ເປັນການບອກໃຫ້ຮູ້ວ່າລາວໄດ້ເຮັດຜິດໄປແລ້ວ ບໍ່ສົມຄວນທີ່ຈະໄດ້ຮັບກຽດຈາກພີ່ນ້ອງ ຈົນກວ່າຄົນນັ້ນຈະກັບໃຈໃຫມ່ແລ້ວຈຶ່ງຍອມຮັບຄົນນັ້ນອີກ.

ຄຣິສຕຽນທີ່ເທຊະໂລນິກຫລາຍຄົນກໍບໍ່ເຮັດການງານ, ຫລາຍຄົນກໍບໍ່ຢູ່ໃນລະບຽບໃນການເປັນຄຣິສຕຽນ ຢາກເຮັດຫຍັງກໍເຮັດຕາມໃຈຊຶ່ງຜິດຕໍ່ນໍ້າພຣະທັຍພຣະເຈົ້າແລະຍັງເປັນການຜິດຕໍ່ຄຣິສຕະຈັກອີກ. ດ້ວຍວ່າພຣະເຈົ້າໄດ້ເອີ້ນຄຣິສຕຽນທັງຫລາຍໃຫ້ເປັນຄົນມີລະບຽບວິໄນໆການດຳຣົງຊີວິດປະຈຳວັນ ໃນທຸກສະຖານທີ່ເພື່ອເປັນແບບຢ່າງສຳລັບຜູ້ບໍ່ເຊື່ອ ເມື່ອເຂົາເຫັນແລ້ວກໍມີໃຈຢາກເປັນຄຣິສຕຽນເຫມືອນກັບພວກເຮົາ, ເມື່ອຄຣິສຕຽນບໍ່ຢູ່ໃນຣະບຽບໂປໂລຈຶ່ງສັ່ງຢ່າງແຂງແຮງຢ່າພົວພັນກັບຄົນນອກລະບຽບ ເພາະລາວບໍ່ເປັນພິຍານທີ່ດີ, ແຕ່ບໍ່ໄດ້ໝາຍຄວາມວ່າບໍ່ໃຫ້ພົວພັນກັບຄົນທີ່ບໍ່ເຊື່ອ.

<u>ໃຊ້ຊີວິດເປັນຕົວຢ່າງ</u> (3:7-9)

ໂປໂລເປັນນັກສາສນາທູດ Missionary ຕົວຢ່າງແກ່ພວກສາສນາທູດຕັ້ງແຕ່ເວລານັ້ນຈົນເຖິງທຸກມື້ນີ້. ດ້ວຍເຫດນີ້ພວກສາສນາທູດຕ່າງໆຈຶ່ງບໍ່ຂໍໃຫ້ຄົນເຊື່ອໃຫມ່ເຮັດສິ່ງໃດທີ່ເຂົາເຈົ້າບໍ່ເຮັດ. ໂປໂລກ່າວວ່າ "*ເຫດວ່າເຈົ້າທັງຫລາຍກໍຮູ້ຢູ່ແລ້ວວ່າ ຈຳຕ້ອງເອົາແບບຢ່າງຂອງເຮົາ ເມື່ອເຮົາຢູ່ໃນທ່າມກາງພວກເຈົ້າເຮົາບໍ່ໄດ້ຢູ່ນອກລະບຽບ ເຮົາບໍ່ໄດ້ແກ່ນອາຫານການກິນກັບໃຜ ແຕ່ເຮົາໄດ້ອອກເຫື່ອແຮງເຮັດການດ້ວຍການໝັກໝ່ວງທັງກາງວັນແລະກາງຄືນເພື່ອບໍ່ໃຫ້ເປັນພາຣະອັນໜັກແກ່ຜູ້ໃດໃນພວກເຈົ້າ* "(ຂໍ້ 7-8). ນີ້ເປັນການສແດງອອກຄວາມເຊື່ອອັນເຂັ້ມແຂງຂອງໂປໂລທີ່ເຮັດວຽກການເພື່ອຫາລ້ຽງຊີບໃນການປະກາດຂ່າວປະເສີດ, ໂປໂລໄປປະກາດທຸກແຫ່ງໂດຍບໍ່ໃຫ້ເປັນພາຣະໃຫ້ຜູ້ໃດໃນການລ້ຽງເຂົ້າປາອາຫານ. ທີ່ໂປໂລກ່າວເຊັ່ນນີ້ເພື່ອສອນຄົນຂີ້ຄ້ານໃຫ້ມີໃຈຢາກເຮັດການເພື່ອລ້ຽງຊີວິດຕົນເອງ.

"*ການເປັນດັ່ງນີ້ບໍ່ແມ່ນເພາະເຮົາບໍ່ມີສິດ ແຕ່ວ່າເພື່ອເປັນຕົວຢ່າງໃຫ້ເຈົ້າທັງຫລາຍເພື່ອພວກເຈົ້າຈະໄດ້ເອົາແບບຢ່າງຂອງເຮົາ* "(ຂໍ້ 9). ມີຄວາມໝາຍວ່າ ທີ່ທ່ານເຮັດການເພື່ອລ້ຽງຊີບໃນການປະກາດຂ່າວປະເສີດບໍ່ແມ່ນເພິ່ນບໍ່ມີສິດທີ່ຈະສັ່ງໃຫ້ພີ່ນ້ອງເອົາເຂົ້າປາອາຫານມາໃຫ້ເພິ່ນໃນຂະນະທີ່ປະກາດຂ່າວປະເສີດ ແຕ່ເພິ່ນບໍ່ໄດ້ເຮັດແນວນັ້ນເພາະເພິ່ນຢາກເຮັດເປັນຕົວຢ່າງແກ່ຄຣິສຕຽນທັງຫລາຍ ບໍ່ໃຫ້ກຽດຄ້ານໃນການທຳມາຫາກິນ. "*ເຮົາບໍ່ມີສິດທີ່ຈະກິນແລະດື່ມຫລື ເຮົາບໍ່ມີສິດທີ່ຈະພາເມັຽທີ່ເປັນຄຣິສຕຽນໄປມາດ້ວຍກັນເໝືອນຢ່າງອັຄສາວົກຄົນອື່ນ ແລະເໝືອນພວກພີ່ນ້ອງຂອງອົງພຣະຜູ້ເປັນເຈົ້າ ແລະເໝືອນຢ່າງເກຟານັ້ນ.ຈຳເພາະແຕ່ເຮົາກັບບາຣະນາບາເທົ່ານັ້ນຫລື ທີ່ບໍ່ມີສິດຈະເລີກການລ້ຽງຊີບນັ້ນ ແມ່ນໃຜທີ່ຮັບໃຊ້ເປັນທະຫານຕ້ອງກິນອາຫານຂອງຕົນເອງ ຜູ້ທີ່ເຮັດສວນອະງຸ່ນແລ້ວບໍ່ໄດ້ກິນຜົນຈາກສວນນັ້ນ ຫລືຜູ້ໃດທີ່ລ້ຽງສັດແລ້ວບໍ່ໄດ້ກິນນົມຈາກຝູງສັດນັ້ນ*" (1ໂກຣິນໂທ 8: 4-6). ຄວາມຈິງແລ້ວໂປໂລມີ ສິດທີ່ຈະລ້ຽງຕົວເອງດ້ວຍຂ່າວປະເສີດ ແຕ່ທ່ານເລືອກເຮັດການດ້ວຍມືຂອງຕົນເອງເພື່ອເປັນຕົວຢ່າງເທົ່ານັ້ນ.
ພຣະເຢຊູຊົງກ່າວວ່າ "*ຢ່າເອົາຖົງໄປຕາມທາງ, ຫລືເສື້ອສອງໂຕ, ຫລືເກີບ, ຫລືໄມ້ເທົ້າ ເພາະວ່າຄົນງານກໍສົມຄວນຈະໄດ້ຮັບອາຫານກິນ* "(ມັດທາຍ 10:10). ຊຶ່ງໝາຍຄວາມວ່າຜູ້ຮັບໃຊ້ພຣະເຈົ້າໄປຮອດເຮືອນໃດ ເຮືອນນັ້ນກໍສົມຄວນຈະໃຫ້ອາຫານການກິນປະຈຳວັນເພື່ອເພິ່ນຈະໄດ້ມີແຮງໃນການເທສນາສັ່ງສອນ. ອີກປະການນຶ່ງພວກສາສນາຈານປະຈຳໂບດເວລານີ້ບໍ່ແມ່ນແຕ່ລ້ຽງພີ່ນ້ອງແຕ່ພຣະທັມພຣະເຈົ້າຢ່າງດຽວ ພວກເພິ່ນຍັງເປັນຜູ້ຊ່ອຍແກ້ໄຂບັນຫາແລະວຽກງານຕ່າງໆຂອງສະມາຊິກ ແລະບໍ່ແມ່ນສະມາຊິກອີກດ້ວຍ.

<u>ຂີ້ຄ້ານຢ່າກິນ</u> (3:10-13).

"*ເພາະວ່າເມື່ອເຮົາຍັງຢູ່ນຳພວກເຈົ້າ ເຮົາໄດ້ສັ່ງເຈົ້າແລ້ວວ່າ ຖ້າຜູ້ໃດບໍ່ມີນໍ້າໃຈຢາກເຮັດການກໍຢ່າໃຫ້ຜູ້ນັ້ນກິນດ້ວຍວ່າພວກເຮົາໄດ້ຍິນຂ່າວວ່າ ມີບາງຄົນໃນພວກເຈົ້າຢູ່ນອກລະບຽບບໍ່ເຮັດການຫຍັງ ແຕ່ທຽວຫຍຸ້ງກ່ຽວກັບກິດທຸຣະຂອງຄົນອື່ນ. ໃນພຣະນາມພຣະເຢຊູຄຣິດເຈົ້າພວກເຮົາຂໍສັ່ງ ແລະເຕືອນສະຕິຄົນທັງຫລາຍທີ່ເຮັດຢ່າງນັ້ນວ່າ ໃຫ້ເຂົາ*

*ເຮັດການດ້ວຍໃຈສງົບແລະກິນອາຫານຂອງຕົນເອງ* " (ຂໍ້ 10-12). ເຣື່ອງຄົນຂີ້ຄ້ານບໍ່ຕ້ອງກິນ ເປັນກົດເກນທົ່ວໂລກ ເພາະບໍ່ມີໃຜມັກຄົນຂີ້ຄ້ານຖ້າກິນແຕ່ນຳໝູ່ ແລ້ວກໍທຽວຂຶ້ນເຮືອນສູງລົງເຮືອນຕ່ຳ ເພື່ອຊອກຫຍຸ້ງກັບກິຈການຄົນອື່ນ. ໂປໂລອາດຈະໝາຍຄວາມວ່າ ຈື່ໄດ້ບໍ່ເວລາທີ່ເຮົາຢູ່ນຳພວກເຈົ້າ ເຮົາໄດ້ສັ່ງພວກເຈົ້າວ່າຖ້າຜູ້ໃດບໍ່ມີນ້ຳໃຈຢາກເຮັດການກໍຢ່າໃຫ້ຜູ້ນັ້ນກິນ? ເວລານີ້ໂປໂລຍັງສັ່ງຢ່າງດຽວກັນ ແຖມຍັງບອກອີກວ່າໃນພຣະນາມພຣະເຢຊູຄຣິດເຈົ້າພວກເຮົາຂໍສັ່ງ ໃຫ້ຄົນຢ່າງນັ້ນເຮັດການ ແລະຕ້ອງເຮັດການດ້ວຍໃຈສງົບ ແລະກິນອາຫານຕົນເອງ. ດັ່ງນັ້ນຫາກຄົນຂີ້ຄ້ານເປັນຄົນທີ່ເຊື່ອໃນພຣະເຢຊູແທ້ລາວຈະຕ້ອງເຮັດການ ເພາະໂປໂລໄດ້ ສັ່ງໃນນາມພຣະເຢຊູຄຣິດ.

"*ແຕ່ພີ່ນ້ອງເອີຍ, ເຈົ້າທັງຫລາຍຢ່າອ່ອນກຳລັງໃຈທີ່ຈະເຮັດດີ* " (ຂໍ້ 13). ເປັນຄຳເລົ້າໂລມຈາກໂປໂລຕໍ່ທຸກຄົນທີ່ເຮັດການດີ ແລະເລົ້າໃຈຜູ້ຂີ້ຄ້ານໃຫ້ເຮັດການດີຄືການເຮັດການຫາລ້ຽງຊີບຕົນເອງ. ການເຮັດດີໃນຕອນນີ້ມີຄວາມໝາຍວ່າການ ເຮັດການຫາລ້ຽງ ຊີບຕົນເອງຖືວ່າເປັນການເຮັດດີ ເພາະຈະບໍ່ໄດ້ເປັນພາຣະໜັກແກ່ຜູ້ອື່ນ.

<u>ຄຳຖາມ</u>

1. ຈົ່ງຜິກໜີຈາກຄົນທີ່ບໍ່ຢູ່ໃນລະບຽບທີ່ໂປໂລກ່າວນັ້ນໝາຍຄວາມວ່າຢ່າງໃດ?

2. ພວກສາສນາທູດຣຽນເອົາແບບຢ່າງຂອງໃຜ? ແລະຢ່າງໃດ?

3. ໂປໂລມີສິດທີ່ຈະໃຫ້ພີ່ນ້ອງລ້ຽງແຕ່ລະວັນ ແຕ່ເປັນຫຍັງທ່ານຈຶ່ງບໍ່ເຮັດ?

4. ເປັນຫຍັງໂປໂລຈຶ່ງເວົ້າວ່າ ຂີ້ຄ້ານຢ່າກິນ?

5. ໂປໂລໄດ້ສັ່ງຄົນຂີ້ຄ້ານໃຫ້ເຮັດຫຍັງ?